UNITED NATIONS
LAO PDR

# ພັດທະນາລະບົບ ການປົກປ້ອງ ສັງຄົມແຫ່ງຊາດ ເພື່ອຮັບມືກັບວິກິດການສຸກເສີນ ແລະ ການແຜ່ລະບາດ ຂອງເຊື້ອພະຍາດອັກເສບປອດ ຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19 ໃນ ສປປ ລາວ

ບົດແນະນຳດ້ານນະໂຍບາຍ ສຳລັບ ລັດຖະບານແຫ່ງ ສປປ ລາວ, ສະເໜີໂດຍ ອົງການສະຫະປະຊາດປະຈຳ ສປປ ລາວ

**2020**

UNITED NATIONS
LAO PDR

ບົດແນະນຳດ້ານນະໂຍບາຍສະບັບນີ້ ຈະຊ່ວຍສະໜັບສະໜູນຄວາມພະຍາຍາມ ຂອງລັດຖະບານແຫ່ງ ສປປ ລາວ ໃນການຮັບມືກັບຜົນກະທົບຕໍ່ສັງຄົມ ແລະ ເສດຖະກິດ ຂອງປະຊາຊົນ ແລະ ແຮງງານຂອງລາວ ຈາກການແຜ່ລະບາດຂອງເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19.

ບົດແນະນຳສະບັບນີ້ ສະເໜີຂໍ້ແນະນຳທາງເລືອກນະໂຍບາຍ ດ້ານການປົກປ້ອງສັງຄົມ, ຊຶ່ງປະກອບສ່ວນສຳຄັນເຂົ້າໃນການພັດທະນາລະບົບການປົກປ້ອງສັງຄົມແຫ່ງຊາດ ເພື່ອການຮັບມືກັບວິກິດການສຸກເສີນ. ຂໍ້ສະເໜີແນະນຳ ສາມາດຊ່ວຍໃນການຮັບມືກັບຜົນກະທົບຈາກການແຜ່ລະບາດ ຂອງພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19, ຊ່ວຍສະໜັບສະໜູນດ້ານການຟື້ນຟູດ້ານເສດຖະກິດ ແລະ ການຮັບມືຕໍ່ວິກິດການສຸກເສີນທີ່ອາດເກີດຂຶ້ນໃນອະນາຄົດ.

# CONTENTS


ສະຫຼູບຫຍໍ້.......... 4

ຜົນກະທົບຂອງການແຜ່ລະບາດ ຂອງ COVID-19 ຕໍ່ສັງຄົມ ແລະ ເສດຖະກິດ ຂອງ ສປປ ລາວ. .......... 8

ຍ້ອນຫຍັງ ການປົກປ້ອງສັງຄົມ ຈຶ່ງສຳຄັນ ແລະ ຈຳເປັນ ໃນການຮັບມື ກັບວິກິດການແຜ່ລະບາດຂອງ COVID-19?..........12

ວິທີການປະຕິບັດທີ່ເສີມສ້າງລະບົບ ໃນການຮັບມືກັບວິກິດການສຸກເສີນ ..........14

ການຄຸ້ມຄອງ ແລະ ຄວາມຍືນຍົງຂອງແຫຼ່ງທຶນສະໜັບສະໜູນ ..........17

ການກຽມຄວາມພ້ອມໃນການໃຫ້ອຸດໜູນປົກປ້ອງສັງຄົມ ..........19

ການປົກປ້ອງສັງຄົມໃນ ສປປ ລາວ..........22

ສະເໜີທາງເລືອກດ້ານນະໂຍບາຍ..........27

ຄິດໄລ່ຕົ້ນທຶນ ສໍາລັບ ຈັດຕັ້ງປະຕິບັດແຕ່ລະທາງເລືອກນະໂຍບາຍ ..........30

ຂໍ້ມູນສຳຄັນ..........33

ເອກກະສານຊ້ອນທ້າຍ: ມາດຕະການປົກປ້ອງສັງຄົມທີ່ບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ ຈັດຕັ້ງປະຕິບັດ..........34

# ສະຫຼຸບຫຍໍ້

ດັ່ງທີ່ເຮົາຮັບຮູ້ວ່າ ນອກເໜືອຈາກການສູນເສຍອັນມະຫາສານຂອງຊີວິດມະນຸດແລ້ວ, ການແຜ່ລະບາດຂອງເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19 ຍັງສົ່ງຜົນກະທົບໜັກໜ່ວງຫຼາຍດ້ານ ເປັນຕົ້ນ: ອັດຕາຄວາມທຸກຍາກ ແລະ ຄວາມບໍ່ເທົ່າທຽມເພີ່ມຂຶ້ນ, ກຸ່ມຄົນທີ່ດ້ອຍໂອກາດຢູ່ແລ້ວ ຍິ່ງມີຄວາມບອບບາງຫຼາຍຂຶ້ນ. ໃນທົ່ວໂລກ, ການແຜ່ລະບາດຂອງ COVID-19 ໄດ້ສົ່ງຜົນກະທົບໜັກທີ່ສຸດຕໍ່ຜູ້ດ້ອຍໂອກາດ ທັງທາງດ້ານສັງຄົມ ແລະ ເສດຖະກິດ, ເນື່ອງຈາກເຂົາເຈົ້າມີຂໍ້ຈຳກັດທາງຍຸດທະສາດໃນການຮັບມືກັບຜົນກະທົບດັ່ງກ່າວ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງມີນະໂຍບາຍການຮັບມືທີ່ເຂັ້ມແຂງ ແລະ ມີການປະສານງານທີ່ດີ.

ການປະຕິບັດມາດຕະການຫຼາຍດ້ານທັງພາຍໃນ ແລະ ສາກົນເພື່ອຄວບຄຸມການແຜ່ລະບາດຂອງ COVID-19 ໄດ້ສົ່ງຜົນກະທົບຕໍ່ສະພາບເສດຖະກິດຂອງປະເທດ. ໃນປີ 2020, ເສດຖະກິດ ແລະ ການມີວຽກເຮັດງານທຳໄດ້ຖືກກະທົບຂ້ອນຂ້າງຮຸນແຮງ, ແລະ ວິກິດການນີ້ອາດສືບຕໍ່ສົ່ງຜົນໄລຍະຍາວ, ໂດຍສະເພາະ ຕໍ່ຂະແໜງການທ່ອງທ່ຽວ, ການຜະລິດ ແລະ ການເກັບລາຍຮັບຂອງລັດທີ່ຫຼຸດລົງ. ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ ຫຼື ຈີດີພີ ຄາດວ່າຈະຫຼຸດລົງຫຼາຍ ພາຍໃນປີ 2020. ບາງການວິເຄາະ ໄດ້ຄາດຄະເນວ່າ ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ ຫຼື ຈີດີພີ ຈະສືບຕໍ່ກະທົບຮອດປີ 2021. ເພື່ອແກ້ໄຂຄວາມທ້າທາຍດ້ານສຸຂະພາບ, ລາຍຮັບ ແລະ ການມີວຽກເຮັດງານທຳ, ແລະ ເພື່ອສະໜັບສະໜູນຊີວິດການເປັນຢູ່, ພ້ອມທັງແກ້ໄຂຜົນກະທົບດ້ານເສດຖະກິດ, ຈຶ່ງຈຳເປັນຕ້ອງມີມາດຕະການປະຕິບັດການປົກປ້ອງສັງຄົມທີ່ດີ.

ລະບົບການປົກປ້ອງສັງຄົມທີ່ກຳລັງຈັດຕັ້ງປະຕິບັດໃນປະຈຸບັນ ຂອງ ສປປ ລາວ ຍັງບໍ່ທັນປົກປ້ອງປະຊາຊົນຈຳນວນຫຼາຍ. ແຕ່ໃນຊຸມປີຜ່ານມາ ວຽກງານນີ້ກໍ່ໄດ້ຮັບການພັດທະນາທີ່ສຳຄັນ ແລະ ມີຄວາມຄືບໜ້າຫຼາຍດ້ານ ເປັນຕົ້ນ ລະບົບປະກັນສຸຂະພາບແຫ່ງຊາດໄດ້ຂະຫຍາຍຂອບເຂດການປົກຄຸມຢ່າງກ້ວາງຂວາງ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີປະຊາຊົນຈຳນວຍຫຼວງຫຼາຍ ທີ່ບໍ່ໄດ້ຮັບການປົກປ້ອງຈາກການອຸດໜູນຄ້ຳປະກັນລາຍຮັບ, ເປັນຕົ້ນແມ່ນແຮງງານນອກລະບົບ ແລະ ສະມາຊິກໃນຄົວເຮືອນກະສິກຳ ຊຶ່ງແຮງງານກຸ່ມນີ້ ເປັນກຸ່ມທີ່ມີລາຍຮັບຕ່ຳ, ບໍ່ມີຄວາມໝັ້ນຄົງ, ບໍ່ມີຫຼັກຄ້ຳປະກັນລາຍໄດ້, ເງື່ອນໄຂການເຮັດວຽກບໍ່ດີ, ແລະ ເຂົາເຈົ້າບໍ່ໄດ້ຮັບການປົກປ້ອງສັງຄົມ ໃນເວລາສູນເສຍລາຍໄດ້ ຫຼື ເວລາເຈັບປ່ວຍ.

ຄົວເຮືອນຈຳນວນຫຼາຍ ອີງໃສ່ສະມາຊິກຄົວເຮືອນຊອກຫາວຽກເຮັດງານທຳ ທີ່ມີຄ່າຕອບແທນສູງໃນຕົວເມືອງ ແລະ ໃນເຂດທີ່ເສດຖະກິດທີ່ມີການພັດທະນາ. ເມື່ອມີການແຜ່ລະບາດຂອງ COVID-19, ຕ່ອງໂສ້ການຜະລິດ ແລະ ສະໜອງຂອງໂລກ ໄດ້ຮັບຜົນກະທົບໂດຍກົງ ເຮັດໃຫ້ມີການຢຸດສະຫງັດ, ຊະລໍໂຕ ແລະ ສົ່ງຜົນກະທົບຕໍ່ລາຍໄດ້ຂອງແຮງງານ ແລະ ຂອງຄົວເຮືອນ. ນອກຈາກນີ້, ພາຍຫຼັງວິກິດການ COVID-19, ຄາດວ່າຄວາມຕ້ອງການຂອງຕະຫຼາດກໍ່ຈະຫຼຸດລົງ ຖ້າສົມທຽບກັບທີ່ຜ່ານມາ (ຢ່າງໜ້ອຍ) ໃນໄລຍະເລີ່ມຕົ້ນ, ພ້ອມນີ້ ຕາຂ່າຍຕ່ອງໂສ້ຂອງການຜະລິດ ແລະ ການສະໜອງທັງໝົດໃນພາກພື້ນ ແລະ ສາກົນ ກໍ່ຈະມີການປ່ຽນແປງເຊັ່ນກັນ.

ຜົນກະທົບທັງໝົດນີ້ ເຫັນໄດ້ຊັດເຈນ ຈາກຫຼາຍຄົວເຮືອນຂອງປະຊາຊົນລາວເອື່ອຍອີງລາຍໄດ້ ຈາກການເຄື່ອນຍ້າຍແຮງງານຂອງສະມາຊິກຄົວເຮືອນ. ແຮງງານເຄື່ອນຍ້າຍຄົນລາວສ່ວນຫຼາຍໃນປະເທດໄທ ເຮັດວຽກໄດ້ຮັບຄ່າຕອບແທນຕ່ຳ ໃນຂະແໜງການທ່ອງທ່ຽວ, ການບໍລິການ, ວຽກຮັບໃຊ້ຄົວເຮືອນ, ກະສິກຳ ແລະ ຂະແໜງອຸດສະຫະກຳ ແລະ ສ່ວນຫຼາຍບໍ່ສາມາດຮັບມືກັບ

UNITED NATIONS
LAO PDR

ຜົນກະທົບຂອງວິກິດການຄັ້ງນີ້ໄດ້. ມາດຕະການໃນການປິດປະເທດຂອງໄທ ເຮັດໃຫ້ແຮງງານເຄື່ອນຍ້າຍຂອງລາວຫວ່າງງານຫຼາຍ, ສູນເສຍລາຍໄດ້ ແລະ ຕ້ອງລໍຖ້າກັບຄືນປະເທດໃນດ່ານສາກົນ.

ຜົນກະທົບຂອງ COVID-19 ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ສາມາດພັກດັນໃຫ້ຄົວເຮືອນ ຕົກສູ່ຄວາມທຸກຍາກ ແລະ ເຮັດໃຫ້ເດັກນ້ອຍ ແລະ ກຸ່ມໄວໜຸ່ມ, ໂດຍສະເພາະຈາກຄອບຄົວທຸກຍາກ ແລະ ຄອບຄົວຊົນເຜົ່າ ພົບກັບຄວາມຂາດເຂີນຫຼາຍດ້ານ ທີ່ສາມາດສົ່ງຜົນກະທົບໄລຍະຍາວ ຕໍ່ການພັດທະນາຜະລິດຕະພາບການຜະລິດ ແລະ ການພັດທະນາຄວາມອາດສາມາດດ້ານຊັບພະຍາກອນມະນຸດ. ນອກຈາກນີ້, ແມ່ຍິງ ກໍ່ເປັນກຸ່ມປະຊາກອນຈໍານວນຫຼາຍທີ່ທຸກຍາກ ແລະ ບອບບາງ ເພາະເຂົາເຈົ້າເຮັດວຽກຮັບຈ້າງທົ່ວໄປ, ວຽກບໍ່ມີຄວາມໝັ້ນຄົງ, ວຽກອັນຕະລາຍ ແລະ ເຮັດວຽກອິດສະລະ, ໂດຍສະເພາະເຮັດວຽກນອກລະບົບ ທີ່ບໍ່ມີການປົກປ້ອງສັງຄົມ. ການປິດໂຮງຮຽນຊົ່ວຄາວ ຍັງເຮັດໃຫ້ແມ່ຍິງຈໍານວນຫຼາຍຕ້ອງໄດ້ໃຊ້ເວລາດູແລເບິ່ງແຍງລູກ ເຮັດໃຫ້ມີຂໍ້ຈໍາກັດເພີ້ມຂຶ້ນໃນການສ້າງລາຍໄດ້.

ການຂະຫຍາຍການປົກຄຸມຂອງລະບົບປົກປ້ອງສັງຄົມ ຖືກຮັບຮູ້ເພີ້ມຂຶ້ນວ່າ ເປັນຍຸດທະສາດສໍາຄັນ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເພື່ອການເຕີບໂຕທີ່ມີສ່ວນຮ່ວມ. ການຈັດສັນງົບປະມານພາຍໃນເຂົ້າໃນການພັດທະນາ ແລະ ຂະຫຍາຍການປົກປ້ອງສັງຄົມ ເປັນຍຸດທະສາດທີ່ສໍາຄັນ ເປັນຕົ້ນ: ການໃຫ້ອຸດໜູນເບ້ຍລ້ຽງ ສາມາດຮັບປະກັນຄວາມຍືນຍົງ ແລະ ສາມາດຊ່ວຍເຫຼືອກຸ່ມຄົນ ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອທີ່ສຸດ. ພ້ອມນັ້ນ, ການປົກປ້ອງສັງຄົມ ຍັງສາມາດຊ່ວຍເຫຼືອສ້າງຄວາມໝັ້ນຄົງໃຫ້ກັບເສດຖະ ກິດ ແລະ ຄວາມໝັ້ນຄົງຂອງສັງຄົມໄດ້. ດັ່ງນັ້ນ, ຈິ່ງຮຽກຮ້ອງໃຫ້ມີມາດຕະການຮີບດ່ວນ ແລະ ນະໂຍບາຍພັດທະນາເສດຖະກິດ ແລະ ສັງຄົມທີ່ເຂັ້ມແຂງ ເພື່ອສາມາດສົ່ງຜົນທາງບວກຕໍ່ກັບເສດຖະກິດ ແລະ ສ້າງຄວາມໝັ້ນຄົງໃຫ້ກັບເສດຖະກິດ ແລະ ສັງຄົມ.

ສປປ ລາວ ໄດ້ຈັດຕັ້ງປະຕິບັດມາດຕະການສໍາຄັນຕ່າງໆ ໃນການຮັບມືກັບການແຜ່ລະບາດຄັ້ງນີ້ ເປັນຕົ້ນ ລັດຖະບານໄດ້ຈັດສັນງົບປະມານຈໍານວນ 10 ຕື້ກີບ (ປະມານ 1 ເປີເຊັນຂອງຈີດີພີ) ເຂົ້າໃນມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ລະບາດ. ໃນການຮັບມືກັບ ການກັບມາຂອງແຮງງານເຄືອນຍ້າຍລາວຈໍານວນຫຼາຍ, ລັດຖະບານກໍ່ໄດ້ສ້າງສູນກັກຕົວຊົ່ວຄາວຂຶ້ນ ໃນຂັ້ນແຂວງ ໂດຍສະເພາະ ໃນແຂວງທີ່ມີດ່ານສາກົນ. ລັດຖະບານປະຕິບັດນະໂຍບາຍການກວດ ແລະ ປິ່ນປົວບໍ່ເສຍຄ່າ ກັບຜູ້ທີ່ຕິດເຊື້ອ ຫຼື ຜູ້ທີ່ມີອາການ COVID-19. ນອກນີ້ ລັດຖະບານ ກໍ່ໄດ້ຝຶກອົບຮົມພະນັກງານແພດໝໍ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຈັດຊື້ອຸປະກອນເຄື່ອງມືການແພດ ແລະ ການປົກກັນ.

ລັດຖະບານ ຂອງ ສປປ ລາວ ມີແຜນຈັດຕັ້ງປະຕິບັດໂຄງການໃຫ້ອຸດໜູນເບ້ຍລ້ຽງແມ່ຖືພາ ແລະ ເດັກອາຍຸລຸ່ມ 3 ປີ ໃນເມືອງທຸກຍາກ. ອີງຕາມຍຸດທະສາດແຫ່ງຊາດວຽກງານວຽກງານປົກປ້ອງສັງຄົມຮອດປີ 2025, ໂຄງການດັ່ງກ່າວມີເປົ້າໝາຍຮັບປະກັນໃຫ້ເດັກນ້ອຍທີ່ມີອາຍຸລຸ່ມ 1.000 ວັນ ໄດ້ຮັບໂພຊະນາການທີ່ຈໍາເປັນ ຊຶ່ງສາມາດຊ່ວຍເຫຼືອຜູ້ທຸກຍາກທີ່ໄດ້ຮັບຜົນກະທົບຈາກ COVID-19. ການຈັດຕັ້ງປະຕິບັດມາດຕະການປົກປ້ອງສັງຄົມຮີບດ່ວນ ຄຽງຄູ່ກັບການໃຫ້ອຸດໜູນເບ້ຍລ້ຽງປະຈໍາເດືອນ ກັບແຮງງານນອກລະບົບ ຈະເຮັດໃຫ້ຜົນກະທົບທາງລົບຫຼຸດລົງ ແລະ ສາມາດປົກປ້ອງຜູ້ທີ່ຕ້ອງການໆຊ່ວຍເຫຼືອທີ່ສຸດໄດ້.

ການໃຫ້ອຸດໜູນຫວ່າງງານ ກໍ່ເປັນມາດຕະການສໍາຄັນໜຶ່ງ ທີ່ລັດຖະບານຈັດຕັ້ງປະຕິບັດ ເພື່ອສະໜັບສະໜູນຜູ້ທີ່ສູນເສຍວຽກເຮັດງານທໍາ. ແຕ່ການໃຫ້ອຸດໜູນຫວ່າງງານນີ້ ກວມເອົາແຕ່ແຮງງານໃນລະບົບເທົ່ານັ້ນ. ໜ້າເສຍດາຍທີ່ແຮງງານລາວສ່ວນໃຫຍ່ ທີ່ໄດ້ຮັບຜົນກະທົບ ເປັນແຮງງານທີ່ເຮັດວຽກໃນຂະແໜງການບໍ່ຖືກປົກຄຸມພາຍໃຕ້ກອງທຶນປະກັນສັງຄົມ ແລະ ບໍ່ມີການປົກປ້ອງໃດໆ.

ເອກະສານແນະນຳດ້ານນະໂຍບາຍສະບັບນີ້ ສະເໜີບາງທາງເລືອກການປົກປ້ອງສັງຄົມ ເພື່ອຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດຂອງ COVID-19 ຕໍ່ສັງຄົມ ແລະ ເສດຖະກິດຂອງປະຊາຊົນລາວ ແລະ ເພື່ອສະໜັບສະໜູນໃນການຟື້ນຟູເສດຖະກິດຂອງປະເທດ ຜົນກະທົບຂອງ COVID-19 ຕໍ່ສະພາບສັງຄົມ ແລະ ເສດຖະກິດ ຄາດວ່າຍັງຈະສືບຕໍ່ໄລຍະຍາວ, ຂໍ້ສະເໜີໃນເອກະສານສະບັບນີ້ ຕົ້ນຕໍ ແມ່ນອີງໃສ່ສະເພາະ ບັນດາໂຄງການ ແລະ ແຜນງານທີ່ກຳລັງຈັດຕັ້ງປະຕິບັດ ຫຼື ການສ້າງແຜນງານ ແລະ ໂຄງການທີ່ໄດ້ກຳນົດພາຍໃຕ້ບັນດາຈຸດປະສົງ ແລະ ຄາດໝາຍຂອງ "ຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ". ວິທີການແມ່ນສະເໜີໃຫ້ ນຳໃຊ້ມາດຕະການຮັບມືວິກິດການຄັ້ງນີ້ ໃຫ້ເປັນໂອກາດໃນການເສີມສ້າງ ແລະ ພັດທະນາແຜນງານທີ່ຈັດຕັ້ງປະຕິບັດຮັບມືໃນໄລຍະວິກິດການ ໃຫ້ສາມາດພັດທະນາເພີ່ມເຕີມໃຫ້ມີຄວາມເຂັ້ມແຂງໄລຍະຍາວ, ຫຼີກລ້ຽງການນຳໃຊ້ຊັບພະຍາກອນ ແລະ ງົບປະມານທີ່ມີຈຳກັດໃນການຈັດຕັ້ງປະຕິບັດວິທີການ ແລະ ແຜນການຊົ່ວຄາວ.

ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ສະເໜີແນະນຳນະໂຍບາຍເບື້ອງຕົ້ນ ດັ່ງລາຍລະອຽດລຸ່ມນີ້. ຈຸດປະສົງຂອງເອກະສານແນະນຳສະບັບນີ້ ພ້ອມທັງບັນດາທາງເລືອກດ້ານນະໂຍບາຍທີ່ສະເໜີ ເປັນພຽງບາດກ້າວທຳອິດ ເພື່ອເປັນພື້ນຖານໃນການປຶກສາຫາລືເພີ່ມເຕີມລະອຽດ. ທາງເລືອກດ້ານນະໂຍບາຍທີ່ສະເໜີ ບໍ່ແມ່ນການສະເໜີ ເພື່ອປ່ຽນແທນມາດຕະການສຳຄັນອື່ນໆ ທີມງານຂອງອົງການສະຫະປະຊາຊາດ ປະຈຳ ສປປ ລາວ ຮັບຮູ້ວ່າ ການປະຕິບັດນະໂຍບາຍຄຽງຄູ່ກັບມາດຕະການອື່ນໆ ຈຶ່ງສາມາດຮັບປະກັນບໍ່ປະຖິ້ມໃຜໄວ້ຂ້າງຫຼັງ.

ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ກຽມພ້ອມເຮັດວຽກຮ່ວມກັບລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາອື່ນໆທີ່ມີຄວາມສົນໃຈ ແລະ ພວກເຮົາພ້ອມໃຫ້ການສະໜັບສະໜູນດ້ານວິຊາການ ເພື່ອລົງເລິກບາງທາງເລືອກດ້ານນະໂຍບາຍທີ່ສະເໜີຂ້າງລຸ່ມນີ້. ຂໍ້ສະເໜີປະກອບດ້ວຍຕົ້ນທຶນທີ່ຄິດໄລ່ໄວ້ເບື້ອງຕົ້ນ. ທີມງານຂອງອົງການສະຫະປະຊາຊາດ ປະຈຳ ສປປ ລາວ ພ້ອມຈະປຶກສາຫາລືຮ່ວມກັບລັດຖະບານເພີ່ມເຕີມ ແລະ ປັບປຸງຂອບເຂດການຈັດຕັ້ງປະຕິບັດແຕ່ລະທາງເລືອກດ້ານນະໂຍບາຍທີ່ສະເໜີ ແລະ ພ້ອມໃນການສະໜັບສະໜູນລັດຖະບານ ເພື່ອລະດົມທຶນເຂົ້າໃນການຈັດຕັ້ງປະຕິບັດ.

| ຂໍ້ສະເໜີດ້ານນະໂຍບາຍ | ອຸດໜູນຄັ້ງດຽວ ຫຼື ຕໍ່ເນື່ອງ | ຮີບດ່ວນ, ໄລຍະກາງ ຫຼື ໄລຍະຍາວ |
|---|---|---|
| **ອຸດໜູນສະຫວັດດີການສັງຄົມ** | | |
| 1. ໃຫ້ອຸດໜູນເບ້ຍລ້ຽງແມ່ຖືພາ ແລະ ເດັກນ້ອຍ ອາຍຸ 0-2 ປີ, ເລີ້ມຕົ້ນຈາກເມືອງທຸກຍາກ ທີ່ຄັດເລືອກ ຫຼື ເມືອງທີ່ຖືກກະທົບໜັກໜ່ວງທີ່ສຸດ | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |
| 2. ຂະຫຍາຍໂຄງການອາຫານກາງເວັນໃນໂຮງຮຽນ ເພື່ອໃຫ້ເດັກ ແລະ ຄົວເຮືອນໄດ້ຮັບໂພຊະນາການທີ່ພຽງພໍ ແລະ ຂະຫຍາຍໂຄງການອອກໄປໃຫ້ໄດ້ຫຼາຍເມືອງ | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |
| 3. ປະເມີນຄວາມຕ້ອງການຂອງແຮງງານເຄື່ອນຍ້າຍ. ໃຫ້ອຸດໜູນເບ້ຍລ້ຽງແຮງງານເຄື່ອນຍ້າຍທີ່ກັບຄືນປະເທດ, ໂດຍເຊື່ອມໂຍງກັບມາດຕະການການຍົກລະດັບສີມືແຮງງານ ແລະ ການຊອກຫາວຽກເຮັດງານທຳ. | ອຸດໜູນຄັ້ງດຽວ / ອຸດໜູນຄັ້ງໜຶ່ງຕໍ່ເດືອນ ແລະ ກວມເອົາອຸດໜູນ 3 ເດືອນ ຕໍ່ຄັ້ງ | ຈັດຕັ້ງປະຕິບັດຮີບດ່ວນ ຫາໄລຍະກາງ |

| | | |
|---|---|---|
| **ອຸດໜູນປະກັນສັງຄົມ** | | |
| 4. ຂະຫຍາຍການໃຫ້ອຸດໜູນຫວ່າງງານ ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ຜູ້ທີ່ໄດ້ຮັບຜົນກະທົບ, ໂດຍການເພີ່ມມູນຄ່າອຸດໜູນ, ໄລຍະການໃຫ້ອຸດໜູນ ແລະ ພິຈາລະນາລຶບລ້າງກຳນົດເວລາລໍຖ້າຮັບອຸດໜູນລົງພາຍໃນ 30 ວັນ. | ອຸດໜູນຕໍ່ເນື່ອງ | ການຈັດຕັ້ງປະຕິບັດຮີບດ່ວນ |
| 5. ອຸດໜູນຫວ່າງງານສ່ວນໜຶ່ງ ຫຼື ອຸດໜູນລາຍໄດ້ ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ໃນຂະແໜງການທ່ອງທ່ຽວ ແລະ ຕັດຫຍິບ (ແຮງງານຜູ້ທີ່ຕ້ອງໄດ້ພັກວຽກຊົ່ວຄາວ ແລະ ບໍ່ໄດ້ຮັບເງິນເດືອນ ເນື່ອງຈາກບໍລິສັດຕ້ອງປິດຊົ່ວຄາວ), ເຊື່ອມໂຍງກັບໂຄງການວຽກສາທາລະນະ, ມາດຕະການປັບປຸງສີມືແຮງງານ ແລະ ຈັດຫາງານ. | ອຸດໜູນຄັ້ງດຽວ / ອຸດໜູນຄັ້ງໜຶ່ງຕໍ່ເດືອນ ແລະ ກວມເອົາອຸດໜູນ 3 ເດືອນ ຕໍ່ຄັ້ງ | ຈັດຕັ້ງປະຕິບັດຮີບດ່ວນ ຫາໄລຍະກາງ |
| 6. ອຸດໜູນລາຍໄດ້ ສະມາຊິກຜູ້ປະກອບທຶນສົມທົບເຂົ້າກອງທຶນປະກັນສັງຄົມ ທີ່ຢຸດເຊົາປະກອບທຶນ ແລະ ຜູ້ບໍ່ແມ່ນສະມາຊິກກອງທຶນປະກັນສັງຄົມ ໃນຂະແໜງການທີ່ໄດ້ຮັບຜົນກະທົບຈາກວິກິດການເສດຖະກິດ (ການໃຫ້ອຸດໜູນລາຍໄດ້ແຮງງານກຸ່ມນີ້ ຕ້ອງຕໍ່າກວ່າອຸດໜູນທີ່ຈ່າຍໃຫ້ກັລສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ) | ອຸດໜູນຄັ້ງດຽວ / ອຸດໜູນຄັ້ງໜຶ່ງຕໍ່ເດືອນ ແລະ ກວມເອົາອຸດໜູນ 3 ເດືອນ ຕໍ່ຄັ້ງ | ຈັດຕັ້ງປະຕິບັດໄລຍະກາງ |
| **ອຸດໜູນປະກັນສຸຂະພາບ** | | |
| 7. ໃຫ້ທຸກຄົນ, ລວມທັງແຮງງານເຄື່ອນຍ້າຍ, ສາມາດເຂົ້າເຖິງລະບົບປະກັນສຸຂະພາບທີ່ຈຳເປັນຊົ່ວຄາວ, ເຖິງບໍ່ເປັນສະມາຊິກຂອງລະບົບປະກັນສຸຂະພາບ ກໍ່ຕາມ. ພ້ອມນີ້ ກໍ່ໃຫ້ຍົກເວັ້ນການຈ່າຍສົມທົບ ສຳລັບທຸກຄົນ. | ເປັນເວລາ 3 ເດືອນ | ຈັດຕັ້ງປະຕິບັດຮີບດ່ວນ |
| 8. ເນັ້ນໜັກການເຜີຍແຜ່ຂໍ້ຄວາມຕ້ານພະຍາດ COVID-19, ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ. | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |
| 9. ສືບຕໍ່ລົງທຶນ ແລະ ປັບປຸງການບໍລິການປິ່ນປົວສຸຂະພາບ, ເພື່ອຮັບມືກັບຄວາມທ້າທາຍໃນການປິ່ນປົວທົ່ວໄປ (ນອກຈາກ COVID-19) | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |

## ຜົນກະທົບຂອງການແຜ່ລະບາດ ຂອງ COVID-19 ຕໍ່ສັງຄົມ ແລະ ເສດຖະກິດ ຂອງ ສປປ ລາວ.

**ການແຜ່ລະບາດຂອງເຊື້ອພະຍາດອັກເສບປອດ ຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19 ຄາດວ່າຈະສົ່ງຜົນກະທົບຕໍ່ປະຊາຊົນທັງໝົດ ໃນ ສປປ ລາວ, ການວິເຄາະຂອງສາກົນ ສະແດງໃຫ້ເຫັນວ່າ ການແຜ່ລະບາດດັ່ງກ່າວ ຍິ່ງສົ່ງຜົນກະທົບໜັກໜ່ວງຕໍ່ສັງຄົມ ແລະ ເສດຖະກິດຂອງກຸ່ມຜູ້ດ້ອຍໂອກາດ ແລະ ກຸ່ມທີ່ບອບບາງທີ່ສຸດ, ເນື່ອງຈາກເຂົາເຈົ້າມີຄວາມຈຳກັດດ້ານຍຸດທະສາດໃນການຮັບມືກັບວິກິດການນີ້. ດັ່ງນັ້ນ ຈຳເປັນຕ້ອງມີມາດຕະການແກ້ໄຂຮີບດ່ວນ.**

ລັດຖະບານຂອງແຕ່ລະປະເທດທົ່ວໂລກ ປະເຊີນກັບຄວາມທ້າທາຍກັບການປ່ຽນແປງດ້ານນະໂຍບາຍທີ່ສັບສົນ ໃນການຮັບມືກັບຜົນກະທົບຂອງການແຜ່ລະບາດເຊື້ອພະຍາດອັກເສບປອດ ຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19, ເປັນຕົ້ນແມ່ນຜົນກະທົບດ້ານລາຍໄດ້ ຈາກການປະກາດປິດການເຄື່ອນໄຫວກິດຈະກຳເສດຖະກິດແຫ່ງຊາດ - ມາດຕະການສະກັດກັ້ນການແຜ່ລະບາດ ໂດຍຈຳກັດບໍ່ໃຫ້ມີການເດີນທາງ, ພ້ອມທັງຄວາມຕ້ອງການຈາກພາຍໃນ ແລະ ຕ່າງປະເທດຫຼຸດລົງ ເນື່ອງຈາກຂໍ້ກຳນົດໃນການກັກໂຕ. ແຕ່ໃນຍຸກຂອງການເຊື່ອມໂຍງເສດຖະກິດໂລກ, ສປປ ລາວ ບໍ່ແມ່ນປະເທດດຽວທີ່ໄດ້ຮັບຜົນກະທົບຈາກວິກິດໃນຄັ້ງນີ້. ເສດຖະກິດ ແລະ ການຈ້າງງານ ຖືກກະທົບຮຸນແຮງໃນປີ 2020, ແລະ ອາດສືບຕໍ່ໃນໄລຍະຍາວ. ອີງຕາມການວິເຄາະຂອງສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດຂອງ ສປປ ລາວ ໄດ້ວິເຄາະໄວ້ວ່າ: ການທ່ອງທ່ຽວ, ການຜະລິດ, ແລະ ການເກັບລາຍຮັບຂອງລັດຈະຫຼຸດລົງ. ອີງຕາມການປະເມີນຂອງທະນາຄານໂລກ, ລວມຍອດຜະລິດຕະພັນພາຍໃນແຫ່ງຊາດ ຫຼື ຈີດີພີ ຄາດວ່າຈະຫຼຸດລົງຫຼາຍ, ຮອດ 4.8 ເປີເຊັນໃນ ປີ 2020 ແລະ 1.1 ເປີເຊັນໃນປີ 2021. ຜົນກະທົບນີ້ ອາດສືບຕໍ່ເຮັດໃຫ້ ຈີດີພີ ຫຼຸດລົງຕ່ຳອີກ ຖ້າຫາກວິກິດການດ້ານເສດຖະກິດຍັງສືບຕໍ່. ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດໄດ້ຄາດຄະເນໄວ້ວ່າ ລັດຈະສູນເສຍ 30 ເປີເຊັນຂອງການເກັບລາຍຮັບທີ່ຄາດໝາຍໄວ້ ເນື່ອງຈາກການແຜ່ລະບາດຂອງເຊື້ອພະຍາດອັກເສບປອດ ຈາກເຊື້ອຈຸລະໂຣກສາຍພັນໃໝ່ COVID-19.[1] ເຖິງຢ່າງໃດກໍ່ຕາມ, ເພື່ອແກ້ໄຂຄວາມທ້າທາຍດ້ານສຸຂະພາບ, ລາຍໄດ້ ແລະ ການມີວຽກເຮັດງານທຳຂອງປະຊາຊົນ, ແລະ ເພື່ອສະໜັບສະໜູນຊີວິດການເປັນຢູ່, ພ້ອມທັງແກ້ໄຂຜົນກະທົບດ້ານເສດຖະກິດຂອງປະຊາຊົນ ແລະ ຂອງປະເທດ, ຈຳເປັນຕ້ອງມີມາດຕະການປະຕິບັດການປົກປ້ອງສັງຄົມທີ່ດີ.

**ກຳລັງແຮງງານລາວສ່ວນໃຫຍ່ ເປັນແຮງງານ ນອກລະບົບ,** ກວມເອົາ 82.9 ເປີເຊັນຂອງການຈ້າງງານທັງໝົດ, ໃນນັ້ນ, ແຮງງານເພດຍິງ ກວມເອົາ 85.9 ເປີເຊັນ ແລະ ແຮງງານເພດຊາຍກວມເອົາ 79.9 ເປີເຊັນ[2]. ມີອັດຕາການຈ້າງງານນອກລະບົບສູງ ສ້າງຄວາມທ້າທາຍດ້ານການບໍລິຫານ ແລະ ດ້ານການເງິນໃນການຂະຫຍາຍການປົກຄຸມລະບົບປະກັນສັງຄົມ. ເນື່ອງຈາກແຮງງານທີ່ເຮັດວຽກນອກລະບົບ ມີລາຍໄດ້ ບໍ່ປົກກະຕິ ແລະ ບໍ່ຖືກບັນທຶກລາຍໄດ້, ຈິ່ງເຮັດໃຫ້ການເກັບພາສີ ແລະ ການຈັດຕັ້ງປະຕິບັດກົດໝາຍປະກັນສັງຄົມ ມີຄວາມຫຍຸ້ງຍາກທ້າທາຍ, ລວມທັງ ກັບແຮງງານໃນລະບົບກໍ່ເຊັ່ນດຽວກັນ.

**ສປປ ລາວ ເປັນປະເທດທີ່ປະຊາຊົນອີງໃສ່ເຮັດກະສິກຳເປັນຫຼັກ.** ປະຊາຊົນຈຳນວນປະມານ 4.9 ລ້ານຄົນ (70.5 ເປີເຊັນຂອງປະຊາກອນທັງໝົດ) ອາໃສໃນຊົນນະບົດ. ປະຊາຊົນຈຳນວນ 551,000 ຄົນ (35.8 ເປີເຊັນ ຂອງກຳລັງແຮງງານທັງໝົດ) ເຮັດວຽກໃນຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ, ແລະ ສ່ວນຫຼາຍເປັນແຮງງານເຮັດວຽກນອກລະບົບ. ຄາດວ່າປະມານ 1.5 ລ້ານຄົນເຮັດວຽກກະສິກຳກຸ້ມຕົນເອງ. ສະພາບການຈ້າງງານດັ່ງກ່າວ ເຮັດໃຫ້ຄົວເຮືອນທີ່ບໍ່ມີລາຍໄດ້ປົກກະຕິ ເອື່ອຍອີງໃສ່ເງື່ອນໄຂທຳມະຊາດ ແລະ ດິນຟ້າອາກາດເປັນຫຼັກຕະຫຼອດປີ, ທັງວຽກກະສິກຳກຸ້ມຕົນເອງ ແລະ ວຽກຮັບຈ້າງອິດສະລະທົ່ວໄປ.

[1] https://laotiantimes.com/2020/04/23/laos-to-experience-stunted-economic-growth-amid-coronavirus-pandemic/.
[2] Labour Force Survey, 2017.

ປະຊາຊົນທີ່ອາໃສໃນຊົນນະບົດເປັນກຸ່ມທີ່ມີລາຍໄດ້ຕໍ່າ, ການຄໍ້າປະກັນລາຍຮັບຕໍ່າ ແລະ ເງື່ອນໄຂການເຮັດວຽກທີ່ບໍ່ດີ, ບໍ່ໄດ້ຮັບການປົກປ້ອງສັງຄົມ ໃນເວລາສູນເສຍລາຍໄດ້, ເວລາເຈັບປ່ວຍ, ຫຼື ໃນເວລາທີ່ມີການແຜ່ລະບາດ ແລະ ຕ້ອງກັກໂຕ.

**ຄົວເຮືອນຈຳນວນຫຼາຍ ເອື່ອຍອີງໃສ່ສະມາຊິກຂອງຄົວເຮືອນໃນການຊອກວຽກເຮັດງານທຳທີ່ມີລາຍໄດ້ສູງຢູ່ຕົວເມືອງ ແລະ ເຂດສູນກາງເສດຖະກິດ.** ແຮງງານຈຳນວນຫຼາຍເຮັດວຽກໃນເຄືອຂ່າຍການຜະລິດພາກພື້ນ, ເພື່ອສະໜອງຄວາມຕ້ອງການຂອງຕະຫຼາດຈາກເອີຣົບ, ອາເມລິກາ ແລະ ບັນດາປະເທດພັດທະນາໃນອາຊຽນ. ດັ່ງນັ້ນ, ການປະກອບ "ທຶນພາຍນອກ" ຈິ່ງເປັນປັດໃຈທີ່ປະກອບສ່ວນສຳຄັນເຂົ້າໃນພະລັງການຈັບຈ່າຍຂອງຄົວເຮືອນໃນຮູບແບບຂອງລາຍໄດ້ ທີ່ຈ່າຍອອກໄປ. ແນ່ນອນວ່າ ອາດມີຄວາມສ່ຽງຫຼາຍໆຢ່າງ ທີ່ກ່ຽວພັນກັບການເອື່ອຍອີງນີ້ ຕໍ່ກັບຕະຫຼາດແຮງງານພາຍນອກ ທີ່ອາດກໍ່ໃຫ້ເກີດຄວາມທ້າທາຍຕ່າງໆ ໃນການຂະຫຍາຍການປົກປ້ອງສັງຄົມ - ແຮງງານເຄື່ອນຍ້າຍສ່ວນໃຫຍ່ ທັງເຄື່ອນຍ້າຍພາຍໃນ ແລະ ເຄື່ອນຍ້າຍໄປຕ່າງປະເທດ ບໍ່ມີການປົກປ້ອງສັງຄົມໃດໆທັງໝົດ. ຜົນກະທົບໂດຍກົງຂອງ COVID-19 ເຮັດໃຫ້ຕ່ອງໂສ້ການຜະລິດ ແລະ ສະໜອງຂອງສາກົນທັງໝົດຕ້ອງຢຸດສະຫງັດ, ສົ່ງຜົນກະທົບຕໍ່ກັບລາຍໄດ້ຂອງແຮງງານ ແລະ ຂອງຄົວເຮືອນ. ພວກເຮົາສາມາດຄາດເດົາໄດ້ວ່າ ພາຍຫຼັງການແຜ່ລະບາດຂອງ COVID-19 ໝົດໄປ, ຄວາມຕ້ອງການຂອງຕະຫຼາດ (ຢ່າງໜ້ອຍ) ໃນໄລຍະເບື້ອງຕົ້ນ ອາດຕໍ່າກ່ວາທີ່ຜ່ານມາ, ໃນຂະນະດຽວກັນ ຕ່ອງໂສ້ການຜະລິດ ແລະ ການສະໜອງສາກົນ ອາດມີການປ່ຽນແປງໄປເລີຍ.[3]

**ຫຼາຍຄົວເຮືອນ ອີງໃສ່ລາຍໄດ້ທີ່ສົ່ງໃຫ້ຈາກສະມາຊິກຄອບຄົວທີ່ເປັນແຮງງານເຄື່ອນຍ້າຍ.** ລາຍໄດ້ທີ່ແຮງງານເຄື່ອນຍ້າຍຄົນລາວສົ່ງກັບມາບ້ານໃນປີ 2018 ປະມານ 118 ລ້ານໂດລາສະຫະລັດ, ກວມເອົາ 1.3 ເປີເຊັນຂອງລວມຍອດຜະລິດຕະພັນພາຍໃນແຫ່ງຊາດ ຫຼື ຈີດີພີ.[4] ໃນປີ 2014, ປະຊາກອນຜູ້ໃຫຍ່ຈຳນວນ 11.5 % ໄດ້ຮັບເງິນທີ່ແຮງງານເຄື່ອນຍ້າຍສົ່ງມາໃຫ້ປະມານ 20% ໃນພາກໃຕ້ ຫາ 2.7% ໃນພາກເໜືອ[5]. ຄາດວ່າມີປະຊາກອນຄົນລາວຈຳນວນ ປະມານ 900,000 ຄົນ ອາໃສຢູ່ຕ່າງປະເທດ, ໃນນັ້ນ, ແຮງງານຈຳນວນປະມານ 183,460 ຄົນ ເຮັດວຽກໃນປະເທດໄທ ພາຍໃຕ້ບົດບັນທຶກຊ່ວຍຈຳການຮ່ວມມືສອງຝ່າຍດ້ານແຮງງານ. ໃນຈຳນວນນີ້, ແຮງງານແມ່ຍິງກວມເອົາ 51%.[6] ແຮງງານລາວທີ່ເຮັດວຽກຢູ່ປະເທດໄທ ສ່ວນຫຼາຍເຮັດວຽກທີ່ມີລາຍໄດ້ຕໍ່າ ໃນຂະແໜງການທ່ອງທ່ຽວ, ການບໍລິການ, ແຮງງານຮັບໃຊ້ຄົວເຮືອນ, ຂະແໜງກະສິກຳ, ແລະ ຂະແໜງອຸດສະຫະກຳ, ເຊິ່ງເປັນກຸ່ມແຮງງານທີ່ບໍ່ສາມາດຮັບມື ກັບຜົນກະທົບຈາກວິກິດການແຜ່ລະບາດໃນຄັ້ງນີ້ໄດ້. ການປິດປະເທດຂອງໄທ ຈິ່ງນຳໄປສູ່ການເພີ່ມຂຶ້ນຂອງອັດຕາການຫວ່າງງານ, ການສູນເສຍລາຍໄດ້ຂອງແຮງງານກຸ່ມທີ່ດ້ອຍໂອກາດທີ່ສຸດ, ແລະ ການຕ້ອງລໍຖ້າໃນດ່ານສາກົນເພື່ອຂ້າມກັບຄືນມາບ້ານຕົນເອງໃນ ສປປ ລາວ.

ມີຫຼາຍສາເຫດກໍ່ໃຫ້ເກດຄວາມບໍ່ເທົ່າທຽມ ແລະ ຄວາມທຸກຍາກ ຊຶ່ງສາມາດຖົງຖຽງກັນໄດ້ໃນສະພາບວິກິດການນີ້, ເປັນຕົ້ນໃນດ້ານຊັບພະຍາກອນມະນຸດ, ການເງິນ, ຄວາມອາດສາມາດ ແລະ ການມີສ່ວນຮ່ວມຂອງປະຊາຊົນ. ລັດຖະບານ ຮັບຮູ້ເຖິງຄວາມຈຳເປັນໃນການແກ້ໄຂສິ່ງທ້າທາຍເຫຼົ່ານີ້ໄດ້ຢ່າງມີປະສິດທິພາບ ເພື່ອແກ້ໄຂບັນຫາຄວາມແຕກຕ່າງ ລະຫວ່າງ ແຕ່ລະຂົງເຂດອີງຕາມສະຖານະພາບດ້ານເພດ, ອາຍຸ, ຊົນເຜົ່າ, ພາສາ, ການສຶກສາ, ຄວາມພິການ ແລະ ສະຖານະພາບດ້ານສັງຄົມ-ເສດຖະກິດ.

---

[3] UNCDF Background Note: Social Protection in Lao PDR.

[4] https://data.worldbank.org/indicator/BX.TRF.PWKR.DT.GD.ZS?locations=LA

[5] Country Analysis Report. Analysis to inform the Lao PDR – United Nations Partnership Framework 2017-2021. www.undp.org/content/dam/laopdr/docs/Reports%20and%20publications/2015/Country%20Analysis%20Report%20Lao%20PDR%202015.pdf

[6] TRIANGLE in ASEAN Quarterly Briefing Note. www.ilo.org/wcmsp5/groups/public/---asia/---ro-bangkok/documents/genericdocument/wcms_735106.pdf.

ການແຜ່ລະບາດຂອງ COVID-19 ສາມາດ ສົ່ງ**ຜົນກະທົບຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ເນື່ອງຈາກ COVID-19 ສາມາດພັກດັນໃຫ້ຄົວເຮືອນຕົກສູ່ຄວາມທຸກຍາກ ແລະ ເຮັດໃຫ້ເດັກນ້ອຍ ແລະ ໄວໜຸ່ມ, ໂດຍສະເພາະຈາກຄອບຄົວທຸກຍາກ ແລະ ຄອບຄົວຊົນເຜົ່າ ພົບກັບຄວາມຂາດເຂີນຫຼາຍດ້ານ** ທີ່ສາມາດສົ່ງຜົນກະທົບໄລຍະຍາວ ຕໍ່ການພັດທະນາຜະລິດຕະພາບການຜະລິດ ແລະ ການພັດທະນາຄວາມອາດສາມາດຂອງຊັບພະຍາກອນມະນຸດ. ການສຳຫຼວດດັດສະນີໝາຍສັງຄົມແຫ່ງຊາດ ຄັ້ງທີ 2 ໃນປີ 2017 ສະແດງໃຫ້ເຫັນວ່າ: ເດັກເກີດໃໝ່ ແລະ ເດັກນ້ອຍອາຍຸຕໍ່າກ່ວາ 5 ປີ ມີຄວາມສ່ຽງໃນການຂາດສານອາຫານ; ເຫັນໄດ້ຈາກຈານວນເດັກທີ່ເປັນພະຍາດເລືອດຈາງໃນຈຳນວນຫຼາຍ (60%), ພາວະເດັກເຕ້ຍ (33%), ແລະ ນໍ້າໜັກໂຕຕໍ່າ (21%), ໂດຍສະເພາະອັດຕາສູງຫຼາຍໃນເດັກນ້ອຍ ຈາກຄອບຄົວທຸກຍາກ, ຊົນເຜົ່າ ແລະ ໃນຊົນນະບົດ - ເດັກນ້ອຍໃນຄົວເຮືອນທຸກຍາກມີພາວະເປັນເດັກເຕ້ຍ 3.5 ເທົ່າ ເມື່ອສົມທຽບກັບເດັກນ້ອຍຈາກຄອບຄົວທີ່ຮັ່ງມີ.

ການປິດປະເທດ ທີ່ກະທົບຕໍ່ຊີວິດການເປັນຢູ່ ແລະ ລາຍໄດ້ ສາມາດສົ່ງຜົນເຮັດໃຫ້ມີການທຳຮ້າຍ ແລະ ຄວາມສ່ຽງໃນການໃຊ້ຄວາມຮຸນແຮງຕໍ່ເດັກ ແລະ ແມ່ຍິງ, ເປັນໄພຂົ່ມຂູ່ຕໍ່ຊີວິດ ແລະ ສະພາບຈິດ ແລະ ຮ່າງກາຍໃນໄລຍະຍາວ. ອັດຕາການເກີດຂອງເດັກນ້ອຍຈາກແມ່ໄວໜຸ່ມໃນ ສປປ ລາວ ແມ່ນ 83/1,000 ຄັ້ງ ຂອງແມ່ໄວໜຸ່ມເກນອາຍຸ 15-19 ປີ, ເປັນອັດຕາທີ່ສູງທີ່ສຸດໃນພາກພື້ນ. ການສຳຫຼວດ ຍັງສະແດງໃຫ້ເຫັນວ່າ: 23.5% ຂອງເດັກຍິງໄວໜຸ່ມ ເກນອາຍຸ 15-19 ປີ ແມ່ນແຕ່ງງານ/ຢູ່ຮ່ວມກັບຄູ່ຮັກ ແລະ 41.8% ຂອງແມ່ຍິງໄວໜຸ່ມ ໃນເກນອາຍຸດຽວກັນ ແມ່ນບໍ່ເຂົ້າໂຮງຮຽນ. ຄາດວ່າການປະຕິບັດມາດຕະການປິດການເຄື່ອນໄຫວ ແລະ ປິດປະເທດ ຈາກການລະບາດຂອງ COVID-19 ອາດສົ່ງຜົນຕໍ່ກັບການຖືພາທີ່ບໍ່ຕັ້ງໃຈເພີ່ມຂຶ້ນຈຳນວນຫຼາຍ. ເດັກຍິງຈຳນວນ 42.4% ແລະ ເດັກຊາຍຈຳນວນ 43.2% ໃນເກນອາຍຸ 5-17 ປີ ຕົກຢູ່ໃນສະພາບເປັນແຮງງານເດັກ ແລະ ເດັກຍິງຈຳນວນ 41.8% ໃນເກນອາຍຸ 15-17 ປີ ແມ່ນບໍ່ໄດ້ເຂົ້າໂຮງຮຽນ.[7] ການແຜ່ລະບາດຂອງ COVID-19 ສົ່ງຜົນເຮັດໃຫ້ເດັກຍິງ ແລະ ເດັກຊາຍໄວໜຸ່ມ, ໂດຍສະເພາະຈາກກຸ່ມຊົນເຜົ່າ ແລະ ຄົວເຮືອນທຸກຍາກ ມີຄວາມສ່ຽງໃນການອອກໂຮງຮຽນ ແລະ ເຮັດວຽກໃນກິດຈະກຳເສດຖະກິດທີ່ເຂົ້າຂ່າຍເປັນແຮງງານເດັກ.

**ມີແມ່ຍິງຈຳນວນຫຼາຍໃນກຸ່ມຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ** ເນື່ອງຈາກເຂົາເຈົ້າເປັນກຸ່ມທີ່ເຮັດວຽກຮັບຈ້າງທົ່ວໄປ, ວຽກບໍ່ແນ່ນອນ, ວຽກອັນຕະລາຍ ແລະ ເຮັດວຽກອິດສະລະ, ເປັນຕົ້ນ ເຮັດວຽກນອກລະບົບ ບໍ່ມີການປົກປ້ອງສັງຄົມ ຫຼື ຖ້າມີ ກໍ່ຈຳກັດຫຼາຍ. ໃນ ສປປ ລາວ, ເຈົ້າໜ້າທີ່ຂອງສາທາລະນະສຸກທີ່ປະຕິບັດໜ້າທີ່ດ່ານໜ້າ ຈຳນວນ 70% (ລວມທັງແພດໝໍ, ພະຍາບານ, ແພດໝໍປະດຸງຄັນ) ແມ່ນເພດຍິງ, ແລະ ສ່ວນໃຫ່ຍມີຄວາມສ່ຽງໃນການຕິດເຊື້ອໄວຣັດ ແລະ ຈຳເປັນຕ້ອງດູແລເພີ່ມຂຶ້ນສອງເທົ່າ ແລະ ຕ້ອງການໆສະໜັບສະໜູນສະເພາະ ເພື່ອສາມາດດູແລເບິ່ງແຍງລູກໄດ້ ໃນໄລຍະທີ່ໂຮງຮຽນປິດຊົ່ວຄາວ. ຄາດຄະເນຜົນກະທົບຂອງການແຜ່ລະບາດຂອງ COVID-19 ສະແດງໃຫ້ເຫັນວ່າ: ໃນປີ 2020, ອັດຕາການຕາຍຂອງແມ່ໃນ ສປປ ລາວ ສາມາດເພີ່ມຂຶ້ນຈາກ 286 ເຖິງ 546 (ໃນກໍລະນີບໍ່ຮ້າຍແຮງ) ຫຼື ອາດສູງເຖິງ 684 (ໃນກໍລະນີຮ້າຍແຮງ). ອັດຕາການຕາຍຂອງແມ່ຈຳນວນ 38% ແມ່ນແມ່ຍິງໄວໜຸ່ມ ອາຍຸລະຫວ່າງ 15-24 ປີ.

**ຖ້າຜູ້ສູງອາຍຸ ແລະ ຜູ້ພິການ ຫາກຕິດເຊື້ອໄວຣັດ ຍິ່ງເຮັດໃຫ້ຂ້ອນຂ້າງມີຄວາມສ່ຽງທີ່ບໍ່ດີ, ລວມທັງ**ຜູ້ທີ່ມີບັນຫາສຸຂະພາບກໍ່ເຊັ່ນດຽວກັນ. ຄວາມບອບບາງດັ່ງກ່າວ ປະກອບກັບຄວາມທຸກຍາກ, ການເຄື່ອນໄຫວໄປມາທີ່ລຳບາກ ແລະ ຊ່ອງຫວ່າງການປົກຄຸມຂອງການປົກປ້ອງສັງຄົມ. ຜູ້ພິການສ່ວນຫຼາຍ ອາໃສໃນຄົວເຮືອນທີ່ພົບກັບຄວາມທ້າທາຍຫຼາຍດ້ານ ແລະ ເຂົາເຈົ້າຢູ່ໃນການ

[7] Lao Bureau of Statistics, UNICEF. 2018. Lao Social Indicator Survey II (LSIS II).

ເບິ່ງແຍງໂດຍສະມາຊິກຂອງຄອບຄົວ ຊຶ່ງຄົວເຮືອນຂອງເຂົາເຈົ້າອາດບໍ່ມີພື້ນທີ່ໃນການຢູ່ແຍກປ່ຽວເພື່ອປ້ອງກັນການແຜ່ລະບາດຂອງໄວຣັດ.

ຄວາມພະຍາຍາມໃນການສະກັດກັ້ນການແຜ່ລະບາດຂອງ COVID-19 **ຈຳກັດການຜະລິດ ແລະ ການສະໜອງສິ່ງຈຳເປັນພື້ນຖານ** ແລະ ສິ່ງຜົນກະທົບຕໍ່ຕ່ອງໂສ້ການຜະລິດ ແລະ ສະໜອງອາຫານ. ການເກັບຮັກສາອາຫານ, ການຂາດແຄນພະນັກງານ, ແລະ ມາດຕະການກັກໂຕ ສ້າງຄວາມສ່ຽງໃຫ້ກັບການເຄື່ອນຍ້າຍອາຫານແບບເສລີ. ຖ້າຫາບໍ່ມີມາດຕະການຮີບດ່ວນເພື່ອ “ປົກປ້ອງຜູ້ທີ່ບອບບາງ, ຕ່ອງໂສ້ການຜະລິດ ແລະ ການສະໜອງອາຫານໃນທົ່ວໂລກບໍ່ສາມາດດຳເນີນຕາມປົກກະຕິ ແລະ ບໍ່ສາມາດຫຼຸດຜ່ອນຜົນກະທົບຂອງການແຜ່ລະບາດໃນທົ່ວລະບົບຕ່ອງໂສ້ສະໜອງອາຫານ”ໄດ້ ອາດເກີດວິກິດການຄວາມບໍ່ໝັ້ນຄົງດ້ານສະບຽງອາຫານຂຶ້ນໄດ້.[8] ຫຼາຍປະເທດໃນທົ່ວໂລກກຳລັງຕໍ່ສູ້ກັບວິກິດການຂັ້ນສອງ ໃນຂະນະທີ່ຕ້ອງຕໍ່ສູ້ກັບການຄວບຄຸມການແຜ່ລະບາດຂອງໄວຣັດພ້ອມ. ໃນກໍລະນີດັ່ງກ່າວ, ການຂາດແຄນສິ່ງຈຳເປັນພື້ນຖານ ເຊັ່ນ ອາຫານ ສາມາດນຳໄປສູ່ການເກີດຂໍ້ຂັດແຍ່ງ ແລະ ການແບ່ງແຍກທາງສັງຄົມໄດ້ ໂດຍສະເພາະໃນປະເທດທີ່ມີເສດຖະກິດບອບບາງ ອາດສິ່ງຜົນກະທົບຮ້າຍແຮງດ້ານເສດຖະ ກິດ ແລະ ສັງຄົມເພີ່ມຂຶ້ນ.

[8] www.fao.org/2019-ncov/q-and-a/impact-on-food-and-agriculture/en/.

UNITED NATIONS
LAO PDR

## ຍ້ອນຫຍັງ ການປົກປ້ອງສັງຄົມ ຈຶ່ງສຳຄັນ ແລະ ຈຳເປັນ ໃນການຮັບມື ກັບວິກິດການແຜ່ລະບາດຂອງ COVID-19?

ຖ້າຫາກລະບົບການປົກປ້ອງສັງຄົມ ຖືກອອກແບບ, ໂດຍເລັງເຫັນຄວາມສຳຄັນຂອງບົດບາດຍິງຊາຍ, ສາມາດແກ້ໄຂ 3 ມິຕິຫຼັກຂອງການແຜ່ລະບາດຂອງ COVID-19 ແລະ ຮັບມືກັບຜົນກະທົບດ້ານເສດຖະກິດ ແລະ ສັງຄົມໄດ້ ເຊັ່ນ:

- **ຄ້ຳປະກັນລາຍໄດ້ ແລະ ການປ້ອງກັນຄວາມທຸກຍາກ:** ປະສົບການສາກົນໃນການຮັບມືກັບວິກິດການນີ້ ສະແດງໃຫ້ເຫັນວ່າ ການໃຫ້ອຸດໜູນລາຍໄດ້ ກຸ່ມປະຊາກອນຜູ້ມີລາຍໄດ້ຕ່ຳ ແລະ ລາຍໄດ້ປານກາງ ຜ່ານລະບົບຂອງລັດ ມີປະສິດທິຜົນໃນການປ້ອງກັນ ແລະ ຫຼຸດຜ່ອນການບໍລິໂພກຂອງຄົວເຮືອນ ແລະ ເຮັດໃຫ້ປະຊາຊົນນຳໃຊ້ເບ້ຍລ້ຽງທີ່ໄດ້ຮັບອຸດໜູນເຂົ້າໃນການໃຊ້ຈ່າຍສິ່ງທີ່ຈຳເປັນພື້ນຖານ[9]. ອຸດໜູນຫວ່າງງານ, ອຸດໜູນລາຍໄດ້, ອຸດໜູນປ່ອຍການ, ແລະ ອຸດໜູນດ້ານອື່ນໆ ເປັນຕົ້ນ ເຄື່ອງມືເພື່ອເຮັດກະສິກຳ, ພັນພືດ ແລະ ສັດລ້ຽງ, ແລະ ອຸດໜູນເບ້ຍລ້ຽງອື່ນໆ ຊ່ວຍຮັບມືກັບຜົນກະທົບຮ້າຍແຮງງານດ້ານການເງິນຈາກວິກິດການແຜ່ລະບາດ, ສະໜອງວຽກເຮັດງານທຳ ແລະ ສາມາດຄ້ຳປະກັນລາຍໄດ້ສາລັບຜູ້ທີ່ໄດ້ຮັບຜົນກະທົບຮຸນແຮງທີ່ສຸດ, ປະກອບສ່ວນສ້າງຄວາມສາມາດໃຫ້ເຂົາເຈົ້າໃນການຮັບມືກັບວິກິດການ ແລະ ສາມາດຫຼຸດຜ່ອນຄວາມທຸກຍາກ ແລະ ການເຮັດວຽກນອກລະບົບ ພ້ອມນີ້ ກໍ່ຫຼຸດຜ່ອນຜົນກະທົບຈາກການສູນເສຍລາຍໄດ້. ການປະກັນສຸຂະພາບທີ່ມີປະສິດທິຜົນ ລວມທັງການເຂົ້າເຖິງການປິ່ນປົວທີ່ຈຳເປັນ ເຊັ່ນການວາງແຜນຄອບຄົວ ແລະ ການປິ່ນປົວເວລາເກີດລູກ ກໍ່ສາມາດຮັບປະກັນໄດ້ວ່າ ຜູ້ທີ່ໄດ້ຮັບຜົນກະທົບຮຸນແຮງທີ່ສຸດຈະບໍ່ພົບກັບບັນຫາລາຍຈ່າຍດ້ານການປິ່ນປົວສຸຂະພາບທີ່ຮຸນແຮງ ທີ່ສາມາດພັກດັນເຂົາເຈົ້າ ຕົກສູ່ຄວາມລຳບາກດ້ານການເງິນ ແລະ ຄວາມທຸກຍາກ. ວິກິດການທີ່ຜ່ານ ມາເນັ້ນໃຫ້ເຫັນ ເຖິງຄວາມຈຳເປັນ ທີ່ຕ້ອງສົມທົບການສະໜັບສະໜູນດ້ານປະກັນສຸຂະພາບ ແລະ ມາດຕະການປົກປ້ອງສັງຄົມ ໃນນະໂຍບາຍການຮັບມືກັບວິກິດການຂອງລັດຖະບານທີ່ມີປະສິດທິຜົນ.

- **ສ້າງຄວາມໝັ້ນຄົງ ແລະ ສະຖຽນລະພາບດ້ານເສດຖະກິດ ແລະ ສັງຄົມ**. ການກະທົບຕໍ່ກັບການສະໜອງ ແລະ ຄວາມຕ້ອງການທັງຕະຫຼາຍພາຍໃນ ແລະ ສາກົນ ອາດມີຜົນກະທົບຮ້າຍແຮງຕໍ່ກັບສັງຄົມ ແລະ ເສດຖະກິດໃນໄລຍະຍາວ. ຈຶ່ງຮຽກຮ້ອງໃຫ້ມີມາດຕະການຮີບດ່ວນ ແລະ ນະໂຍບາຍດ້ານເສດຖະກິດ ແລະ ສັງຄົມທີ່ເຂັ້ມແຂງ, ໂດຍເລັງເປົ້າໝາຍໃສ່ຜູ້ທຸກຍາກ ແລະ ຜູ້ບອບບາງ. ການປົກປ້ອງສັງຄົມ ຄວນເຫັນເປັນການລົງທຶນ ບໍ່ແມ່ນລາຍຈ່າຍ. ຫຼາຍປະເທດ, ລວມທັງປະເທດທີ່ມີລາຍໄດ້ຕ່ຳ, ສາມາດຈັດຕັ້ງປະຕິບັດໃຫ້ອຸດໜູນການປົກປ້ອງສັງຄົມໄດ້[10]. ຖ້າຫາກລະບົບການປົກປ້ອງສັງຄົມ ຖືກອອກແບບດີ ແລະ ຈັດຕັ້ງປະຕິບັດມີປະສິດທິຜົນ ກໍ່ສາມາດສ້າງຜົນໄດ້ຮັບທີ່ດີ ແລະ ປະກອບສ່ວນເຂົ້າໃນການພັດທະນາຄວາມອາດສາມາດດ້ານຊັບພະຍາກອນທີ່ດີ ແລະ ມີທ່າແຮງໃນການສົ່ງເສີມການເຕີບໂຕເສດຖະກິດຂອງທ້ອງຖິ່ນ ພ້ອມທັງສົ່ງເສີມປະສິດທິພາບການຜະລິດຂອງກຳລັງແຮງງານໄດ້[11]. ວິກິດການຜ່ານມາໃຫ້ຫຼັກຖານສຳຄັນທີ່ສະແດງໃຫ້ເຫັນວ່າ ການປົກປ້ອງສັງຄົມສົ່ງຜົນທາງບວກຫຼາຍດ້ານສຳຄັນຕໍ່ກັບເສດຖະກິດ, ເປັນເຄື່ອງມືທີ່ມີພະລັງໃນການສ້າງຄວາມໝັ້ນຄົງ ແລະ ສະຖຽນລະພາບໃຫ້ກັບເສດຖະກິດ ແລະ ສັງຄົມ[12]. ເວລາທີ່ປະຕິບັດໄດ້ຕາມເງື່ອນໄຂທີ່ກຳນົດ, ການໃຫ້ອຸດໜູນເບ້ຍລ້ຽງສາມາດຮັບປະກັນໃຫ້ຄົວເຮືອນທີ່ມີລາຍໄດ້ຕ່ຳ ແລະ ລາຍໄດ້ປານກາງ ສືບຕໍ່ໃຊ້ຈ່າຍເງິນ

[9] ILO 2020. 'Social Protection Responses to the COVID-19 Crisis: Country Responses in Asia and the Pacific'. Bangkok and Geneva: International Labour Organization. www.ilo.org/asia/publications/issue-briefs/WCMS_739587/lang--en/index.htm.

[10] For additional references please see the Section on Financial management and sustainability.

[11] www.fao.org/policy-support/policy-themes/social-protection/en/, ILO World Social Protection Report 2017-19.

[12] For example, the expansion of social protection programmes in the United States after the financial crisis in 2008-9 was estimated to have a significant multiplier effect on output, and Australia's fiscal stimulus package with strong social protection components was instrumental in preventing a contraction in economic growth of 1.3 per cent between 2008 and 2009 (www.ilo.org/wcmsp5/groups/public/@ed_norm/@relconf/documents/meetingdocument/wcms_160210.pdf).

ເພື່ອຈັບຈ່າຍສິ່ງຈຳເປັນພື້ນຖານ, ປະກອບສ່ວນສິ່ງເສີມສ້າງໃຫ້ມີຄວາມຕ້ອງການ ແລະ ສ້າງພື້ນຖານສາເຄັນໃນການຟື້ນຟູ.

- **ຄວບຄຸມການແຜ່ລະບາດຂອງໄວຣັດ ແລະ ການຫຼຸດຜ່ອນການເສຍຊີວິດ**: ການເຂົ້າເຖິງການປິ່ນປົວສຸຂະພາບມີປະສິດທິຜົນ ແລະ ສາມາດຈ່າຍໄດ້ ເປັນໃຈກາງສຳຄັນໃນການຮັບມືກັບການແຜ່ລະບາດຕ່າງໆ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາຄວາມອາດສາມາດຂອງລັດຖະບານທີ່ມີປະສິດທິຜົນເພີ່ມຂຶ້ນ ໃນການຕິດຕາມ ແລະ ການຄວບຄຸມການແຜ່ລະບາດ ແລະ ຮັບປະກັນໃຫ້ຜູ້ທີ່ຕິດເຊື້ອສາມາດໄດ້ເຂົ້າເຖິງການປິ່ນປົວ. ມາດຕະການນີ້ຄວນສືບຕໍ່ຈັດຕັ້ງປະຕິບັດໃນໄລຍະການບໍລິການສາທາລະນະສຸກໃຫ້ກັບປະຊາຊົນທົ່ວໄປ. ການກຽມຄວາມພ້ອມຂອງລະບົບສາທາລະ ນະສຸກ ເປັນສິ່ງສຳຄັນຫຼາຍໃນກໍລະນີຖ້າຫາກການແຜ່ລະບາດຂອງໄວຣັດ COVID-19 ກັບຄືນມາລະບາດຄັ້ງຕໍ່ໄປ. ນອກຈາກນີ້, ການໃຫ້ອຸດໜູນຫວ່າງງານ, ອຸດໜູນປ່ວຍການ ແລະ ການອຸດໜູນເບ້ຍລ້ຽງອື່ນໆ ສາມາດຄ້ຳປະກັນລາຍໄດ້ໃນກໍລະນີປະຊາຊົນບໍ່ມີວຽກເຮັດ ຫຼື ເຈັບປ່ວຍ, ແລະ ສາມາດປົກປ້ອງປະຊາຊົນຈາກຄວາມສ່ຽງໃນການຕິດເຊື້ອ ແລະ ບໍ່ສ້າງພາລະດ້ານການເງິນໃນເວລາທີ່ຕ້ອງແຍກປ່ຽວ. ດັ່ງນັ້ນ, ທັງໝົດນີ້ ແມ່ນປະກອບສ່ວນສຳຄັນ ເຂົ້າໃນການຄວບຄຸມການແຜ່ລະບາດຂອງໄວຣັດໃນກໍລະນີຫາກມີການກັບມະລະບາດຄັ້ງທີສອງອີກ.

ລະບົບການປົກປ້ອງສັງຄົມເພື່ອຮັບມືກັບວິກິດການສຸກເສີນ ແມ່ນສ່ວນສຳຄັນໜຶ່ງຂອງການຮັບມືກັບວິກິດການຕ່າງໆທີ່ເກີດຂຶ້ນ. ໃນໄລຍະການແຜ່ລະບາດຂອງພະຍາດໄລຣັດອີໂບຣາ ໃນອາຟຣິກາຕາເວັນຕົກໃນປີ 2014 ນັ້ນ ການເສຍຊີວິດຂອງປະຊາຊົນຈຳນວນຫຼວງຫຼາຍ ສ່ວນໃຫຍ່ແມ່ນເນື່ອງມາຈາກການສະໜອງບໍລິການສັງຄົມທີ່ບໍ່ພຽງພໍ ແລະ ຈາກວິກິດການດ້ານເສດຖະກິດ ຫຼາຍກ່ວາຈາກການລະບາດຂອງໄວຣັດ[13]. ລະບົບການປົກປ້ອງສັງຄົມເພື່ອຮັບມືກັບວິກິດການສຸກເສີນ ສາມາດປະກອບສ່ວນເຂົ້າໃນການສ້າງຄວາມອາດສາມາດໃຫ້ກັບຄົວເຮືອນຮັບມືກັບວິກິດການສຸກເສີນໄດ້ - ຊຶ່ງລວມທັງໄພພິບັດທາງທຳມະຊາດ, ການແຜ່ລະບາດ, ວິກິດການເສດຖະກິດ ແລະ ຂໍ້ຂັດແຍ່ງ - ແລະ ສາມາດຫຼຸດຜ່ອນຜົນກະທົບ ພ້ອມທັງສະໜັບສະໜູນປະຊາຊົນພາຍຫຼັງວິກິດການສຸກເສີນ. ການປົກປ້ອງສັງຄົມ ຍັງສາມາດແກ້ໄຂຂໍ້ກີດຂວາງດ້ານເສດຖະກິດເພື່ອໃຫ້ຄົວເຮືອນທຸກຍາກ ມີຊີວິດການເປັນຢູ່ທີ່ສາມາດເພີ່ມຜະລິດຕະພາບການຜະລິດ, ເອົາໃຈໃສ່ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການເປັນຢູ່ທີ່ຍືນຍົງ[14].

ເພື່ອຮັບປະກັນໃຫ້ມາດຕະການປົກປ້ອງສັງຄົມສ້າງຜົນໄດ້ຮັບໃຫ້ມີປະສິດທິຜົນຕາມທີ່ໄດ້ສະເໜີຂ້າງເທິງ, ຈຳເປັນຕ້ອງປະຕິບັດບາງເງື່ອນໄຂສຳຄັນ ຈຶ່ງຮຽກຮ້ອງໃຫ້ນຳໃຊ້ວິທີການທີ່ມີລະບົບການຈັດຕັ້ງປະຕິບັດ.

[13] UN framework for the immediate socio-economic response to COVID-19.

[14] As part of the joint ASEAN-UN project, "Strengthening the capacity of ASEAN Member States to design and implement risk-informed and shock-responsive social protection systems for resilience (2018)" WFP has prepared a regional synthesis report and a case study on shock-responsive social protection in Lao PDR, which provides recommendations on the way forward. As part of the second phase of the project, WFP will conduct a gap analysis in Lao PDR. www.la.one.un.org/media-center/publications/496-lao-pdr-case-study-strengthening-the-capacity-of-asean-member-states-to-design-and-implement-risk-informed-and-shock-responsive-social-protection-systems-for-resilience.

## ວິທີການປະຕິບັດທີ່ເສີມສ້າງລະບົບ ໃນການຮັບມືກັບວິກິດການສຸກເສີນ

ວິທີການຮັບມືຮີບດ່ວນຂອງອົງການສະຫະປະຊາຊາດ ຕໍ່ຜົນກະທົບດ້ານສັງຄົມ-ເສດຖະກິດ ຈາກການແຜ່ລະບາດຂອງໄວຣັດ COVID-19 ປະກອບດ້ວຍ 5 ໜ້າວຽກສຳຄັນທີ່ກ່ຽວພັນກັນ ດັ່ງລຸ່ມນີ້, ຊຶ່ງສາມາດຊ່ວຍໃຫ້ບັນດາປະເທດຕ່າງໆຟື້ນຟູ ແລະ "ສ້າງຄືນໃໝ່ໃຫ້ດີກ່ວາເກົ່າ" ພ້ອມທັງ ເພື່ອກຽມພ້ອມຮັບມືກັບໄພສຸກເສີນໃນອະນາຄົດ, ລວມທັງການແຜ່ລະບາດຕ່າງໆ[15].

1. ປົກປ້ອງຕາໜ່າງການບໍລິການສາທາລະນະສຸກໃນປະຈຸບັນ ແລະ ເສີມສ້າງຄວາມອາດສາມາດລະບົບສາທາລະນະສຸກເພື່ອຮັບມືກັບການແຜ່ລະບາດຂອງໄວຣັດ COVID-19.
2. ຊ່ວຍເຫຼືອປະຊາຊົນໃນການຮັບມືກັບຄວາມທ້າທາຍຕ່າງໆໂດຍຜ່ານການປົກປ້ອງສັງຄົມ ແລະ ການບໍລິການຂັ້ນພື້ນຖານ.
3. ປົກປ້ອງວຽກເຮັດງານທຳ, ສະໜັບສະໜູນວິສາຫະກິດຂະໜາດນ້ອຍ ແລະ ກາງ, ແລະ ແຮງງານນອກລະບົບ ໂດຍຜ່ານໂຄງການຟື້ນຟູເສດຖະກິດ.
4. ໃຫ້ແນວທາງທີ່ຈຳເປັນໃນການກະຕຸ້ນດ້ານການເງິນ ແລະ ງົບປະມານລັດ ເພື່ອຊຸກຍູ້ນະໂຍບາຍເສດຖະກິດມະຫາພາກສຳລັບຜູ້ບອບບາງທີ່ສຸດ ແລະ ເພີ່ມທະວີການຮັບມືກັບວິກິດການໃນລະດັບພາກພື້ນ ແລະ ສາກົນ.
5. ສົ່ງເສີມການຮ່ວມມືທາງສັງຄົມ, ການຟື້ນຟູ ແລະ ການລົງທຶນເຂົ້າໃນການສ້າງລະບົບການຮັບມື ແລະ ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນດ້ວຍວິທີການຊຸມຊົນເປັນເຈົ້າການ.

ວິທີການທີ່ເສີມສ້າງລະບົບການຈັດຕັ້ງປະຕິບັດການປົກປ້ອງສັງຄົມ ໃນລະຫວ່າງ ແລະ ພາຍຫຼັງ ການແຜ່ລະບາດຂອງໄວຣັດ COVID-19 ປະກອບດ້ວຍ 2 ມິຕິ ດັ່ງລຸ່ມນີ້. ມິຕິທີ 1 ແມ່ນສຸມໃສ່ການພັດທະນາລະບົບການປົກປ້ອງສັງຄົມ ເພື່ອຮັບປະກັນການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ແລະ ປະສິດທິຜົນຂອງໜ້າວຽກທີ 1 ແລະ 2. ມິຕິທີ 2 ແມ່ນສຸມໃສ່ສາຍພົວພັນຂອງລະບົບປົກປ້ອງສັງຄົມ ກັບມາຕະການດ້ານນະໂຍບາຍອື່ນໆ - ຊຶ່ງກ່ຽວພັນກັບໜ້າວຽກທີ່ຍັງເຫຼືອ. ພາກນີ້ຈະອະທິບາຍຫຍໍ້ກ່ຽວກັບທັງ 2 ມິຕິນີ້.

**ມິຕິທີ 1 ກ່ຽວກັບ ການພັດທະນາລະບົບປົກປ້ອງສັງຄົມ ແລະ ການບໍລິການຂັ້ນພື້ນຖານ:** ສປປ ລາວ ກຳລັງຢູ່ໃນຂັ້ນຕອນສ້າງຕັ້ງລະບົບການປົກປ້ອງສັງຄົມແຫ່ງຊາດ ພ້ອມກັບຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມຮອດປີ 2025. ຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ ໄດ້ກຳນົດວິໄສທັດແຫ່ງຊາດຮອດປີ 2030, ເປົ້າໝາຍຍຸດທະສາດ, ຈຸດປະສົງ ແລະ ກິດຈະກຳຕ່າງໆ ເພື່ອພັດທະນາລະບົບປົກປ້ອງສັງຄົມແຫ່ງຊາດ. ໃນການຈັດຕັ້ງປະບັດຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ ສາມາດປະກອບສ່ວນສຳຄັນເຂົ້າໃນການກະຈາຍຜົນໄດ້ຮັບຈາກການເຕີບໂຕເສດຖະກິດໃຫ້ເຖິງທຸກຄົນໃນສັງຄົມ, ສ້າງຄວາມສາມັກຄີ ແລະ ການຮ່ວມມືທາງສັງຄົມ, ຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ເທົ່າທຽມ, ປົກປ້ອງປະຊາຊົນ ຈາກໄພພິບັດທາງທຳມະຊາດ ແລະ ຈາກມະນຸດສ້າງ, ພ້ອມທັງສ້າງການເຕີບໂຕທີ່ຍືນຍົງ, ເຂັ້ມແຂງ ແລະ ເປັນປະໂຫຍດສຳລັບທຸກຄົນ. ຄຸນລັກສະນະສຳຄັນໃນການອອກແບບລະບົບປົກປ້ອງສັງຄົມ ແມ່ນຄວາມສາມາດໃນການສ້າງການເຕີບໂຕທີ່ເຂັ້ມແຂງ ແລະ ຍືນຍົງໃນການຮັບມືກັບວິກິດການສຸກເສີນ - ບໍ່ພຽງແຕ່ສຳລັບຮັບມື ກັບການແຜ່ລະບາດຂອງໄວຣັດ COVID-19 ເທົ່ານັ້ນ, ແຕ່ຄວນສາມາດຮັບມືກັບວິກິດການ ເສດຖະກິດໃນອະນາຄົດ ແລະ ໄພພິບັດທີ່ກ່ຽວພັນກັບການປ່ຽນແປງດິນຟ້າອາກາດທີ່ອາດເກີດຂຶ້ນໃນອານາຄົດ, ຊຶ່ງມັກເກີດຂຶ້ນ, ແລະ ໂດຍສະເພາະທີ່ມີການເຊື່ອມໂຍງເພີ່ມຂຶ້ນກັບພາກພື້ນ ແລະ ສາກົນ.

[15] Based on UNCDF Background Note: Social Protection Proposal Lao PDR.

ໃນເວລາອອກແບບ ແລະ ຈັດຕັ້ງປະຕິບັດມາດຕະການຮັບມືກັບການແຜ່ລະບາດຂອງໄວຣັດ COVID-19 ສຳຄັນຕ້ອງຄຳນຶງເຖິງການສ້າງເປັນລະບົບ ເພາະເປັນໃຈກາງສຳຄັນເພື່ອສາມາດຮັບມືກັບວິກິດການສຸກເສີນ ແລະ ໄພພິບັດໃນອະນາຄົດໄດ້. ດັ່ງນັ້ນ, ຈຳເປັນທີ່ຕ້ອງຮັບປະກັນວ່າ: (1) ການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການທີ່ມີ ສາມາດຮອງຮັບການປ່ຽນແປງບັນທັດຖານໃນການໄດ້ຮັບອຸດໜູນ, (2) ເຄື່ອງມືໃໝ່ສາມາດນາສະເໜີໄດ້ງ່າຍ, (3) ມີແຜນກຽມພ້ອມ ໃນການປົກປ້ອງ ການຈັດສັນງົບປະມານຂອງລັດ ສຳລັບອຸດໜູນປະກັນສັງຄົມທີ່ກຳລັງຈັດຕັ້ງປະຕິບັດ, ແລະ (4) ສາມາດຂະຫຍາຍລະບົບທີ່ສ້າງເພີ່ມເຕີມ ແລະ ຮອງຮັບກັບຄວາມຕ້ອງການທີ່ເກີດຂຶ້ນໃໝ່ໄດ້ ເຊັ່ນ: ສາມາດຂະຫຍາຍການໃຫ້ອຸດໜູນ ແລະ ລະບົບທີ່ກຳນົດເປົ້າໝາຍ, ສະຖາບັນບໍລິຫານມີຄວາມສາມາດເພີ່ມເຕີມ, ແລະ ມີງົບປະມານ ແລະ ສາມາດຈັດສັນງົບປະມານ[16]. ຖ້າສົມທຽບກັບບັນດາປະເທດໃນອາຊຽນ, ສປປ ລາວ ເປັນປະເທດທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດໃນລະດັບຕ່ຳ, ແຕ່ເປັນປະເທດທີ່ມີຄວາມສ່ຽງ ແລະ ບອບບາງສູງເນື່ອງຈາກຍັງມີຄວາມສາມາດຈຳກັດໃນການຮັບມືຕໍ່ຜົນກະທົບຈາກໄພພິບັດ[17]. ພາຍຸ ແລະ ໄພນ້ຳຖ້ວມເກີດຂຶ້ນເປັນປະຈຳໃນທົດສະຫວັດທີ່ຜ່ານມາ[18]. ການພັດທະນາ ແລະ ການຮັກສາລະບົບປົກປ້ອງສັງຄົມ ເພື່ອຮັບມືກັບວິກິດການສຸກເສີນ ສາມາດຊ່ວຍຮີບດ່ວນໃນການປົກປ້ອງປະຊາຊົນຈາກຜົນກະທົບຂອງໄພພິບັດທຳມະຊາດ, ການແຜ່ລະບາດຂອງໄວຣັດ ແລະ ວິກິດການເສດຖະກິດໃນອານາຄົດໄດ້[19].

ການພັດທະນາລະບົບປົກປ້ອງສັງຄົມແຫ່ງຊາດ ເປັນການສ້າງພື້ນຖານສຳຄັນຂອງໂຄງສ້າງສະຖາບັນ, ການວາງແຜນເພື່ອຈັດສັນງົບປະມານລັດ ແລະ ທຶນຈາກແຫຼ່ງທຶນອື່ນໆເຂົ້າໃນລະບົບ, ການອອກແບບ ແລະ ຈັດຕັ້ງປະຕິບັດມາດຕະການ ປົກປ້ອງສັງຄົມຕາມວິໄສທັດໄລຍະຍາວ ດັ່ງທີ່ກຳນົດໄວ້ໃນຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມຮອດ 2025. ມາຕະການຮັບມືກັບການແຜ່ລະບາດຂອງໄວຣັດ COVID-19 ຄວນສາມາດຊຶມຊັບໄດ້ງ່າຍ ຫຼື ສາມາດຂະຫຍາຍເພີ່ມເຕີມເຂົ້າສູ່ລະບົບແຫ່ງຊາດໄດ້ງ່າຍພາຍຫຼັງສະພາບການດີຂຶ້ນ.

[16] www.opml.co.uk/files/Publications/a0408-shock-responsive-social-protection-systems/srsp-literature-review.pdf?noredirect=1

[17] WFP and OPM. 2018. Strengthening the capacity of ASEAN Member States to design and implement risk-informed and shock-responsive social protection systems for resilience – Lao PDR Case Study.

[18] The floods in September 2019 caused widespread destruction and are estimated to have displaced around 100,000 people and affected around 580,000 people.

[19] UNCDF Background Note: Social Protection in Lao PDR.

UNITED NATIONS
LAO PDR

**ອົງປະກອບສຳຄັນທີ່ກ່ຽວພັນກັນ ຂອງລະບົບການປົກປ້ອງສັງຄົມທີ່ສົມບູນແບບ:**[20]

### ນິຕິກຳ

- ✓ ພາລະບົດບາດຈະແຈ້ງຕໍ່ລັດ
- ✓ ນິຕິກຳເປັນແນວທາງສຳຄັນ ສຳລັບກົນໄກການຈັດຕັ້ງປະຕິບັດ
- ✓ ອີງໃສ່ການປຶກສາຫາລືຮ່ວມກັບທຸກພາກສ່ວນ

### ການຄຸ້ມຄອງລັດ

- ✓ ສຳຄັນຕ້ອງກຳນົດ ແລະ ຮັກສາມາດຕະຖານການຈັດຕັ້ງປະຕິບັດໃນການບໍລິຫານ ແລະ ການສະໜັບສະໜູນ
- ✓ ກະທົບຕໍ່ໂຄງສ້າງສະຖາບັນ, ອົງການຈັດຕັ້ງ ແລະ ໂຄງການ

### ກົນໄກການປະສານງານ

- ✓ ມີການແລກປ່ຽນຂໍ້ມູນຂ່າວສານ, ຊັບພະຍາກອນ, ຄວາມຮັບຜິດຊອບ
- ✓ ມີການປະສານສົມທົບທີ່ດີ ລະຫວ່າງ ໂຄງການຈັດຕັ້ງປະຕິບັດ ເພື່ອຫຼີກລ້ຽງການຈັດຕັ້ງປະຕິບັດກະແຈກກະຈາຍ ແລະ ບໍ່ມີປະສິດທິຜົນ
- ✓ ມີການປະສານງານພາຍໃນ ແລະ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ

### ຍຸດທະສາດ

- ✓ ກຳນົດວິໄສທັດແຫ່ງຊາດ
- ✓ ກຳນົດຈຸດປະສົງຍຸດທະສາດ
- ✓ ກຳນົດກິດຈະກຳເພື່ອຈັດຕັ້ງປະຕິບັດ

### ການຄຸ້ມຄອງບໍລິຫານ

- ✓ ກະດູກສັນຫຼັງຂອງລະບົບປົກປ້ອງສັງຄົມ
- ✓ ປະກອບດ້ວຍຫຼາຍຂັ້ນຕອນ
- ✓ ລະບົບການບໍລິຫານຄວນສອດຄ່ອງກັບທຶນ ແລະ ຄວາມສາມາດທີ່ມີ

### ການຕິດຕາມ & ປະເມີນຜົນ

ຊ່ວຍໃນການ:

- ✓ ຮັບປະກັນການຈັດຕັ້ງປະຕິບັດນິຕິກຳທີ່ມີ
- ✓ ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້
- ✓ ປັບປຸງການໃຫ້ບໍລິການ
- ✓ ສ້າງພື້ນຖານເພື່ອສືບຕໍ່ປັບປຸງລະບົບການປົກປ້ອງສັງຄົມ

### ການຄຸ້ມຄອງການເງິນ

ປະກອບດ້ວຍ:

- ✓ ການວາງແຜນ ແລະ ການຮັບຮູ້ຂັ້ນຕອນງົບປະມານແຫ່ງຊາດ
- ✓ ການເກັບກຳ ຫຼື ການລະດົມລາຍໄດ້ແຫ່ງຊາດ
- ✓ ການຄຸ້ມຄອງການລົງທຶນ
- ✓ ການຕິດຕາມ & ປະເມີນຜົນ ການຈ່າຍຂອງລັດ

### ລະບົບການຄຸ້ມຄອງຂໍ້ມູນ

- ✓ ມີບົດບາດເປັນໃຈກາງຂອງທຸກຂັ້ນຕອນລະບົບປົກປ້ອງສັງຄົມ, ເຊັ່ນ: ການກຳນົດເປົ້າໝາຍ, ການຈ່າຍ, ການຮ້ອງຮຽນ ແລະ ການຮ້ອງທຸກ, ການຕິດຕາມ & ປະເມີນຜົນ.
- ✓ ໃຫ້ຂໍ້ມູນເພື່ອການຕັດສິນໃຈທີ່ດີ
- ✓ ໃຫ້ການຈັດຕັ້ງປະຕິບັດມີປະສິດທິພາບ ແລະ ປະສິດທິຜົນ

**ມິຕິທີ 2 ກ່ຽວກັບ ຄວາມກ່ຽວພັນຂອງການປົກປ້ອງສັງຄົມ ແລະ ນະໂຍບາຍອື່ນໆ:** ການປະຕິບັດນະໂຍບາຍອື່ນໆ ມີຄວາມຈຳເປັນເພື່ອຮັບປະກັນຄວາມສຳເລັດ ແລະ ຄວາມຍືນຍົງຂອງລະບົບປົກປ້ອງສັງຄົມ, ເປັນຕົ້ນແມ່ນການກ່ຽນພັນຈະແຈ້ງ ລະຫວ່າງການປົກປ້ອງສັງຄົມ ແລະ ການໃຫ້ບໍລິການຂັ້ນພື້ນຖານ. ໃນເງື່ອນໄຂຂອງ ສປປ ລາວ, ການປົກປ້ອງສັງຄົມຄວນຖືເປັນມາດຕະການປະຕິບັດຄຽງຄູ່ກັບການຈັດຕັ້ງປະຕິບັດນະໂຍບາຍອື່ນໆ ແລະ ບໍ່ຄວນຖືເປັນມາດຕະການດ່ຽວທີ່ຢັ້ງຢືນເຖິງຄວາມຕ້ອງການໃຫ້ເປັນນະວັດຕະກຳໃໝ່ ພາຍໃນຂົງເຂດວຽກງານນີ້.

ສປປ ລາວ ມີວິໄສທັດໃນການພັດທະນາປະເທດ ໂດຍພັດທະນາການເຊື່ອມຈອດທາງພື້ນດິນ, ເຊື່ອມຕໍ່ກັບຕ່ອງໂສ້ການຜະລິດ ແລະ ການສະໜອງຂອງສາກົນ ແລະ ຕາໜ່າງການຜະລິດໃນພາກພື້ນ, ສ້າງໂອກາດຕ່າງໆໃນການເຊື່ອມໂຍງລະບົບເສດຖະກິດໃນວິທີທາງໃໝ່. ຜູ້ກຳນົດນະໂຍບາຍຮັບຮູ້ວ່າ ການປ່ຽນແປງຂອງຮູບແບບຕະໜ່າງການຜະລິດຈາກພາກພື້ນສູ່ທ້ອງຖິ່ນ ມີທ່າແຮງເພື່ອ (1) ຫັນປ່ຽນເສດຖະກິດທ້ອງຖິ່ນ ແລະ ເສດຖະກິດຂອງປະເທດ; (2) ສ້າງພື້ນທີ່ໃໝ່ເປັນວົງຈອນເພື່ອຄວາມຍືນຍົງດ້ານສິ່ງແວດລ້ອມ, (3) ສົ່ງເສີມ "ການສ້າງຄືນໃໝ່ໃຫ້ດີກ່ວາເກົ່າ - ເພື່ອບໍ່ປະຖິ້ມໃຜໄວ້ຂ້າງຫຼັງ", ແລະ (4) ກຽມຄວາມພ້ອມເພື່ອຮັບມືກັບວິກິດການສຸກເສີນໃນອະນາຄົດ, ລວມທັງການແຜ່ລະບາດຂອງໄວຣັດ. ການປົກປ້ອງສັງຄົມ ສາມາດປະກອບສ່ວນສຳຄັນເຂົ້າໃນການຫັນປ່ຽນດັ່ງກ່າວ, ໂດຍສະເພາະ ໃນສະພາບການທີ່ການລົງທຶນຂອງລັດມີຈຳກັດ. ສາມາດຜັກດັນການປົກປ້ອງສັງຄົມໂດຍຜ່ານການເຊື່ອມໂຍງຍຸດທະສາດ ແລະ ການຈັດຕັ້ງປະຕິບັດ ເພື່ອຊ່ວຍກຳນົດ ແລະ ສ້າງເສດຖະກິດໃໝ່ທີ່ເອົາຊຸມຊົນເປັນໃຈກາງ. ນະວັດຕະກຳໃໝ່ນີ້ ສາມາດສົ່ງເສີມຮັກສາການໃຫ້ອຸດໜູນເບ້ຍລ້ຽງປົກປ້ອງສັງຄົມ ໃນເສດຖະກິດທ້ອງຖິ່ນ, ສົ່ງເສີມການພັດທະນາເສດຖະກິດທ້ອງຖິ່ນ ໃຫ້ມີຄວາມຍືນຍົງ ແລະ ສາມາດສະໜັບສະໜູນຄວາມຍືນຍົງ ຂອງນະໂຍບາຍປົກປ້ອງສັງຄົມໄດ້.

ເມື່ອພິຈາລະນາເຖິງລັກສະນະຂອງວິກິດການທີ່ເກີດຂຶ້ນ, ການຈັດຕັ້ງປະຕິບັດລະບົບປົກປ້ອງສັງຄົມເພື່ອຮັບມືກັບວິກິດການ ແມ່ນຄຽງຄູ່ກັບການບໍລິການອື່ນໆ ເປັນຕົ້ນ ການສະໜັບສະໜູນບັນດາຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍໃນທ້ອງຖິ່ນ, ລວມທັງການບໍລິເພື່ອພັດທະນາທຸລະກິດ, ການເຂົ້າເຖິງສິນເຊື່ອ, ການເຂົ້າເຖິງການບໍລິການຈັດຫາງານ ສຳລັບ ຜູ້ທີ່ຊອກວຽກເຮັດງານທຳ, ແລະ ການພັດທະນາສີມືແຮງງານເພື່ອປັບປຸງສີມືແຮງງານ ໃຫ້ຕອບສະໜອງກັບຄວາມຕ້ອງການຂອງເສດຖະກິດ.

### ການຄຸ້ມຄອງ ແລະ ຄວາມຍືນຍົງຂອງແຫຼ່ງທຶນສະໜັບສະໜູນ

ໃນເງື່ອນໄຂທີ່ການພັດທະນາເສດຖະກິດແຫ່ງຊາດ ແລະ ສາກົນຄາດເດົາໄດ້ຍາກ, ເຫັນໄດ້ຈາກສະພາບການທີ່ຂະແໜງການເສດຖະກິດ ທີ່ຄັ້ງໜຶ່ງ ເຄີຍເປັນຂະແໜງການທີ່ເຂັ້ມແຂງ ແຕ່ຖືກກະທົບໜັກໜ່ວງ ຈາກການວິກິດການແຜ່ລະບາດໃນຄັ້ງນີ້ (ເຊັ່ນ: ຂະແໜງການກໍ່ສ້າງ, ທ່ອງທ່ຽວ, ບໍລິການດ້ານການເງິນ ແລະ ຂະແໜງພະລັງງານ) ຊຶ່ງສົ່ງຜົນກະທົບໂດຍລວມຕໍ່ເສດຖະກິດ ແລະ ຄວາມອາດສາມາດຂອງລັດຖະບານໃນການເກັບລາຍຮັບ. ອີງໃສ່ສະພາບການງົບປະມານຂອງລັດມີຈຳກັດ, ການລົງທຶນເພີ່ມເຕີມເຂົ້າໃນວຽກງານປົກປ້ອງສັງຄົມ ຈຳເປັນຕ້ອງມີມາດຕະການດ້ານນະໂຍບາຍທີ່ຕ່າງອອກໄປ ເຊັ່ນ: ການຈັດສັນຄືນລາຍຈ່າຍ ຂອງລັດ, ປະຕິບັດນະໂຍບາຍເສດຖະກິດມະຫາພາກ ທີ່ສາມາດຮອງຮັບໄດ້, ເພີ່ມປະສິດທິພາບດ້ານງົບປະມານ, ຈັດຕັ້ງປະຕິບັດວິທີການຜ່ອນຜັນໜີ້ສິນ, ແລະ ເຂົ້າຫາແຫຼ່ງທຶນຊ່ວຍເຫຼືອລ້າ ໃນຮູບແບບຂອງເງິນຊ່ວຍເຫຼືອ ຫຼື ທຶນກູ້ຢືມທີ່ມີນະໂຍບາຍພິເສດ. ການພິຈາລະນານຳໃຊ້ແຫຼ່ງທຶນຈາກການກູ້ຢືມ ອາດເປັນໂອກາດໃນການສະໜອງງົບປະມານທີ່ຈຳເປັນທີ່ສຸດ.

ທາງເລືອກທັງໝົດນີ້ ແມ່ນສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ 8 ທີ່ຮຽກຮ້ອງໃຫ້ນຳໃຊ້ສິນເຊື່ອໄລຍະຍາວ ແລະ ດອກເບ້ຍຕ່ຳ ຈາກອົງການຈັດຕັ້ງສາກົນ ເພື່ອພັດທະນາດ້ານສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ, ຂົນຂວາຍການລົງທຶນ

[20] TRANSFORM: Leadership and Transformation Learning Package on Building and Managing Social Protection Floors in Africa.

ຂອງພາກເອກກະຊົນ, ນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ ແລະ ປ້ອງກັນການຫົ່ວໄຫຼຂອງງົບປະມານ. ນອກຈາກນີ້, ຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ ກໍ່ຮຽກຮ້ອງໃຫ້ສືບຕໍ່ລະດົມທຶນ ເພື່ອການພັດທະນາ ແລະ ນຳໃຊ້ແຫຼ່ງທຶນຂອງລັດ ລວມທັງທຶນທີ່ເກັບຈາກພາສີ ແລະ ການປະກອບທຶນສົມທົບຈາກຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ.

ສຳລັບທຶນນຳໃຊ້ເຂົ້າໃນວຽກງານສະຫວັດດີການສັງຄົມ, ຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ ໄດ້ກຳນົດແຜນສ້າງກົນໄກ ກອງທຶນສະຫວັດດີການສັງຄົມຂຶ້ນ ຊຶ່ງຄາດວ່າຈະໄດ້ທຶນປະກອບຈາກແຫຼ່ງງົບປະມານພາຍໃນ, ຕະຫຼາດເງິນທຶນ ແລະ ທຶນຊ່ວຍເຫຼືອລ້າ. ພ້ອມນີ້, ກໍ່ມີແຜນລະດົມທຶນຈາກພາກເອກກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກສ່ວນບໍ່ສັງກັດລັດອື່ນໆ; ກຳນົດແຜນການຊອກຫາແຫຼ່ງທຶນໃໝ່ ແລະ ໂຄສະນາໃຫ້ລັດຖະບານຈັດສັນງົບປະມານເພີ່ມເຕີມ ເຂົ້າໃນວຽກງານປົກປ້ອງສັງຄົມ. ຖ້າຫາກລັດຖະບານຂອງ ສປປ ລາວ ພິຈາລະນາ ນຳໃຊ້ທຶນຈາກກອງທຶນສະຫວັດດີການສັງຄົມ ເພື່ອຮັບມືກັບການແຜ່ລະບາດຂອງໄວຣັດ COVID-19, ອົງການສະຫະປະຊາຊາດ ສາມາດອຳນວຍຄວາມສະດວກໃນການປຶກສາຫາລືຮ່ວມກັບບັນດາຄູ່ຮ່ວມພັດທະນາ ເພື່ອພັດທະນາວິທີການສ້າງແຫຼ່ງທຶນແບບມີສ່ວນຮ່ວມ. ສະເໜີໃຫ້ການປຶກສາຫາລືໃນປະຈຸບັນ ແລະ ໃນອະນາຄົດ ກ່ຽວກັບ ຄວາມເປັນໄປໄດ້ ດ້ານງົບປະມານສະໜັບສະໜູນ ແລະ ການບັນເທົາໜີ້ສິນ ຄຽງຄູ່ກັບ ການປຶກສາຫາລື ກ່ຽວກັບ ການຈັດສັນແຫຼ່ງງົບປະມານເພີ່ມເຕີມເຂົ້າໃນມາດຕະການປົກປ້ອງສັງຄົມ.

ພ້ອມນີ້, ສະເໜີໃຫ້ສືບຕໍ່ຊອກຫາຊ່ອງທາງ ໃນການພັດທະນາແຫຼ່ງທຶນໄລຍະຍາວ ຈາກແຫຼ່ງທຶນພາຍໃນ ເພື່ອຮັບປະກັນຄວາມຍືນຍົງຂອງລະບົບປົກປ້ອງສັງຄົມໃນອະນາຄົດ. ການເພີ່ມທະວີປະສິດທິພາບດ້ານງົບປະມານ ແລະ ການໃຊ້ຈ່າຍ, ການຈັດຕັ້ງປະຕິບັດກົດໝາຍເກັບລາຍຮັບຈາກພາສີ ແລະ ການປັບປຸງອັດຕາການເກັບພາສີ ກໍ່ເປັນຍຸດທະສາດສຳຄັນໜຶ່ງໃນການລະດົມທຶນເພີ່ມເຕີມ ໂດຍບໍ່ຈຳເປັນຕ້ອງຕັດລາຍຈ່າຍຂອງວຽກງານບູລິມາສິດອື່ນ. ເຖິງຢ່າງໃດກໍ່ຕາມ, ການປັບປຸງອັດຕາເກັບພາສີ ແມ່ນການປັບປຸງລາຍຮັບຂອງລັດ ຖ້າຫາກມີການອອກແບບລະບົບການເກັບພາສີທີ່ດີ ແລະ ການຈັດຕັ້ງປະຕິບັດມີປະສິດທິພາບ, ເຊັ່ນ: ເພີ່ມປະສິດທິພາບ ວິທີການເກັບພາສີ ແລະ ຈັດຕັ້ງປະຕິບັດກົດໝາຍ ຮ່ວມກັບການປະຕິບັດມາດຕະການຕໍ່ຕ້ານການສໍ້ລາດບັງຫຼວງ[21].

ດ້ານການບໍລິຫານການເງິນຂອງລັດ, ລັດຖະບານໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍດ້ານເງິນຕາ ແລະ ດ້ານງົບປະມານ. ໃນເງື່ອນໄຂດັ່ງກ່າວນີ້, ຈຳເປັນຕ້ອງພິຈາລະນາ ການພັດທະນາລະບົບປົກປ້ອງສັງຄົມເພີ່ມເຕີມ. ໃນ ສປປ ລາວ, ການໃຊ້ຈ່າຍງົບປະມານຂອງລັດ ແມ່ນນຳໃຊ້ລະບົບສາລະບານບັນຊີ ໃນການຈ່າຍທຸກປະເພດ ອີງຕາມກົດໝາຍ ວ່າດ້ວຍ ງົບປະມານແຫ່ງລັດ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີຫຼາຍບັນຫາທີ່ຕ້ອງໄດ້ຮັບການແກ້ໄຂໃນສາລະບານບັນຊີ ແລະ ການຂຶ້ນແຜນງົບປະມານຂອງລັດ ແລະ ການຈັດສັນງົບປະມານລັດ. ສາລະບານບັນຊີທີ່ນຳໃຊ້ປະຈຸບັນ ບໍ່ສາມາດອະນຸຍາດໃຫ້ມີການຈັດສັນງົບປະມານຕາມສາລະ ບານບັນຊີ ຫຼື ການບັນທຶກລາຍຈ່າຍ ສຳລັບ ວຽກງານປົກປ້ອງສັງຄົມ ທີ່ຈະແຈ້ງ. ເນື່ອງຈາກບໍ່ມີລະບົບໃນການຈັດຕັ້ງປະຕິບັດ, ງົບປະມານໃນການຈັດຕັ້ງປະຕິບັດວຽກງານປົກປ້ອງສັງຄົມຈຶ່ງບໍ່ຢູ່ໃນງົບປະມານ, ເຮັດໃຫ້ຈຳກັດຄວາມເປັນເຈົ້າການຂອງລັດ ແລະ ການມອບໂອນຄວາມຮັບຜິດຊອບລະບົບຕ່າງໆ, ພ້ອມທັງໂຄງການຕ່າງໆກ່ຽວກັບວຽກງານປົກປ້ອງສັງຄົມ ຈຶ່ງເອື່ອຍອີງໃສ່ແຫຼ່ງທຶນຈາກພາຍນອກ, ແລະ ເຮັດໃຫ້ຈຳກັດໃນການຂະຫຍາຍເພີ່ມເຕີມ ແລະ ບໍ່ມີຄວາມຍືນຍົງ. ດັ່ງນັ້ນ ຕ້ອງກຳນົດບັນຊີລາຍຈ່າຍສະເພາະວຽກງານປົກປ້ອງສັງຄົມ ເຂົ້າໃນສາລະບານບັນຊີ ເພື່ອສາມາດຈັດສັນງົບປະມານລະອຽດ ເຂົ້າໃນແຕ່ລະວຽກງານ ທີ່ກ່ຽວພັນກັບວຽກງານປົກປ້ອງສັງຄົມໄດ້[22].

[21] Isabel Ortiz, Matthew Cummins, Kalaivani Karunanethy. Fiscal Space for Social Protection: Options to Expand Social Investments in 187 Countries. ILO. 2015.
[22] UNCDF Background Note: Public Sector Budget Expenditures in the context of Social Protection in Lao PDR.

ສຸດທ້າຍ, ມາດຕະການຮັບມືກັບວິກິດການສຸກເສີນ ຄວນປະຕິບັດຕາມຫຼັກການສາກົນດ້ານມາດຕະຖານປະກັນສັງຄົມ ເຊັ່ນ: ຄວາມທ່ຽງທຳ, ຄວາມຍືນຍົງດ້ານການເງິນ ແລະ ສັງຄົມ, ຄວາມສາມັກຄີ ແລະ ການປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ, ລວມທັງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ. ດ້ານລະບົບປົກປ້ອງສັງຄົມແບບປະກອບທຶນສົມທົບ, ເຖິງແມ່ນວ່າ ເຫດການທີ່ເກີດຂຶ້ນ ຮຽກຮ້ອງໃຫ້ຕ້ອງປະຕິບັດມາດຕະການແກ້ໄຂຮີບດ່ວນ, ແຕ່ຄວນຄຳນຶງເຖິງຜົນກະທົບຕໍ່ກັບກອງທຶນປະກັນສັງຄົມແຫ່ງຊາດ, ເປັນຕົ້ນ 2 ຜົນກະທົບດ້ານການເງິນສຳຄັນ ເຊັ່ນ: (1) ການເພີ່ມການໃຫ້ອຸດໜູນທີ່ຈ່າຍອອກໄປແມ່ນເປັນຈຳນວນຫຼາຍ (ໂດຍສະເພາະອຸດໜູນຫວ່າງງານ), (2) ການຈ່າຍທຶນສົມທົບເຂົ້າກອງທຶນປະກັນສັງຄົມຈະຫຼຸດລົງ ເນື່ອງຈາກຈຳນວນຜູ້ປະກັນຕົນສະມາຊິກຂອງກອງທຶນຫຼຸດລົງ, ເງິນເດືອນຫຼຸດລົງ. ລັດຖະບານຮັບຜິດຊອບໂດຍລວມ ເພື່ອຮັບປະກັນໃຫ້ກອງທຶນປະກັນສັງຄົມມີຄວາມຍືນຍົງ. ພ້ອມນີ້, ໃນຖານະທີ່ລັດຖະບານກໍ່ເປັນຜູ້ໃຊ້ແຮງງານ, ລັດຖະບານຄວນສືບຕໍ່ຈ່າຍເງິນສົມທົບ ເຂົ້າກອງທຶນປະກັນສັງຄົມໃນໄລຍະວິກິດການແຜ່ລະບາດຂອງໄວຣັດເຊັ່ນກັນ ເພື່ອບໍ່ໃຫ້ຄວາມຍືນຍົງຂອງທຶນປະກັນສັງຄົມ ມີຄວາມສ່ຽງ, ໂດຍສະເພາະໃນເວລານີ້ ທີ່ລະບົບການປົກປ້ອງສັງຄົມມີຄວາມຕ້ອງການລາຍຈ່າຍເພີ່ມເຕີມ ເພື່ອຕອບສະໜອງກັບຄວາມຕ້ອງການທີ່ເພີ່ມຂຶ້ນ ແລະ ລັດຖະບານຍັງສືບຕໍ່ປະສົບກັບສະພາບຄ່ອງໂຕດ້ານການເງິນຂອງລັດໃນໄປຕໍ່ໄປ.

## ການກຽມຄວາມພ້ອມໃນການໃຫ້ອຸດໜູນປົກປ້ອງສັງຄົມ

**ພາບວາດຂັ້ນຕອນການບໍລິຫານ ແລະ ລະບົບສະໜັບສະໜູນພື້ນຖານ:**[23]




[23] TRANSFORM: Leadership and Transformation Learning Package on Building and Managing Social Protection Floors in Africa.

ອີງຕາມຄວາມອາດສາມາດໃນການຈັດຕັ້ງປະຕິບັດໃນປະຈຸບັນຂອງລັດຖະບານ, ການຮັບມືກັບວິກິດການແຜ່ລະບາດຂອງໄວຣັດ COVID-19 ຕ້ອງນຳໃຊ້ລະບົບການປົກປ້ອງສັງຄົມທີ່ມີຢູ່ແລ້ວ ແລະ ລະບົບທີ່ສ້າງຂຶ້ນໃໝ່, ພ້ອມທັງການຄຸ້ມຄອງ ແລະ ບໍລິຫານລະບົບຂໍ້ມູນ. ເພື່ອໃຫ້ການຮັບມື ມີປະສິດທິພາບ ຕ້ອງໄດ້ປັບປຸງວິທີການໃຫ້ມີຄວາມງ່າຍດາຍ ແລະ ມີປະສິດທິຜົນ ໃນຂະດຽວກັນກໍ່ຕ້ອງປະຕິບັດມາດຕະການຮັກສາໄລຍະຫ່າງ ແລະ ມາດຕະການອື່ນໆເພື່ອຄວາມປອດໄພ ເພື່ອບໍ່ໃຫ້ເກີດການແຜ່ລະບາດຂອງໄວຣັດ. ມາດຕະການຮັບມື ສາມາດຈັດຕັ້ງປະຕິບັດໄດ້ 2 ປະເພດ ອີງຕາມຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດໃຫ້ວ່ອງໄວດັ່ງນີ້:

- ຈັດຕັ້ງປະຕິບັດບັນດາວິທີການ ທີ່ອີງໃສ່ລະບົບ ແລະ ການຂຶ້ນທະບຽນ ທີ່ມີແລ້ວ. ຖ້ານຳໃຊ້ວິທີການນີ້ ບໍ່ຈຳເປັນເກັບກຳຂໍ້ມູນຄືນໃໝ່ ຫຼື ສ້າງຖານຂໍ້ມູນໃໝ່ຂຶ້ນ ເພາະການເກັບກຳຂໍ້ມູນໃໝ່ຕ້ອງໃຊ້ເວລາ ແລະ ງົບປະມານສູງສົມຄວນ. ຕົວຢ່າງຂໍ້ມູນທີ່ສາມາດນຳໃຊ້ໄດ້ແມ່ນ (1) ຖານຂໍ້ມູນ ກ່ຽວກັບ ຜູ້ທຸກຍາກທີ່ອຳນາດການປົກຄອງຂັ້ນເມືອງມີໄວ້ແລ້ວ ແລະ ເປັນປະຊາຊົນກຸ່ມທີ່ຖືກຍົກເວັ້ນຈ່າຍເງິນສົບທົບຂອງລະບົບປະກັນສຸຂະພາບ; (2) ຖານຂໍ້ມູນແຮງງານເຄື່ອນຍ້າຍຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ແລະ (3) ຖານຂໍ້ມູນຜູ້ປະກັນຕົນທີ່ເປັນສະມາຊິກຂອງກອງທຶນປະກັນສັງຄົມແຫ່ງຊາດ ທີ່ຍັງປະກອບທຶນສົມທົບເຂົ້າກອງທຶນ ແລະ ຢຸດປະກອບທຶນສົມທົບ.
- ສາມາດພິຈາລະນາຈັດຕັ້ງປະຕິບັດບັນດາວິທີການໃຫ້ອຸດໜູນປະຊາຊົນຜູ້ທີ່ບໍ່ມີຂໍ້ມູນຂຶ້ນທະບຽນໃນຖານຂໍ້ມູນໃດໆ. ວິທີການນີ້ ຕ້ອງໄດ້ໃຊ້ເວລາໃນການເກັບກຳຂໍ້ມູນໃໝ່ທັງໝົດ ກ່ຽວກັບ ບຸກຄົນ ແລະ ຄົວເຮືອນທີ່ຈະໃຫ້ອຸດໜູນ, ຊຶ່ງແນ່ນອນ ຕ້ອງໄດ້ໃຊ້ເວລາ ແລະ ງົບປະມານເພີ່ມເຕີມ. ອຳນາດການປົກຄອງທ້ອງຖິ່ນ ສາມາດເປັນຕົວຫຼັກໃນການຈັດຕັ້ງວິທີການນີ້ ແລະ ຄວນນຳໃຊ້ຂໍ້ມູນທີ່ມີຢູ່ແລ້ວໃຫ້ຫຼາຍທີ່ສຸດ. ຂໍ້ມູນດັ່ງກ່າວກໍ່ເປັນຂໍ້ມູນທີ່ຈຳເປັນ ເພື່ອຈັດຕັ້ງປະຕິບັດການໃຫ້ອຸດໜູນປົກປ້ອງສັງຄົມໃໝ່ ຄືໂຄງການໃຫ້ອຸດໜູນເບ້ຍລ້ຽງແມ່ຖືພາ ແລະ ເດັກນ້ອຍ, ເບ້ຍລ້ຽງ/ເບ້ຍບຳນານຜູ້ສູງອາຍຸ, ຫຼື ອຸດໜູນລາຍໄດ້ ໃຫ້ແຮງງານຂະແໜງກະສິກຳ.

ໃຈກາງສຳຄັນຂອງການຮັບມືກັບວິກິດການສຸກເສີນນີ້ ໃຫ້ມີປະສິດທິຜົນ ແມ່ນຂຶ້ນກັບການຈັດຕັ້ປະຕິບັດ ທີ່ນຳໃຊ້ໂຄງສ້າງທີ່ມີຢູ່ແລ້ວໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ[24]. ອຳນາດການປົກຄອງຂັ້ນທ້ອງຖິ່ນ ໃນທຸກປະເທດທົ່ວໂລກ ເປັນຫຼັກໃນການຈັດຕັ້ງປະຕິບັດ ວິທີການຮັບມືກັບວິກິດການແຜ່ລະບາດຂອງໄວຣັດ COVID-19. ການສຶກສາວິໄຈ ແລະ ການຮັບມືຂອງລັດຖະບານໃນທຸກປະເທດທົ່ວໂລກ ສະແດງໃຫ້ເຫັນວ່າ ການກຽມຄວາມພ້ອມຂອງອຳນາດການປົກຄອງຂັ້ນທ້ອງຖິ່ນ, ພ້ອມທັງຄວາມອາດສາມາດດ້ານພື້ນຖານໂຄງລ່າງ, ແລະ ດ້ານຊັບພະຍາກອນມະນຸດ, ການເຂົ້າເຖິງກອງທຶນສຸກເສີນ, ແລະ ການປະສານງານ ແລະ ສື່ສານກັບຂັ້ນສູນກາງ ເປັນມາດຕະການສຳຄັນ ເພື່ອຮັບປະກັນການຟື້ນຟູໃຫ້ໄດ້ໄວ ແລະ ໃນການສະໜອງການບໍລິການທີ່ຈຳເປັນໃຫ້ກັບປະຊາຊົນ. ເຫດຜົນທີ່ຕ້ອງໃຫ້ມີສ່ວນຮ່ວມ ຂອງອຳນາດການປົກຄອງໃນຂັ້ນທ້ອງຖິ່ນ ອີງໃສ່ການແບ່ງຂັ້ນຄຸ້ມຄອງບໍລິຫານຂອງປະເທດ ເພື່ອຮັບປະກັນປະສິດທິພາບ (ເນື່ອງຈາກອຳນາດການປົກຄອງທ້ອງຖິ່ນ ມີຄວາມເຂົ້າໃຈດີ ເຖິງຄວາມຕ້ອງການຕົວຈິງຂອງທ້ອງຖິ່ນ), ເພື່ອຮັບປະກັນຄວາມສະເໝີພາບ (ເນື່ອງຈາກອຳນາດການປົກຄອງທ້ອງຖິ່ນ ໃກ້ຊິດກັບປະຊາຊົນ ແລະ ຈັດຕັ້ງປະຕິບັດຮ່ວມກັບປະຊາຊົນ), ເພື່ອຮັບປະກັນການບໍລິການ (ເນື່ອງຈາກອຳນາດການປົກຄອງທ້ອງຖິ່ນ ມີຂໍ້ມູນ ແລະ ຄວາມຮູ້ກ່ຽວກັບທ້ອງຖິ່ນ ແລະ ເງື່ອນໄຂສະພາບດ້ານຊັບພະຍາກອນທີ່ຈຳກັດ), ເພື່ອຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ລະບຽບການ (ເປັນພື້ນຖານສຳຄັນ ເພື່ອຮັບປະກັນການຮ່ວມມືກັບສັງຄົມເພື່ອສະຖຽນລະພາບ ແລະ ຄວາມປອງດອງໃນສັງຄົມ)[25]. ອຳນາດການປົກຄອງຂັ້ນທ້ອງຖິ່ນ ທຸກເມືອງໃນ ສປປ ລາວ ຮັບຜິດຊອບແຕ່ລະຂົງເຂດພາຍໃຕ້ການປົກຄອງຂອງຕົນ ລວມທັງເຂດ

[24] UN framework for the immediate socio-economic response to COVID-19.
[25] UNCDF: Guidance Note for Immediate Responses to the COVID-19 Recommended for Local Governments.

ພື້ນທີ່ ໆເຂົ້າເຖິງຍາກ. ອຳນາດການປົກຄອງທ້ອງຖິ່ນ ໃຫ້ບໍລິການທີ່ຈຳເປັນໃນທຸກຂະແໜງການ, ມີລາຍຮັບຈາກການໃຫ້ບໍລິການ ແລະ ໄດ້ຮັບງົບປະມານໃນການລົງທຶນຂອງທ້ອງຖິ່ນ. ອົງການຈັດຕັ້ງຂອງອຳນາດການປົກຄອງຂັ້ນທ້ອງຖິ່ນ ມີການນຳເປັນຜູ້ມີອາຍຸສູງ ຫຼື ມີລັກສະນະສາມາດນຳພາຊຸມຊົນ ເພື່ອຊ່ວຍສ້າງຄວາມໝັ້ນໃຈ ແລະ ຄວາມເຊື່ອໝັ້ນພາຍໃນຊຸມຊົນ[26].

ອຳນາດການປົກຄອງຂັ້ນທ້ອງຖິ່ນ ສາມາດເປັນຊ່ອງທາງຮັບຜິດຊອບໃນການໃຫ້ອຸດໜູນປົກປ້ອງສັງຄົມ ເນື່ອງຈາກເຂົາເຈົ້າມີຄວາມສາມາດໃນການເຂົ້າເຖິງກຸ່ມເປົ້າໝາຍ ເພື່ອຈ່າຍອຸດໜູນໃຫ້ກັບຄົວເຮືອນ ແລະ ປະຊາຊົນໃນເຂດຊົນນະບົດ. ການມີສ່ວນຮ່ວມຂອງອຳນາດການປົກຄອງຂັ້ນທ້ອງຖິ່ນ ສາມາດຮັບໃຊ້ໃນຂົງເຂດວຽກງານ ເຊັ່ນ: ເພີ່ມຄວາມສາມາດຂອງລະບົບສາທາລະນະສຸກທ້ອງຖິ່ນ, ສະໜັບສະໜູນການບໍລິການສັງຄົມ ແລະ ລະບົບສະໜັບສະໜູນຈິດສັງຄົມ, ສ້າງຄວາມຮັບຮູ້ໃຫ້ກັບຊຸມຊົນ ແລະ ລະດົມການຮ່ວມມືຂອງຊຸມຊົນ, ສົ່ງເສີມຄວາມສະຫງົບສຸກ ແລະ ລະບຽບຂອງສັງຄົມ ເພື່ອປ້ອງກັນ ແລະ ຮັກສາບໍ່ໃຫ້ມີການແຜ່ລະບາດຂອງໄວຣັດ, ແລະ ສະໜອງການບໍລິການທີ່ຈຳເປັນ ແລະ ມາດຕະການຜ່ອນຜັນ. ແຜນວຽກຕ່າງໆທີ່ຊຸມຊົນເປັນຜູ້ສ້າງ ແລະ ສະເໜີຕໍ່ອຳນາດການປົກຄອງທ້ອງຖິ່ນ ແລະ ຂັ້ນແຂວງເພື່ອຂໍອະນຸມັດສາມາດນຳໃຊ້ເພື່ອພັດທະນາກິດຈະກຳສົ່ງເສີມຊີວິດການເປັນຢູ່ຂອງຊຸມຊົນ ຫຼື ວຽກສາທາລະນະໄດ້[27]. ອົງການເຄືອຂ່າຍສະຫະປະຊາຊາດ ໂດຍສະເພາະອົງການທີ່ສະໜັບສະໜູນສະເພາະວຽກງານຮັບມືກັບໄພພິບັດ ເຊັ່ນ: ອົງການອາຫານໂລກ ພ້ອມໃຫ້ການສະໜັບສະໜູນດ້ານວິຊາການ ແລະ ພັດທະນາຄວາມອາດສາມາດ ໃຫ້ກັບລັດຖະບານໃນການຮັບມືກັບວິກິດການ ທີ່ມີປະສິດທິພາບ ແລະ ປະສິດທິຜົນ.

ພ້ອມດຽວກັນ ການຈ່າຍອຸດໜູນຄວນປະຕິບັດວິທີການບໍ່ໃຫ້ມີການໃກ້ຊິດ ແລະ ສຳພັດກັນ. ລັດຖະບານ ສາມາດສົ່ງເສີມໃຫ້ທຸກສະຖາບັນຮັບຜິດຊອບຈ່າຍອຸດໜູນ ນຳໃຊ້ການໂອນເງິນອຸດໜູນໂດຍຜ່ານລະບົບອີເລັກໂທຣນິກ ເພື່ອຫຼຸດຜ່ອນການສຳພັດໂດຍກົງ ເຊັ່ນ: ການສົ່ງໃບສະເໜີ ແລະ ການຈ່າຍເງິນອຸດໜູນ. ເຖິງຢ່າງໃດກໍ່ຕາມ, ການສຳພັດໃກ້ຊິດ ອາດມີຄວາມຈຳເປັນໃນການຂຶ້ນທະບຽນ ແລະ ໃນການຈ່າຍອຸດໜູນ, ໂດຍສະເພາະຜູ້ທີ່ບໍ່ມີ ຫຼື ບໍ່ໃຊ້ເທັກໂນໂລຊີ. ໃນກໍລະນີນີ້, ສະຖານທີ່ບ່ອນຂຶ້ນທະບຽນ ແລະ ບ່ອນຈ່າຍເງິນອຸດໜູນນັ້ນ ສາມາດອອກແບບໃຫ້ມີຄວາມຮັບປະກັນ ການຮັກສາໄລຍະຫ່າງໄດ້.

ສຳລັບການອຸດໜູນທີ່ກ່ຽວພັນກັບການຈ້າງງານ, ຄວນປະຕິບັດອີງຕາມລະບົບ ແລະ ກົນໄກທີ່ມີຢູ່ແລ້ວ ພາຍໃຕ້ກອງທຶນປະກັນສັງຄົມແຫ່ງຊາດ ເຊັ່ນ: ອຸດໜູນຫວ່າງງານ, ແລະ ກຸ່ມແຮງງານໃໝ່ ທີ່ກອງທຶນປະກັນສັງຄົມສາມາດເຂົ້າເຖິງໄດ້ ເຊັ່ນ: ແຮງງານນອກລະບົບໃນຕົວເມືອງ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ຕ້ອງມີການຕິດຕາມລະບົບປົກປ້ອງສັງຄົມເປັນປະຈຳ, ມີການລາຍງານ ແລະ ການປະເມີນຜົນເປັນປະຈຳ. ການຕິດຕາມ ແລະ ປະເມີນຜົນ ຕ້ອງປະກອບດ້ວຍ (1) ອົງກອນຈັດຕັ້ງປະຕິບັດ , (2) ແຫຼ່ງຂໍ້ມູນທີ່ຕ້ອງການ, (3) ກະແສການແລກປ່ຽນຂໍ້ມູນທີ່ເຊື່ອຖືໄດ້ ລະຫວ່າງ ແລະ ພາຍໃນລັດຖະບານ ແລະ ຄູ່ຮ່ວມງານກ່ຽວພັນກັບບັນດາຕົວຊີ້ວັດ ທີ່ຕ້ອງສ້າງຂຶ້ນສຳລັບແຕ່ລະໆບົບປົກປ້ອງສັງຄົມ. ຄວນສ້າງຄວາມອາດສາມາດຂອງພະນັກງານວິຊາການເພື່ອການຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດ ຂອງທຸກລະບົບປົກປ້ອງສັງຄົມ ໂດຍການຝຶກອົບຮົມ ແລະ ການປະຕິບັດວຽກຕົວຈິງ. ລະບົບການຕິດຕາມ ແລະ ປະເມີນຜົນທີ່ດີ ຈະສະໜອງຫຼັກຖານຕົວຈິງ ເພື່ອສະໜັບສະໜູນໃຫ້ສາມາດຂະຫຍາຍການປົກຄຸມໂຄງການກ້ວາງອອກ, ເພີ່ມມູນຄ່າການອຸດໜູນ ແລະ ປັບປຸງເພື່ອເພີ່ມງົບປະມານລັດ ເຂົ້າໃນວຽກງານປົກປ້ອງສັງຄົມ.

---

[26] Based on UNCDF Background Note: Social Protection in Lao PDR.

[27] Based on UNCDF Background Note: Social Protection in Lao PDR.

UNITED NATIONS
LAO PDR

## ການປົກປ້ອງສັງຄົມໃນ ສປປ ລາວ

ສປປ ລາວ ກໍາລັງຢູ່ໃນໄລຍະເລີ່ມຕົ້ນຂອງການພັດທະນາລະບົບປົກປ້ອງສັງຄົມແຫ່ງຊາດ. ການປົກຄຸມຂອງລະບົບປົກປ້ອງສັງຄົມໃນ ສປປ ລາວ ຍັງຕໍ່າຫຼາຍ ຖ້າທຽບກັບມາດຕະຖານໃນພາກພື້ນ. ງົບປະມານໃຊ້ຈ່າຍເຂົ້າໃນວຽກງານປົກປ້ອງສັງຄົມ ກວມເອົາພຽງແຕ່ 1.6% ຂອງລວມຍອດຜະລິດຕະພັນພາຍໃນ ຫຼື ຈີດີພີ ເທົ່ານັ້ນ - ພຽງແຕ່ປະມານ 0.7% (ຖ້າບໍ່ລວມ 0.9% ຂອງການໃຊ້ຈ່າຍເຂົ້າໃນວຽກງານສາທາລະນະສຸກ). ປະຈຸບັນ, ການລົງທຶນຂອງ ສປປ ລາວ ເຂົ້າໃນວຽກງານປົກປ້ອງສັງຄົມ ຢູ່ໃນອັດຕາສ່ວນຕໍ່າກ່ວາ ປະເທດອື່ນໃນພາກພື້ນ. ຄວາມທ້າທາຍໃນການພັດທະນາລະບົບປົກປ້ອງສັງຄົມໃນ ສປປ ລາວ ທີ່ລະບຸໄວ້ໃນບົດລາຍງານຜົນການປະເມີນວຽກງານປົກປ້ອງສັງຄົມ ໂດຍການປຶກສາຫາລືແຫ່ງຊາດ ຂອງອົງການສະຫະປະຊາຊາດ ປະກອບດ້ວຍ (1) ລະບົບການປົກປ້ອງສັງຄົມ ຍັງຈັດຕັ້ງປະຕິບັດກະແຈກກະຈາຍ ແລະ ບໍ່ລວມສູນ, (2) ຍັງມີຄວາມທ້າທາຍໃນການຈັດຕັ້ງປະຕິບັດກົດໝາຍຕໍ່ຂະແໜງການໃນລະບົບ, (3) ການປົກຄຸມຂອງລະບົບປົກປ້ອງສັງຄົມ ຍັງມີຂອບເຂດຈໍາກັດ, (4) ແຮງງານນອກລະບົບ ບໍ່ມີການປົກປ້ອງສັງຄົມ, ແລະ (5) ແຫຼ່ງທຶນສະໜັບສະໜູນວຽກງານປົກປ້ອງສັງຄົມ ສໍາລັບລະບົບບໍ່ປະກອບທຶນສົມທົບ ຍັງບໍ່ຕໍ່ເນື່ອງ ແລະ ແນ່ນອນ.

ເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້, ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮອງເອົາຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມຮອດປີ 2025, ຊຶ່ງກໍານົດແຜນການເພື່ອພັດທະນາລະບົບປົກປ້ອງສັງຄົມໃນ ສປປ ລາວ ແລະ ແນການສ້າງຕັ້ງຄະນະກໍາມະການຊີ້ນໍາວຽກງານປົກປ້ອງສັງຄົມແຫ່ງຊາດ ເພື່ອຮັບຜິດຊອບການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດສະບັບດັ່ງກ່າວ, ເພີ່ມທະວີລະບົບການປະສານງານ ລະຫວ່າງ ອົງກອນຈັດຕັ້ງປະຕິບັດ ແລະ ການບໍລິຫານໃນແຕ່ລະຂັ້ນ ເຊັ່ນ: ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງການປະສານງານກັບບັນດາຄູ່ຮ່ວມພັດທະນາ, ການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຍຸດທະ, ລວມທັງການປະເມີນສະພາບລວມຂອງລະບົບປົກປ້ອງສັງຄົມໃນປະເທດ ແລະ ການສັງລວມບັນຫາຮີບດ່ວນຕ່າງໆທີ່ເກີດຂຶ້ນ.

ຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມຮອດປີ 2025 ໄດ້ກໍານົດປະເພດການປົກປ້ອງສັງຄົມໃນ ສປປ ລາວ ອອກເປັນ 3 ລະບົບຄື: ລະບົບສະຫວັດດີການສັງຄົມ (ອຸດໜູນແບບບໍ່ປະກອບທຶນສົມທົບ), ລະບົບປະກັນສັງຄົມ (ອຸດໜູນແບບປະກອບທຶນສົມທົບ), ແລະ ລະບົບປະກັນສຸຂະພາບ.

### ລະບົບສະຫວັດດີການສັງຄົມ

ໃນ ສປປ ລາວ, ໂຄງການອຸດໜູນດ້ານສະຫວັດດີການສັງຄົມ ປະກອບດ້ວຍ ການອຸດໜູນເປັນເງິນ, ເປັນວັດຖຸ ແລະ ການບໍລິການສັງຄົມ ເຊັ່ນ: ການອຸດໜູໄລຍະສັ້ນເປັນວັດຖຸ ໃຫ້ຜູ້ເຄາະຮ້າຍຈາກລະເບີດຕົກຄ້າງບໍ່ທັນແຕກ, ຜູ້ເຄາະຮ້າຍຈາກການຄ້າມະນຸດ, ກໍາພ້າ ກໍາພອຍ. ໂຄງການຫຼັກ ແມ່ນໂຄງການອາຫານກາງເວັນໃນໂຮງຮຽນ ຊຶ່ງນັກຮຽນຂັ້ນປະຖົມ ແລະ ມັດທະຍົມໃນເມືອງທຸກຍາກໄດ້ຮັບອາຫານຮ້ອນໃນໂຮງຮຽນ. ໂຄງການດັ່ງກ່າວ ໄດ້ມີການປັບປ່ຽນໄລຍະວິກິດການແຜ່ລະບາດຂອງໄວຣັດ COVID-19 ໂດຍໃຫ້ນັກຮຽນເອົາອາຫານກັບບ້ານ. ວິທີການນີ້ ສາມາດເປັນຊ່ອງທາງໜຶ່ງ ເພື່ອພັດທະນາລະບົບປົກປ້ອງສັງຄົມເພີ່ມເຕີມ ໃນມາດຕະການຮັບມືກັບວິກິດສຸກເສີນ. ຍັງມີໂຄງການໃຫ້ທຶນການສຶກສາເພື່ອຮຽນວິຊາຊີບ, ກອງທຶນຫຼຸດຜ່ອນຄວາມທຸກຍາກ ຊຶ່ງມີຈຸດປະສົງເພື່ອປັບປຸງການເຂົ້າເຖິງ ການອຸດໜູນງົບປະມານຂະໜາດໃຫຍ່ ທີ່ສາມາດຂະຫຍາຍເພີ່ມເຕີມ ແລະ ເຂົ້າເຖິງປະຊາຊົນຜູ້ບອບບາງ ໃນໄລຍະຕ້ານການລະບາດຂອງໄວຣັດ COVID-19[28].

ອີງຕາມຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມຮອດປີ 2025, ລັດຖະບານແຫ່ງ ສປປ ລາວ ມີແຜນຈະຈັດຕັ້ງປະຕິບັດໂຄງການໃຫ້ເງິນອຸດໜູນແມ່ຖືພາ ແລະ ເດັກກຸ່ມ 3 ປີ ໃນເມືອງທຸກຍາກທີ່ສຸດ ຈຸດປະສົງແມ່ນເພື່ອໃຫ້ແມ່ຖືພາ ແລະ ເດັກໄດ້ຮັບ

[28] Summary report Assessment-based national dialogue on social protection Lao PDR, ILO 2017.

ສານອາຫານທີ່ພຽງພໍຈົນເດັກຮອດອາຍຸ 2 ປີ - ດັ່ງນັ້ນ ຈຶ່ງໃຫ້ອຸດໜູນໃນໄລຍະ 1.000 ວັນທໍາອິດຂອງຊີວິດເດັກນ້ອຍໃນຄອບຄົວທຸກຍາກ ແລະ ບອບບາງ[29] ຊຶ່ງເປັນເຄື່ອງມືດ້ານນະໂຍບາຍທີ່ໃຫ້ການຄໍ້າປະກັນລາຍໄດ້ຂັ້ນຕໍ່າສຸດ ກັບຄົວເຮືອນທີ່ຂາດເຂີນ, ພ້ອມທັງເປັນບາດກ້າວສໍາຄັນ ໃນການພັດທະນາລະບົບປົກປ້ອງສັງຄົມ ເພື່ອຮັບມືກັບວິກິດການສຸກເສີນ, ການແຜ່ລະບາດຂອງໄວຣັດ COVID-19 ແລະ ວິກິດການອື່ນໆໃນອານາຄົດ.

**ລະບົບປະກັນສັງຄົມ**

ລະບົບປະກັນສັງຄົມ ພາຍໃຕ້ກອງທຶນປະກັນສັງຄົມແຫ່ງຊາດ ແມ່ນກວມເອົາແຮງງານໃນພາກລັດ ແລະ ພາກເອກກະຊົນຈໍານວນໜຶ່ງ. ລະບົບປະກັນສັງຄົມ ປະກອບມີອຸດໜູນປິ່ນປົວສຸຂະພາບ, ອຸດໜູນບໍານານ, ອຸດໜູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ (ລວມທັງອຸດໜູນເສຍອົງຄະໄລຍະຍາວ), ອຸດໜູນປ່ວຍການ, ອຸດໜູນອອກລູກ ຫຼື ຫຼູລູກ, ອຸດໜູນຫວ່າງງານ, ອຸດໜູນເສຍຊີວິດ, ແລະ ອຸດໜູນສະມາຊິກຄອບຄົວຂອງຜູ້ເສຍຊີວິດ. ແຕ່ປະຊາກອນກຸ່ມທີ່ໄດ້ຮັບອຸດໜູນເຫຼົ່ານີ້ ມີພຽງຈໍານວນໜ້ອຍ ເນື່ອງຈາກແຮງງານໃນລະບົບ ມີພຽງ 17% ຂອງກໍາລັງແຮງງານທັງໝົດເທົ່ານັ້ນ[30]. ກໍາລັງແຮງງານລາວສ່ວນຫຼາຍ (83%) ແມ່ນແຮງງານອິດສະລະ ແລະ ແຮງງານນອກລະບົບ ທີ່ບໍ່ໄດ້ຮັບອຸດໜູນປະກັນສັງຄົມ.

**ອຸດໜູນຫວ່າງງານ:** ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມແຫ່ງຊາດ ຈ່າຍເງິນສົມທົບເຂົ້າກອງທຶນເປັນປະຈໍາ ມີສິດໄດ້ຮັບອຸດໜູນຫວ່າງງານ ໃນເວລາຫວ່າງງານ ຈາກຜົນກະທົບຂອງການແຜ່ລະບາດຂອງໄວຣັດ COVID-19. ອຸດໜູນທີ່ໄດ້ຮັບ ເທົ່າກັບ 60% ຂອງເພດານລາຍໄດ້ ທີ່ປະກັນຕົນໃນໄລຍະ 6 ເດືອນຜ່ານມາ. ໄລຍະການໄດ້ຮັບອຸດໜູນຫວ່າງງານ ແມ່ນ 3 ເດືອນ ຫາ 12 ເດືອນ ອີງຕາມໄລຍະເວລາຂອງການປະກອບທຶນສົມທົບເຂົ້າກອງທຶນ. ອຸດໜູນຫວ່າງງານ ຈ່າຍໃຫ້ພາຍຫຼັງ 30 ວັນທີ່ຫວ່າງງານ ອີງຕາມເງື່ອນໄຂການປະກອບທຶນສົມທົບເປັນໄລຍະເວລາ 12 ເດືອນ ໃນໄລຍະ 24 ເດືອນຜ່ານມາ[31]. ປະຈຸບັນ ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ເປັນພະນັກງານລັດຖະກອນ ຈໍານວນ 184,747 ຄົນ, ພະນັກງານພາກເອກກະຊົນ 117, 509 ຄົນ ທີ່ມີສິດໄດ້ຮັບອຸດໜູນຫວ່າງງານ. ປະມານ 50% ຂອງຫົວໜ່ວຍວິສາຫະກິດພາກເອກກະຊົນ ທີ່ບໍ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນໃຫ້ພະນັກງານຕົນ, ເຮັດໃຫ້ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມພຽງແຕ່ຈໍານວນໜຶ່ງເທົ່ານັ້ນໄດ້ຮັບອຸດໜູນ, ສ່ວນອີກຈໍານວນຫຼາຍ ອາດເສຍສິດບໍ່ໄດ້ຮັບອຸດໜູນ[32].

**ອຸດໜູນປ່ວຍການ:** ໃນ ສປປ ລາວ, ພະນັກງານໃນພາກລັດ ແລະ ພາກເອກກະຊົນ ມີສິດໄດ້ຮັບອຸດໜູນປ່ວຍການ. ແຮງງານອິດສະລະ ຍັງບໍ່ໄດ້ຮັບສິດອຸດໜູນນີ້. ອຸດໜູນປ່ວຍການ ແມ່ນຈ່າຍໃຫ້ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ຜູ້ທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນຢ່າງໜ້ອຍເປັນເວລາ 3 ເດືອນຂຶ້ນໄປ. ດັ່ງນັ້ນ, ແຮງງານທີ່ຫາກໍ່ໄດ້ວຽກເຮັດ ແມ່ນບໍ່ໄດ້ຮັບສິດອຸດໜູນນີ້. ຜູ້ໃຊ້ແຮງງານ ຮັບຜິດຊອບຈ່າຍເງິນເດືອນເຕັມ 30 ວັນທໍາອິດ ທີ່ຜູ້ອອກແຮງງານເຈັບປ່ວຍ, ຈາກນັ້ນກອງທຶນປະກັນສັງຄົມຈຶ່ງສືບຕໍ່ຈ່າຍອຸດໜູນປ່ວຍການໃຫ້ກັບສະມາຊິກຜູ້ປະກັນຕົນ. ອຸດໜູນປ່ວຍການທີ່ກອງທຶນປະກັນສັງຄົມ ຈ່າຍໃຫ້ຮອດ 6 ເດືອນໃນມູນຄ່າ 70% ຂອງເພດານ ລາຍໄດ້ປະກັນຕົນ. ຖ້າຫາກເງື່ອນໄຂສຸຂະພາບບໍ່ດີຂຶ້ນ, ຈະສືບຕໍ່ໄດ້ຮັບອຸດໜູນປ່ວຍການຕື່ມອີກ 6 ເດືອນໃນມູນຄ່າ 60% ຂອງເພດານລາຍໄດ້ປະກັນຕົນ ຫຼື ຖືກໂອນໄປເປັນຜູ້ໄດ້ຮັບອຸດໜູນເສຍອົງຄະໄລຍະຍາວເລີຍ.

**ການປັບປຸງການປະກອບທຶນສົມທົບ ແລະ ການຈ່າຍພາສີ:** ຫຼາຍປະເທດ, ລວມທັງ ສປປ ລາວ ໄດ້ປະກາດນະໂຍບາຍຜ່ອນຜັນການປະກອບທຶນສົມທົບ ເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ແລະ ການຈ່າຍພາສີໃຫ້ລັດ ເປັນມາດຕະການໜຶ່ງໃນການຮັບມືກັບຜົນ

---

[29] National Social Protection Strategy 2025.
[30] Summary report Assessment-based national dialogue on social protection Lao PDR, ILO 2017.
[31] Summary report Assessment-based national dialogue on social protection Lao PDR, ILO 2017.
[32] ILO Preliminary Financial Assessment, 2020.

ກະທົບຈາກການລະບາດຂອງໄວຣັດ COVID-19. ເຖິງແມ່ນວ່າ ມາດຕະການດັ່ງກ່າວ ຈະຊ່ວຍບັນເທົາຜົນກະທົບ ຕໍ່ວິສາຫະກິດໄດ້, ແຕ່ນະໂຍບາຍຜ່ອນຜັນດັ່ງກ່າວ ຄວນເປັນມາດຕະການຊົ່ວຄາວ ແລະ ລັດຖະບານ ຄວນຈັດສັນງົບປະມານສະເພາະເພື່ອທົດແທນຄືນ ໃຫ້ກອງທຶນປະກັນສັງຄົມ ເພື່ອບໍ່ໃຫ້ກະທົບຕໍ່ຄວາມຍືນຍົງຂອງກອງທຶນປະກັນສັງຄົມ ແລະ ຂອງງົບປະມານລັດ ໂດຍສະເພາະໃນເວລາທີ່ຕ້ອງເພີ່ມງົບປະມານ ເຂົ້າໃນລະບົບປົກປ້ອງສັງຄົມ ໃຫ້ສາມາດຕອບສະໜອງກັບຄວາມຕ້ອງການໃນການຮັບມືກັບວິກິດການສຸກເສີນ. ນອກຈາກນີ້, ຕ້ອງຮັບປະກັນວ່າ ນະໂຍບາຍຜ່ອນຜັນ ສໍາລັບການປະກອບທຶນສົມທົບເຂົ້າກອງທຶນປະກັນສັງຄົມ ຈະບໍ່ກະທົບກັບຜູ້ໄດ້ຮັບສິດໃນອະນາຄົດ.

**ລະບົບປະກັນສຸຂະພາບ**

ສປປ ລາວ ມີຄວາມຄືບໜ້າສໍາຄັນຫຼາຍ ໃນການຂະຫຍາຍການປົກຄຸມຂອງລະບົບປະກັນສຸຂະພາບ ສູ່ປະຊາຊົນຈໍານວນຫຼາຍ (ກວມ 94% ຂອງປະຊາກອນ) ໂດຍການຈັດຕັ້ງປະຕິບັດພາຍໃຕ້ຫ້ອງການປະກັນສຸຂະພາບແຫ່ງຊາດ. ສະມາຊິກຂອງກອງທຶນປະກັນສຸຂະພາບແຫ່ງຊາດ ມີສິດນໍາໃຊ້ຊຸດບໍລິການປິ່ນປົວຄົບຊຸດ, ລວມທັງການນອນປິ່ນປົວຢູ່ໂຮງໝໍ ແລະ ການບໍລິການໃນຫ້ອງໄອຊີຢູ ໃນລະດັບ 1 ແລະ ລະດັບ 2 ໂດຍຈ່າຍເງິນສົມທົບ ພຽງແຕ່ 5,000 ກີບ ຫາ 30,000 ກີບ ເທົ່ານັ້ນ. ສໍາລັບແມ່ຖືພາ, ເດັກນ້ອຍ ອາຍຸລຸ່ມ 5 ປີ, ຄົນເຈັບທຸກຍາກ, ແລະ ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມແຫ່ງຊາດ ແມ່ນຖືກຍົກເວັ້ນບໍ່ໄດ້ຈ່າຍເງິນສົມທົບຈໍານວນນີ້[33]. ເຖິງຢ່າງໃດກໍ່ຕາມ, ຜູ້ໃຊ້ບໍລິການສ່ວນຫຼາຍ ຍັງສືບຕໍ່ຈ່າຍຄ່າປິ່ນປົວຈໍານວນຫຼາຍກ່ວາເງິນທີ່ຕ້ອງຈ່າຍສົມທົບ. ສິ່ງກີດຂວາງດ້ານການເງິນ ແລະ ດ້ານອື່ນໆ ເຮັດໃຫ້ຄວາມບໍ່ເທົ່າທຽມຍັງສືບຕໍ່ ໂດຍສະເພາະການເຂົ້ານໍາໃຊ້ການບໍລິການ ແລະ ການປົກປ້ອງການເງິນຂອງປະຊາຊົນ ໂດຍສະເພາະໃນກຸ່ມຜູ້ມີລາຍໄດ້ໃນແຕ່ລະໆດັບ ແລະ ກຸ່ມຊົນເຜົ່າ[34]. ດັ່ງນັ້ນການຈັດຕັ້ງປະຕິບັດ ນະໂຍບາຍທີ່ດີ ຈຶ່ງເປັນເງື່ອນໄຂສໍາຄັນພື້ນຖານ ເພື່ອໃຫ້ປະຊາຊົນ ສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບໃນສະພາບການແຜ່ລະບາດຂອງໄວຣັດ COVID-19.

ສປປ ລາວ ກໍາລັງປະເຊີນກັບການຂາດເຂີນບຸກຄະລາກອນດ້ານສາທາລະນະສຸກ (ເຊັ່ນ: ທ່ານໝໍ, ພະຍາບານ, ແລະ ແພດໝໍປະດຸງຄັນ) ແລະ ຊ່ຽວຊານດ້ານວິຊາການໃນຫ້ອງວິເຄາະ ໂດຍສະເພາະໃນໂຮງໝໍ ແລະ ແລະ ສຸກສາລາໃນເຂດຊົນນະບົດ. ຄວາມຕ້ອງການທາງດ້ານບຸກຄະລາກອນສາທາລະນະສຸກຍິ່ງເພີ່ມຂຶ້ນ ຖ້າກະຊວງສາທາລະນະສຸກ ຈໍາເປັນຕ້ອງດູແລຄົນເຈັບຢູ່ບ້ານ ສໍາລັບຜູ້ທີ່ບໍ່ສາມາດເຂົ້າເຖິງສະຖານທີ່ໃຫ້ບໍລິ ການໃນໄລຍະການແຜ່ລະບາດຂອງໄວຣັດ COVID-19. ການຂາດເຂີນບຸກຄະລາກອນດ້ານສາທາລະນະສຸກທີ່ມີຄວາມສາມາດ, ການຂາດເຂີນງົບປະມານຂອງລັດໃນການແຕ່ຕັ້ງບຸກຄະລາກອນເພີ່ມ, ເງິນເດືອນ ແລະ ການອຸດໜູນອື່ນໆໃຫ້ພະນັກງານສາທາລນະສຸກທີ່ບໍ່ພຽງພໍ, ຂໍ້ຈໍາກັດທາງດ້ານຄວາມອາດສາມາດໃນການໃຫ້ບໍລິການ, ຄວາມທ້າທາຍໃນການແຕ່ງຕັ້ງພະນັກງານເພື່ອປະຈໍາໃນເຂດຊົນນະບົດ, ແລະ ຂາດແຜນການຝຶກອົບຮົມເພື່ອພັດທະນາບຸກຄະລາກອນຕໍ່ເນື່ອງ ທັງໝົດນີ້ເປັນຄວາມທ້າທາຍຫຼັກ[35]. ໃນກໍລະນີ ຖ້າມີການແຜ່ລະບາດຂອງໄວຣັດ COVID-19 ຄັ້ງທີ 2 ເກີດຂຶ້ນ, ການກຽມຄວາມພ້ອມຂອງສາທາລະນະສຸກ ໃນການຮັບມືກັບການຮັບມືກັບຈໍານວນຜູ້ຕິດເຊື້ອຈໍານວນຫຼາຍ - ໂດຍສະເພາະເຄື່ອງຊ່ວຍຫາຍໃຈ - ເປັນສິ່ງສໍາຄັນຫຼາຍ ເພື່ອປ້ອງກັນການເສຍຊີວິດຂອງຜູ້ຕິດເຊື້ອ. ຍ້ອນແນວນັ້ນ, ການສະໜອງແຫຼ່ງງົບປະມານເພີ່ມເຕີມ ແລະ ຮີບດ່ວນ ພ້ອມທັງວັດຖຸອຸປະກອນທາງການແພດທີ່ຈໍາເປັນ ໃຫ້ກັບຂະແໜງສາທາລະນະສຸກ ຈຶ່ງມີຄວາມຈໍາເປັນ.

ຍຸດທະສາດແຫ່ງຊາດກ່ຽວກັບການເງິນສາທາລະນະສຸກໄລຍະ 2021-2025 ຄວນປະກອບມີການຮັບມືກັບການແຜ່ລະບາດຂອງໄວຣັດ COVID-19 ເພື່ອກຽມຄວາມພ້ອມ ຖ້າຫາກມີການແຜ່ລະບາດຮອບທີ 2 ຫຼື ທີ 3 ເກີດຂຶ້ນ. ກະຊວງສາທາລະນະສຸກຄວນ

[33] Expansion of Lao PDR's National Health Insurance accelerates progress towards universal health coverage, ILO 2020.

[34] Financial protection and equity of access to health services with the free maternal and child health initiative in Lao PDR, World Bank, 2019

[35] Challenges for strengthening the health workforce in Lao PDR: perspectives from key stakeholders, Yi Qian, Fei Yan1, Wei Wang, Shayna Clancy, Kongsap Akkhavong, Manithong Vonglokham, Somphou Outhensackda and Truls Østbye, 2016

ຂະຫຍາຍ ຊຸດອຸດໜູນປະກັນສຸຂະພາບ ເພື່ອຮັບປະກັນການບໍລິການທີ່ເຊື່ອມໂຍງກັບເຫດສຸກເສີນ ແລະ ການເພີ່ມເຕີມງົບປະມານ. ການເກັບຄ່າບໍລິການ ກັບຜູ້ໃຊ້ບໍລິການ ລວມທັງຜູ້ທີ່ຕ້ອງຈ່າຍເງິນສົມທົບ ຄວນໄດ້ຮັບການຍົກເວັ້ນ ໃນໄລຍະຕ້ອງປິ່ນປົວແຍກປ່ຽວ. ພາກສ່ວນໃຫ້ບໍລິການ ຄວນໄດ້ຮັບທົດແທນໃນການປິ່ນປົວຂອງການຍົກເວັ້ນຄັ້ງນີ້.

ບຸກຄະລາກອນຂອງສາທາລະນະສຸກ ແລະ ອາສາສະໝັກຂັ້ນບ້ານ ຄວນໄດ້ຮັບອຸດໜູນພິເສດ ເພື່ອທົດແທນທີ່ເຂົາເຈົ້າ ຕ້ອງປະຕິບັດໜ້າທີ່ ສ່ຽງກັບການຕິດເຊື້ອໄວຣັດ ແລະ ການປະຕິບັດໜ້າທີ່ເປັນໄລຍະເວລາຍາວຫຼາຍຊົ່ວໂມງ. ຖ້າຫາກມີການແຜ່ລະບາດຂອງໄວຣັດເກີດຂຶ້ນອີກໃນອະນາຄົດ ໃນຂອບເຂດກ້ວາງຂວາງ ແລະ ໃນຊຸມຊົນ, ຕ້ອງໃຫ້ພາກເອກກະຊົນເຂົ້າມາມີສ່ວນຮ່ວມໃນການຮັບມື ອີງຕາມນະໂຍບາຍການປັບປຸງລະບົບສາທາລະນະສຸກ. ກະຊວງສາທາລະນະສຸກ ສາມາດພິຈາລະນາເຮັດສັນຍາຮ່ວມມືກັບໂຮງໝໍເອກກະຊົນ ເພື່ອການກວດຫາເຊື້ອໄວຣັດ, ການປິ່ນປົວ ແລະ ການປ້ອງກັນ. ໃນໄລຍະຍາວ, ຕ້ອງໄດ້ປັບປ່ຽນນຳໃຊ້ນະວັດຕະກຳໃໝ່ເຂົ້າໃນການບໍລິການ ລວມທັງການໃຫ້ບໍລິການປິ່ນປົວເຖິງເຮືອນພັກ, ການໃຫ້ຄຳປຶກສາຜ່ານທາງໂທລະສັບ ແລະ ຜ່ານເຄື່ອງມືສື່ສານອອນລາຍອື່ນໆ. ນະວັດຕະກຳໃໝ່ເຫຼົ່ານີ້ ສາມາດປ້ອງກັນການແຜ່ລະບາດຂອງໄວຣັດ COVID-19, ຮັກສາຄວາມຕ້ອງການ ແລະ ການສະໜອງການບໍລິການຂອງສາທາລະນະສຸກທີ່ຈຳເປັນອື່ນໆໄດ້.

**ລັດຖະບານແຫ່ງ ສປປ ລາວ ໄດ້ປະກາດມາດຕະການຕ່າງໆ ໃນການຮັບມືກັບຜົນກະທົບຂອງການ**ແຜ່ລະບາດຂອງໄວຣັດ COVID-19 ເຊັ່ນ:

- ການກວດຫາເຊື້ອ ແລະ ການປິ່ນປົວບໍ່ເສຍຄ່າ ສຳລັບຜູ້ທີ່ຕິດເຊື້ອ COVID-19; ຝຶກອົບຮົມບຸກຄະລາກອນສາທາລະນະສຸກ, ອາສາສະໝັກ, ທະຫານ, ຕຳຫຼວດ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ; ຈັດຊື້ເຄື່ອງມືການແພດ, ຢາ,ແລະ ອຸປະກອນປ້ອງກັນ ປັບປຸງ ແລະ ຂະຫຍາຍຊ່ອງທາງໃນການແຍກປ່ຽວ, ແລະ ການປິ່ນປົວ,ຈັດສັນງົບປະມານເຂົ້າໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ລວມທັງຈັດສັນງົບປະມານເພີ່ມເຕີມ ເພື່ອໃຫ້ບໍລິການເຖິງເຮືອນປະຊາຊົນ, ປະສານງານຮ່ວມກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອລະດົມການຊ່ວຍເຫຼືອ ແລະ ຊັບພະຍາກອນທີ່ຈຳເປັນ[36].

- ໃນການຮັບມືກັບແຮງງານເຄື່ອນຍ້າຍທີ່ກັບຄືນປະເທດເປັນຈຳນວນຫຼາຍ, ລັດຖະບານຂອງ ສປປ ລາວ ໄດ້ສ້າງຕັ້ງສູນກັກໂຕຊົ່ວຄາວຂຶ້ນຫຼາຍແຫ່ງໃນແຂວງທີ່ມີດ່ານຊາຍແດນ ແລະ ເຂດທີ່ມີແຮງງານເຄື່ອນຍ້າຍກັບມາຫຼາຍ. ອຳນາດການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຮັບປະກັນໃຫ້ສູນມີປະສິດທິຜົນທີ່ສຸດ[37].

- ລັດຖະບານ ໄດ້ຈັດສັນງົບປະມານຈຳນວນ 52 ຕື້ກີບ (ເທົ່າກັບ 0.03 ເປີເຊັນຂອງຈີດີພີ) ເຂົ້າໃນມາດຕະການປ້ອງການ ແລະ ຄວບຄຸມການແຜ່ລະບາດ[38].

- ນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງແນະນຳເລກທີ 06 ລົງວັນທີ 29 ມີນາ 2020 ໄດ້ກຳນົດ 13 ມາດຕະການດ້ານເສດຖະກິດ ທີ່ປະກອບດ້ວຍການສ້າງຕັ້ງຄະນະກຳມະການສະເພາະກິດດ້ານເສດຖະກິດຂຶ້ນ ເພື່ອແກ້ໄຂຜົນກະທົບທາງເສດຖະກິດຈາກການແຜ່ລະບາດຂອງໄວຣັດ COVID-19[39].

[36] www.norway.no/en/vietnam/norway-vietnam/news-and-events/order-of-laos-prime-minister/
[37] www.uncdf.org/article/5476/local-governments-on-the-forefront-of-covid-19-lao-pdr
[38] www.imf.org/en/Topics/imf-and-covid19/Policy-Responses-to-COVID-19#L.
[39] www.vdb-loi.com/laos_publication/covid-19-the-lao-pdr-government-announces-new-economic-policy-measures/; www.vientianetimes.org.la/freeContent/FreeConten_Stimulus_58.php.

- ມາດຕະການຍົກເວັ້ນການຈ່າຍພາສີລາຍໄດ້, ອາກອນກຳໄລຂອງພາກວິສາຫະກິດ, ການຜ່ອນຜັນຈ່າຍພາສີຂອງທຸລະກິດຂະແໜງການທ່ອງທ່ຽວ ແລະ ເລື່ອນການປະກອບທຶນສົມທົບ ເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ຂອງທຸລະກິດທີ່ໄດ້ຮັບຜົນກະທົບ[40].
- ລັດຖະບານ ກຳລັງຮ່ວມມືກັບບັນດາອົງການເຄືອຂ່າຍຂອງອົງການສະຫະປະຊາຊາດ ເປັນຕົ້ນອົງການອະນາໄມໂລກ, ອົງການສະຫະປະຊາຊາດເພື່ອການພັດທະນາ, ອົງການສະຫະປະຊາຊາດເພື່ອເດັກ, ແລະ ອົງການສະຫະປະຊາດດ້ານປະຊາກອນ ເພື່ອດຳເນີນການປະເມີນຜົນກະທົບ ຂອງການແຜ່ລະບາດຄັ້ງນີ້ ຕໍ່ກັບຊີວິດການເປັນຢູ່, ເສດຖະກິດ ແລະ ສັງຄົມ.

[40] www.imf.org/en/Topics/imf-and-covid19/Policy-ReЖsponses-to-COVID-19#L.

UNITED NATIONS
LAO PDR

## ສະເໜີທາງເລືອກດ້ານນະໂຍບາຍ

ອົງການສະຫະປະຊາຊາດ ປະຈໍາ ສປປ ລາວ ສະເໜີທາງເລືອກດ້ານນະໂຍບາຍເບື້ອງຕົ້ນ ໃຫ້ກັບລັດຖະບານ ໃນການຮັບມືກັບການແຜ່ລະບາດຂອງໄວຣັດ COVID-19 ແລະ ເພື່ອພັດທະນາລະບົບການຮັບມືໃຫ້ມີຄວາມຍືນຍົງ ດັ່ງລຸ່ມນີ້. ທາງເລືອກດ້ານນະໂຍບາຍທີ່ສະເໜີ ບໍ່ແມ່ນການສະເໜີ ເພື່ອປ່ຽນແທນມາດຕະການສໍາຄັນອື່ນໆ ທີມງານຂອງອົງການສະຫະປະຊາຊາດ ປະຈໍາ ສປປ ລາວ ຮັບຮູ້ວ່າ ການປະຕິບັດນະໂຍບາຍຄຽງຄູ່ກັບມາດຕະການອື່ນໆ ຈຶ່ງສາມາດຮັບປະກັນບໍປະຖິ້ມໃຜໄວ້ຂ້າງຫຼັງ, ໂດຍສະເພາະຍັງມີກຸ່ມປະຊາຊົນກຸ່ມອື່ນໆ ທີ່ບໍ່ຢູ່ໃນກຸ່ມເປົ້າໝາຍທີ່ໄດ້ສະເໜີ ເປັນຕົ້ນແມ່ນບັນດາເດັກຍິງໄວໜຸ່ມ.

### ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ

ການພັດທະນາທີ່ຈະບໍ່ປະຖິ້ມໃຜໄວ້ຂ້າງຫຼັງ ເປັນຄໍາໝັ້ນສັນຍາຫຼັກ ຂອງເປົ້າໝາຍການພັດທະນາຍືນຍົງ ຫຼື SDGs 2030. ວາລະການພັດທະນາຮອດປີ 2030 ໄດ້ຕັ້ງເປົ້າໝາຍການພັດທະນາແຫ່ງຊາດວ່າ ຈະບໍ່ປະຖິ້ມໃຜໄວ້ຂ້າງຫຼັງ ແລະ ຈະຊ່ວຍເຫຼືອຜູ້ທີ່ເຂົ້າເຖິງຍາກທີ່ສຸດ. ປັດໃຈຫຼັກຂອງເປົ້າໝາຍ SDGs ແມ່ນບັນດາຫຼັກການຄວາມສະເໝີພາບ, ການບໍ່ຈໍາແນກ ແລະ ວິທີການຈັດຕັ້ງປະຕິບັດໂດຍອີງໃສ່ສິດທິມະນຸດ ເປັນວິໄສທັດໃນການພັດທະນາ ແລະ ການຈັດຕັ້ງປະຕິບັດຂອງອົງການສະຫະປະຊາຊາດ.

ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ ໝາຍເຖິງ ການລຶບລ້າງຄວາມທຸກຍາກໃນທຸກຮູບແບບ, ແລະ ການຫຼຸດຜ່ອນຄວາມບໍ່ເທົ່າທຽມຂອງບຸກຄົນ ແລະ ຂອງກຸ່ມປະຊາກອນ. ໃຈກາງສໍາຄັນຂອງການ “ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ” ແມ່ນການກໍານົດບູລິມາສິດ ແລະ ເລັ່ງລັດໃສ່ການຈັດຕັ້ງປະຕິບັດ ເພື່ອຊ່ວຍເຫຼືອປະຊາຊົນຜູ້ທຸກຍາກທີ່ສຸດ ແລະ ຜູ້ດ້ອຍໂອກາດທີ່ສຸດ - ຫຼືອີກຄວາມໝາຍໜຶ່ງແມ່ນການກ້າວໜ້າໄປພ້ອມໆກັນ.

ປະຊາຊົນທຸກຄົນໃນປະເທດ ໂດຍສະເພາະ ຜູ້ທຸກຍາກ ແລະ ຜູ້ບອບບາງ ເປັນໃຈກາງສໍາຄັນທີ່ຕ້ອງໄດ້ເອົາໃຈໃສ່ ເວລາອອກແບບ ແລະ ຈັດຕັ້ງປະຕິບັດ ນະໂຍບາຍປົກປ້ອງສັງຄົມ. ໝາຍຄວາມວ່າ ໃຫ້ເອົາໃຈໃສ່ເດັກນ້ອຍ, ເດັກຍິງ ແລະ ເດັກຊາຍໄວໜຸ່ມ, ຜູ້ພິການ, ຜູ້ຕິດເຊື້ອເອັດສໄອວີ, ຜູ້ສູງອາຍຸ, ຊົນເຜົ່າ, ຜູ້ອົບພະຍົບ, ແລະ ແຮງງານເຄື່ອນຍ້າຍ. ເຖິງແມ່ນວ່າ ບໍ່ສາມາດຊ່ວຍເຫຼືອທຸກຄົນໄດ້ໃນເວລາດຽວກັນ ກໍ່ຕາມ, ນະໂຍບາຍການປົກປ້ອງສັງຄົມ ຈະຕ້ອງອອກແບບ ເພື່ອໃຫ້ສາມາດຂະຫຍາຍການປົກປ້ອງໄປເຖິງກຸ່ມຄົນຜູ້ບອບບາງອື່ນໆໃນອະນາຄົດໄດ້ ເວລາທີ່ມີຄວາມອາດສາມາດ ແລະ ມີແຫຼ່ງທຶນສະໜັບສະໜູນ.

ຕົວຢ່າງ: ໃນ ສປປ ລາວ, ກຸ່ມເດັກໄວໜຸ່ມ ແລະ ແມ່ຖືພາໄວໜຸ່ມ ເປັນກຸ່ມສ່ຽງທີ່ປະສົບກັບຄວາມບອບບາງຫຼາຍດ້ານ ແລະ ຄາດວ່າເປັນກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບຈາກວິກິດການທີ່ກໍາເກີດຂຶ້ນໃນປະຈຸບັນ. ຜົນການສໍາຫຼວດດັດຊະນີໝາຍສັງຄົມແຫ່ງຊາດຄັ້ງທີ 2 ສະແດງໃຫ້ເຫັນວ່າ 1 ໃນ 4 ຂອງເດັກຍິງໄວໜຸ່ມ ເກນອາຍຸ 15-19 ປີໄດ້ແຕ່ງງານ/ຢູ່ຮ່ວມກັນກັບຄູ່ຮັກ ແລະ 1 ໃນ 6 ຂອງເດັກຍິງ ແລະ ເດັກຊາຍໄວໜຸ່ມ ໃນເກນອາຍຸ 11-14 ປີ ແມ່ນບໍ່ເຂົ້າໂຮງຮຽນ. ຄາດວ່າຜົນກະທົບທາງດ້ານເສດຖະກິດ ແລະ ຄວາມຫຍຸ້ງຍາກທີ່ເປັນຜົນມາຈາກການແຜ່ລະບາດຂອງໄວຣັດ COVID-19 ອາດສົ່ງຜົນເຮັດໃຫ້ການຖືພາທີ່ບໍ່ຕັ້ງໃຈ ມີເພີ່ມຂຶ້ນ, ແລະ ການອອກໂຮງຮຽນກໍ່ເພີ່ມຂຶ້ນ ບວກກັບ ການເພີ່ມຂຶ້ນຂອງແຮງງານເດັກ ເປັນຈໍານວນຫຼາຍ. ເພື່ອປະຕິບັດວິໄສທັດຂອງການພັດທະນາ “ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ” ສໍາຄັນ ຕ້ອງມີມາດຕະການສະໜັບສະໜູນທາງສັງຄົມ ທີ່ກ້າວໜ້າສໍາລັບກຸ່ມຜູ້ບອບບາງ - ເດັກໄວໜຸ່ມກຸ່ມສ່ຽງ ແລະ ແມ່ຖືພາໄວໜຸ່ມ - ເພື່ອຮັບປະກັນໃຫ້ເຂົາເຈົ້າສາມາດເຂົ້າເຖິງການສຶກສາ ແລະ ໂອກາດອື່ນໆດ້ານເສດຖະກິດທີ່ເທົ່າທຽມ ແລະ ມີອານາຄົດທີ່ສົດໃສ.

| ຂໍ້ສະເໜີດ້ານນະໂຍບາຍ | ອຸດໜູນຄັ້ງດຽວ ຫຼື ຕໍ່ເນື່ອງ | ຮີບດ່ວນ, ໄລຍະກາງ ຫຼື ໄລຍະຍາວ |
|---|---|---|
| **ອຸດໜູນສະຫວັດດີການສັງຄົມ** | | |
| 10. ໃຫ້ອຸດໜູນເບ້ຍລ້ຽງແມ່ຖືພາ ແລະ ເດັກນ້ອຍ ອາຍຸ 0-2 ປີ, ເລີ້ມຕົ້ນຈາກເມືອງທຸກຍາກ ທີ່ຄັດເລືອກ ຫຼື ເມືອງທີ່ຖືກກະທົບໜັກໜ່ວງທີ່ສຸດ | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |
| 11. ຂະຫຍາຍໂຄງການອາຫານກາງເວັນໃນໂຮງຮຽນ ເພື່ອໃຫ້ເດັກ ແລະ ຄົວເຮືອນໄດ້ຮັບໂພຊະນາການທີ່ພຽງພໍ ແລະ ຂະຫຍາຍໂຄງການອອກໄປໃຫ້ໄດ້ຫຼາຍເມືອງ | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |
| 12. ປະເມີນຄວາມຕ້ອງການຂອງແຮງງານເຄື່ອນຍ້າຍ. ໃຫ້ອຸດໜູນເບ້ຍລ້ຽງແຮງງານເຄື່ອນຍ້າຍທີ່ກັບຄືນປະເທດ, ໂດຍເຊື່ອມໂຍງກັບມາດຕະການການຍົກລະດັບສີມືແຮງງານ ແລະ ການຊອກຫາວຽກເຮັດງານທໍາ. | ອຸດໜູນຄັ້ງດຽວ / ອຸດໜູນຄັ້ງໜຶ່ງຕໍ່ເດືອນ ແລະ ກວມເອົາອຸດໜູນ 3 ເດືອນ ຕໍ່ຄັ້ງ | ຈັດຕັ້ງປະຕິບັດຮີບດ່ວນ ຫາໄລຍະກາງ |
| **ອຸດໜູນປະກັນສັງຄົມ** | | |
| 13. ຂະຫຍາຍການໃຫ້ອຸດໜູນຫວ່າງງານ ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ຜູ້ທີ່ໄດ້ຮັບຜົນກະທົບ, ໂດຍການເພີ່ມມູນຄ່າອຸດໜູນ, ໄລຍະການໃຫ້ອຸດໜູນ ແລະ ພິຈາລະນາລຶບລ້າງກໍານົດເວລາລໍຖ້າຮັບອຸດໜູນລົງພາຍໃນ 30 ວັນ. | ອຸດໜູນຕໍ່ເນື່ອງ | ການຈັດຕັ້ງປະຕິບັດຮີບດ່ວນ |
| 14. ອຸດໜູນຫວ່າງງານສ່ວນໜຶ່ງ ຫຼື ອຸດໜູນລາຍໄດ້ ສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ໃນຂະແໜງການທ່ອງທ່ຽວ ແລະ ຕັດຫຍິບ (ແຮງງານຜູ້ທີ່ຕ້ອງໄດ້ພັກວຽກຊົ່ວຄາວ ແລະ ບໍ່ໄດ້ຮັບເງິນເດືອນ ເນື່ອງຈາກບໍລິສັດຕ້ອງປິດຊົ່ວຄາວ), ເຊື່ອມໂຍງກັບໂຄງການວຽກສາທາລະນະ, ມາດຕະການປັບປຸງສີມືແຮງງານ ແລະ ຈັດຫາງານ. | ອຸດໜູນຄັ້ງດຽວ / ອຸດໜູນຄັ້ງໜຶ່ງຕໍ່ເດືອນ ແລະ ກວມເອົາອຸດໜູນ 3 ເດືອນ ຕໍ່ຄັ້ງ | ຈັດຕັ້ງປະຕິບັດຮີບດ່ວນ ຫາໄລຍະກາງ |
| 15. ອຸດໜູນລາຍໄດ້ ສະມາຊິກຜູ້ປະກອບທຶນສົມທົບເຂົ້າກອງທຶນປະກັນສັງຄົມ ທີ່ຢຸດເຊົາປະກອບທຶນ ແລະ ຜູ້ບໍ່ແມ່ນສະມາຊິກກອງທຶນປະກັນສັງຄົມ ໃນຂະແໜງການທີ່ໄດ້ຮັບຜົນກະທົບຈາກວິກິດການເສດຖະກິດ (ການໃຫ້ອຸດໜູນລາຍໄດ້ແຮງງານກຸ່ມນີ້ ຕ້ອງຕໍ່າກ່ວາອຸດໜູນທີ່ຈ່າຍໃຫ້ກັລສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ) | ອຸດໜູນຄັ້ງດຽວ / ອຸດໜູນຄັ້ງໜຶ່ງຕໍ່ເດືອນ ແລະ ກວມເອົາອຸດໜູນ 3 ເດືອນ ຕໍ່ຄັ້ງ | ຈັດຕັ້ງປະຕິບັດໄລຍະກາງ |
| **ອຸດໜູນປະກັນສຸຂະພາບ** | | |
| 16. ໃຫ້ທຸກຄົນ, ລວມທັງແຮງງານເຄື່ອນຍ້າຍ, ສາມາດເຂົ້າເຖິງລະບົບປະກັນສຸຂະພາບທີ່ຈໍາເປັນຊົ່ວຄາວ, ເຖິງບໍ່ເປັນສະມາຊິກຂອງລະບົບປະກັນສຸຂະພາບ ກໍ່ຕາມ. ພ້ອມນີ້ ກໍ່ໃຫ້ຍົກເວັ້ນການຈ່າຍສົມທົບ ສໍາລັບທຸກຄົນ. | ເປັນເວລາ 3 ເດືອນ | ຈັດຕັ້ງປະຕິບັດຮີບດ່ວນ |

| | | | |
|---|---|---|---|
| 17. ເນັ້ນໜັກການເຜີຍແຜ່ຂໍ້ຄວາມຕ້ານພະຍາດ COVID-19, ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ. | | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |
| 18. ສືບຕໍ່ລົງທຶນ ແລະ ປັບປຸງການບໍລິການປິ່ນປົວສຸຂະພາບ, ເພື່ອຮັບມືກັບຄວາມທ້າທາຍໃນການປິ່ນປົວທົ່ວໄປ (ນອກຈາກ COVID-19) | | ອຸດໜູນຕໍ່ເນື່ອງ | ຈັດຕັ້ງປະຕິບັດຮີບດ່ວນ |

ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ກຽມພ້ອມສະໜັບສະໜູນລັດຖະບານ ເພື່ອລົງເລິກບາງທາງເລືອກດ້ານນະໂຍບາຍທີ່ສະເໜີ ທີ່ລັດຖະບານເລືອກປະຕິບັດ.

## ຄິດໄລ່ຕົ້ນທຶນ ສຳລັບ ຈັດຕັ້ງປະຕິບັດແຕ່ລະທາງເລືອກນະໂຍບາຍ

ຕາຕະລາງຂ້າງລຸ່ມນີ້ ແມ່ນການຄິດໄລ່ຄາດຄະເນເບື້ອງຕົ້ນ ງົບປະມານທີ່ຕ້ອງການ ສຳລັບ ແຕ່ລະນະໂຍບາຍທີ່ສະເໜີ. ການຄິດໄລ່ຕົ້ນທຶນ ແມ່ນນຳໃຊ້ ວິທີການຄິດໄລ່ທີ່ໃຊ້ໃນຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ, ຂໍ້ມູນຈາກຜົນການສຳຫຼວດກຳລັງແຮງງານແຫ່ງຊາດປີ 2017, ແລະ ການວິເຄາະພາບລວມເສດຖະກິດຂອງສະຖາບັນການເງິນສາກົນ ຫຼື IMF ໃນປີ 2020.

ຕົວເລກໃນຕາຕະລາງຂ້າງລຸ່ມນີ້ ແມ່ນການຄາດຄະເນເບື້ອງຕົ້ນ ເພື່ອໃຫ້ລັດຖະບານແຫ່ງ ສປປ ລາວ ແລະ ອົງການສະຫະປະຊາຊາດ ໃຊ້ເປັນບ່ອນອີງ ໃນການປຶກສາຫາລືເພີ່ມເຕີມ ກ່ຽວກັບ ບາດກ້າວຕໍ່ໄປ. ສາມາດປັບປຸງ ແລະ ສາມາດຄິດໄລ່ເພີ່ມເຕີມ.

| ທາງເລືອກດ້ານນະໂຍບາຍ | ອຸດໜູນ (ເງິນກີບ) | | ຈຳນວນຜູ້ໄດ້ຮັບອຸດໜູນ | ມູນຄ່າອຸດໜູນທັງໝົດ (ລ້ານກີບ) | ມູນຄ່າອຸດໜູນທັງໝົດ (ເປັນໂດລາສະຫະລັດ) |
|---|---|---|---|---|---|
| 1. ໃຫ້ອຸດໜູນເບ້ຍລ້ຽງແມ່ຖືພາ ແລະ ເດັກນ້ອຍ ອາຍຸ 0-2 ປີ, ເລີ່ມຕົ້ນຈາກເມືອງທຸກຍາກ ທີ່ຄັດເລືອກ ຫຼື ເມືອງທີ່ຖືກກະທົບໜັກໜ່ວງທີ່ສຸດ | 50% ຂອງເສັ້ນແບ່ງຄວາມທຸກຍາກ: 161,000 ກີບຕໍ່ເດືອນ | ເມືອງນອງ | 2,594 | 2,756 | 0.30 |
| | | ເມືອງໄຊບູລີ | 5,449 | 5,790 | 0.64 |
| | | ເມືອງພະລານໄຊ | 3,568 | 3,791 | 0.42 |
| 2. ຂະຫຍາຍໂຄງການອາຫານກາງເວັນໃນໂຮງຮຽນ ເພື່ອໃຫ້ເດັກ ແລະ ຄົວເຮືອນໄດ້ຮັບໂພຊະນາການທີ່ພຽງພໍ ແລະ ຂະຫຍາຍໂຄງການອອກໄປໃຫ້ໄດ້ຫຼາຍເມືອງ | 800 ກີບ ຕໍ່ນັກຮຽນ ຕໍ່ມື້ | | 15,000 | 1,095 | 0.12 |
| 3. ໃຫ້ອຸດໜູນເບ້ຍລ້ຽງແຮງງານເຄື່ອນຍ້າຍທີ່ກັບຄືນປະເທດ, ໂດຍເຊື່ອມໂຍງກັບມາດຕະການການຍົກລະດັບສີມືແຮງງານ ແລະ ການຊອກຫາວຽກເຮັດງານທຳ. | 30% ຂອງຄ່າແຮງງານຕ່ຳສຸດ: 330,000 ກີບຕໍ່ເດືອນ | | 183,460 | 1,99,788 | 22.02 |
| 4. ຂະຫຍາຍການໃຫ້ອຸດໜູນຫວ່າງງານສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ຜູ້ທີ່ໄດ້ຮັບຜົນກະທົບ, ໂດຍການເພີ່ມມູນຄ່າອຸດໜູນ, ໄລຍະການໃຫ້ອຸດໜູນ ແລະ ພິຈາລະນາລຶບລ້າງກຳນົດເວລາລໍຖ້າຮັບອຸດໜູນລົງພາຍໃນ 30 ວັນ. | 50% ຂອງຄ່າແຮງງານຕ່ຳສຸດ: 550,000 ກີບຕໍ່ເດືອນ | ຂະແໜງ ທ່ອງທ່ຽວ | 2,094 | 3,800 | 0.42 |
| | | ອຸດສະຫະກຳຕັດຫຍິບ | 5,954 | 9,824 | 1.08 |

| | | | | | | |
|---|---|---|---|---|---|---|
| 5. | ອຸດໜູນລາຍໄດ້ ສະມາຊິກຜູ້ປະກອບທຶນສົມທົບເຂົ້າກອງທຶນປະກັນສັງຄົມທີ່ຢຸດເຊົາປະກອບທຶນ ແລະ ຜູ້ບໍ່ແມ່ນສະມາຊິກກອງທຶນປະກັນສັງຄົມ ໃນຂະແໜງ ການທີ່ໄດ້ຮັບຜົນກະທົບຈາກວິກິດການເສດຖະກິດ | 30% ຂອງຄ່າແຮງງານຕໍ່າສຸດ: 330,000 ກີບຕໍ່ເດືອນ | ຂະແໜງ ທ່ອງທ່ຽວ | 22,906 | 24,945 | 2.75 |
| | | | ອຸດສະຫະກໍາຕັດຫຍິບ | 64,046 | 69,746 | 7.69 |

**ຂໍ້ສັງເກດ:**

- ຕາຕະລາງສະເໜີຄ່າໃຊ້ຈ່າຍເພີ່ມເຕີມ - ເປັນມູນຄ່າໃຊ້ຈ່າຍທີ່ສູງກ່າວການໃຊ້ຈ່າຍສໍາລັບໂຄງການອາຫານກາງເວັນໃນໂຮງຮຽນທີ່ຈັດຕັ້ງປະຕິບັດຢູ່
- ໃນການຄາດຄະເນຄ່າໃຊ້ຈ່າຍ, ການໃຫ້ອຸດໜູນແມ່ ແລະ ເດັກຈະຈັດຕັ້ງປະຕິບັດໃນ 3 ເມືອງທຸກຍາກຂອງແຂວງສະຫວັນນະເຂດ ເນື່ອງຈາກເປັນເມືອງທີ່ມີອັດຕາສ່ວນຜູ້ທຸກຍາກສູງ ລວມທັງແມ່ຍິງຖືພາ ແລະ ເດັກເກນອາຍຸລຸ່ມ 0-2 ປີ.
- ການໃຫ້ອຸດໜູນລາຍໄດ້ກັບແຮງງານເຄື່ອນຍ້າຍທີ່ກັບຄືນປະເທດ ເພື່ອກວມເອົາທຸກຄົນທີ່ຂຶ້ນທະບຽນພາຍໃຕ້ບົດບັນທຶກຊ່ວຍຈໍາລະຫວ່າງລັດຖະບານຂອງ ສປປ ລາວ ແລະ ປະເທດໄທ.
- ອີງຕາມການປຶກສາຫາລືເບື້ອງຕົ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການທ່ອງທ່ຽວ ແລະ ຕັດຫຍິບ ເປັນສອງຂະແໜງການ ທີ່ເຫັນວ່າຖືກກະທົບໜັກທີ່ສຸດ. ນະໂຍບາຍທີ 4 ແລະ 5 ທີ່ສະເໜີ ຖືກອອກແບບເພື່ອກວມເອົາແຮງງານທັງໝົດທີ່ ຫວ່າງງານ ໃນ 2 ຂະແໜງການນີ້ (ນະໂຍບາຍທີ 4 ແມ່ນກວມເອົາສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມແຫ່ງຊາດ ແລະ ນະໂຍບາຍທີ 5 ແມ່ນກວມເອົາແຮງງານກຸ່ມອື່ນໆ)
- ທາງເລືອກດ້ານນະໂຍບາຍ ການຂະຫຍາຍການອຸດໜູນຫວ່າງງານ ໃຫ້ກັບສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມແຫ່ງຊາດ ໄດ້ຄິດໄລ່ ໂດຍອີງໃສ່ວິທີການຄິດໄລ່ຮີບດ່ວນ ແລະ ອີງໃສ່ການວິເຄາະຄະນິດສາດປະກັນສັງຄົມ. ອີງຕາມການຄິດໄລ່ເບື້ອງຕົ້ນ, ການແຜ່ລະບາດຂອງພະຍາດ COVID-19 ຈະສົ່ງຜົນຕໍ່ກອງທຶນປະກັນສັງຄົມແຫ່ງຊາດໃນປີ 2020 ເນື່ອງຈາກການເພີ່ມອຸດໜູນຫວ່າງງານ ທີ່ຈ່າຍອອກໄປ ແລະ ການປະກອບທຶນສົມທົບທີ່ຫຼຸດລົງ. ຄາດຄະເນ ລາຍຈ່າຍຂອງການຈ່າຍອຸດໜູນຫວ່າງງານ ໃຫ້ກັບສະມາຊິກຜູ້ປະກັນຕົນຂອງກອງທຶນປະກັນສັງຄົມ ມີປະມານ 220 ຕື້ກັບໃນປີ 2020 ອີງຕາມຂໍ້ມູນພື້ນຖານ ແລະ ປະມານ 300 ຕື້ກີບ ຖ້າຫາກສະພາບການຍັງສືບຕໍ່. ການຫຼຸດລົງຂອງທຶນສົມທົບ ແລະ ລາຍໄດ້ຈາກການລົງທຶນ ຄາດວ່າມີປະມານ 115 ຕື້ກີບ (ຫຼື 200 ຕື້ກີບ ໃນກໍລະນີ້ເຫດການຍັງສືບຕໍ່).
- ເຊັ່ນດຽວກັນ, ທາງເລືອກດ້ານນະໂຍບາຍດ້ານການປິ່ນປົວສຸຂະພາບຕ້ອງໄດ້ຄິດໄລ່ເພີ່ມເຕີມ ຊຶ່ງຍັງບໍ່ທັນໄດ້ຄິດໄລ່ໃນການວິເຄາະຄັ້ງນີ້.

**ແຫຼ່ງທຶນສະໜັບສະໜູນທາງເລືອກດ້ານນະໂຍບາຍທີ່ສະເໜີ:** ຖ້າລັດຖະບານແຫ່ງ ສປປ ລາວ ພິຈາລະນາ ເລືອກຈັດຕັ້ງປະຕິບັດນະໂຍບາຍໃດໜຶ່ງທີ່ສະເໜີໃນເອກະສານສະບັບນີ້ ແລະ ຕ້ອງການລະດົມທຶນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ, ອົງການສະຫະປະຊາຊາດ ພ້ອມໃຫ້ການສະໜັບສະໜູນ ອໍານວຍຄວາມສະດວກ ໃນການປຶກສາຫາລື ຮ່ວມກັບ ບັນດາຄູ່ຮ່ວມພັດທະນາ ແລະ ປະເມີນເບິ່ງຄວາມເປັນໄປໄດ້ ໃນການລະດົມທຶນເພີ່ມເຕີມສໍາລັດວຽກງານປົກປ້ອງສັງຄົມ. ໜຶ່ງໃນທາງເລືອກນະໂຍບາຍທີ່ສະເໜີ ແມ່ນການຈັດກອງປະຊຸມປຶກສາຫາລື ຮ່ວມກັບອົງການຜູ້ໃຫ້ທຶນ ເພື່ອພັດທະນາທາງເລືອກດ້ານແຫຼ່ງທຶນແບບມີສ່ວນຮ່ວມ.

UNITED NATIONS
LAO PDR

ທີມງານຂອງອົງການສະຫະປະຊາຊາດພ້ອມໃຫ້ການຊ່ວຍເຫຼືອດ້ານວິຊາການເພື່ອພັດທະນາກົນໄກກອງທຶນສະຫວັດດີການສັງຄົມທີ່ກໍານົດໄວ້ໃນຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມ ແລະ ໂຄງການຮ່ວມມືຂອງອົງການສະຫະປະຊາດວຽກງານປົກປ້ອງສັງຄົມ. ສຸດທ້າຍນີ້, ໃນການປຶກສາຫາລືໃດໆທີເກີດຂຶ້ນໃນອະນາຄົດ ແລະ ກ່ຽວພັນກັບການສະໜັບສະໜູນດ້ານງົບປະມານ, ທຶນພັດທະນາ ແລະ ທຶນກູ້ຢືມພາຍໃຕ້ນະໂຍບາຍພິເສດ ສະເໜີໃຫ້ປຶກສາຫາລື ກ່ຽວກັບ ການຈັດສັນງົບປະມານເພີ່ມເຕີມ ເຂົ້າໃນລະບົບການປົກປ້ອງສັງຄົມ.

## ຂໍ້ມູນສຳຄັນ

- ສປປ ລາວ ກຳລັງຢູ່ໃນໄລຍະການສ້າງ ແລະ ພັດທະນາລະບົບປົກປ້ອງສັງຄົມແຫ່ງຊາດ, **ດັ່ງນັ້ນ ເວລາອອກແບບ ແລະ ຈັດຕັ້ງປະຕິບັດມາດຕະການຕ່າງໆ ໃນການຮັບມືກັບຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ຕ້ອງຖືເອົາການພັດທະນາລະບົບແຫ່ງຊາດ ເປັນໃຈກາງ** ເພື່ອສາມາດຮັບມືກັບວິກິດການສຸກເສີນໃນອະນາຄົດ. ການພັດທະນາໃຫ້ເປັນລະບົບແຫ່ງຊາດ ເປັນການສ້າງພື້ນຖານສຳຄັນ ໃນການພັດທະນາຄວາມສາມາດຂອງສະຖາບັນ ເພື່ອຈັດຕັ້ງປະຕິບັດ, ເປັນຕົ້ນ ການຈັດສັນງົບປະມານພາຍໃນເຂົ້າໃນການຈັດຕັ້ງປະຕິບັດ, ການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການປົກປ້ອງສັງຄົມ ຕາມວິໄສທັດແຫ່ງຊາດ ແລະ ເປົ້າໝາຍຕ່າງໆ ທີ່ກຳນົດໄວ້ໃນຍຸດທະສາດແຫ່ງຊາດວຽກງານປົກປ້ອງສັງຄົມຮອດປີ 2025. ມາດຕະການຮັບມື ກັບວິກິດການສຸກເສີນຕ້ອງສາມາດຊຶມຊັບໄດ້ງ່າຍ ແລະ ສາມາດຂະຫຍາຍເປັນລະບົບແຫ່ງຊາດໄດ້ ພາຍຫຼັງວິກິດການສິ້ນສຸດ.
- ວິກິດການດ້ານສຸຂະພາບ ແລະ ເສດຖະກິດທີ່ບໍ່ຄາດຄິດເກີດຂຶ້ນ ຮຽກຮ້ອງໃຫ້**ມີລະບົບປົກປ້ອງສັງຄົມທີ່ສາມາດຮັບມືກັບວິກິດການໄດ້ຮີບດ່ວນ, ສາມາດພັດທະນາເພີ່ມເຕີມ ແລະ ມີການປະສານງານທີ່ດີ.** ຈຳເປັນຕ້ອງປົກປ້ອງຄົວເຮືອນຈາກການສູນເສຍລາຍໄດ້ຍ້ອນການຫວ່າງງານ ແລະ ການເຮັດວຽກບໍ່ໄດ້ຮັບຄ່າຕອບແທນຄຸ້ມຄ່າ ເນື່ອງຈາກການແຜ່ລະບາດຂອງໄວຣັດ ແລະ ເພື່ອຈຳກັດບໍ່ໃຫ້ມີການແຜ່ລະບາດ. ການກຽມຄວາມພ້ອມດ້ານການປົກປ້ອງສັງຄົມ ແລະ ລະບົບປິ່ນປົວສຸຂະພາບ ຍິ່ງມີຄວາມສຳຄັນ ຖ້າຫາກມີການລະບາດຮອບໃໝ່ເກີດຂຶ້ນ.
- **ເນັ້ນໜັກຊ່ວຍເຫຼືອຜູ້ທີ່ຖືກກະທົບໜັກໜ່ວງທີ່ສຸດ** ໃຫ້ເປັນບູລິມາສິດ. ປະຊາກອນຈຳນວນຫຼາຍຍັງບໍ່ມີປະກັນສັງຄົມ ຫຼື ອຸດໜູນສະຫວັດດີການສັງຄົມ ເຮັດໃຫ້ມີຄວາມສ່ຽງສູງ ໃນກໍລະນີບໍ່ລາຍໄດ້.
- ມາດຕະການຕ່າງໆທີ່ສະເໜີ**ຈະເປັນປະໂຫຍດໃຫ້ກັບປະຊາຊົນຈຳນວນຫຼາຍ.** ການເພີ່ມຈຳນວນ ຫຼື ຂະຫຍາຍການໃຫ້ອຸດໜູນຈະເປັນການອັດສີດເງິນ ເພື່ອກະຕຸ້ນເສດຖະກິດ ແລະ ຖ້າຫາກຈັດຕັ້ງປະຕິບັດຄຽງຄູ່ກັບມາດຕະການອື່ນໆ ກໍ່ມີທ່າແຮງໃນການສ້າງຜົນໄດ້ຮັບຫຼາຍດ້ານຍິ່ງຂຶ້ນ ໃນຂັ້ນທ້ອງຖິ່ນ, ເຮັດໃຫ້ສັງຄົມໄດ້ຮັບປະໂຫຍດໂດຍລວມ.
- **ເວລາເປັນສິ່ງສຳຄັນ.** ການຈັດຕັ້ງປະຕິບັດມາດຕະການປົກປ້ອງສັງຄົມອັນຮີບດ່ວນ ຈະເຮັດໃຫ້ ສປປ ລາວ ຈຳກັດຜົນກະທົບຂອງວິກິດການນີ້ ຕໍ່ເສດຖະກິດຂອງປະເທດ. ຫຼາຍປະເທດໃນໂລກກໍ່ສືບຕໍ່ເພີ່ມມາດຕະການປົກປ້ອງລາຍໄດ້ **ເພື່ອສະໜັບສະໜູນປະຊາຊົນ ເພາະການແຜ່ລະຍາດຂອງໄວຣັດຍັງສືບຕໍ່.**
- ເພື່ອຈັດຕັ້ງປະຕິບັດມາດຕະການຮັບມືສຸກເສີນອັນຮີບດ່ວນ ຈຳເປັນຕ້ອງ **ອີງໃສ່ໂຄງສ້າງ, ໂຄງການ ແລະ ກົນໄກທີ່ຈັດຕັ້ງຜະຕິບັດໃນປະຈຸບັນໃຫ້ຫຼາຍເທົ່າທີ່ເປັນໄປໄດ້.** ການຂະຫຍາຍການປົກຄຸມຕ້ອງປະຕິບັດຄຽງຄູ່ກັບການຈັດສັນງົບປະ ມານເພີ່ມເຕີມ ແລະ ປະຕິບັດມາດຕະການເພີ່ມເຕີມ ເພື່ອຮັບປະກັນໃຫ້ຄວາມອາດສາມາດດ້ານສະຖາບັນ ແລະ ການບໍລິຫານໃນການໃຫ້ການຊ່ວຍເຫຼືອ.

## ເອກະສານຊ້ອນທ້າຍ: ມາດຕະການປົກປ້ອງສັງຄົມທີ່ບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ ຈັດຕັ້ງປະຕິບັດ[41]

### ລະບົບອຸດໜູນສະຫວັດດີການສັງຄົມ

- **ປະເທດອິນເດຍ** ໄດ້ປະກາດໃຫ້ອຸດໜູນເບ້ຍລ້ຽງຕ່າງໆ ກັບປະຊາຊົນຜູ້ບອບບາງໃນຮູບແບບຂອງການຈ່າຍອຸດໜູນ ຈຳນວນ 500 ລູປີ ຕໍ່ເດືອນເປັນໄລຍະເວລາ 3 ເດືອນໃຫ້ກັບສະມາຊິກລະບົບສະໜູນສະໜູນການເງິນ ຈຳນວນ 204 ລ້ານຄົນ; ຈ່າຍອຸດໜູນບຳນານ 1.000 ລູປີ ໃຫ້ຜູ້ສູງອາຍຸ, ແມ່ລ້ຽງດ່ຽວ ແລະ ຜູ້ພິການ ຈຳນວນ 30 ລ້ານຄົນ; ໂຄງການສ້າງລາຍໄດ້ໂດຍວຽກສາທາລະນະ ຈຳນວນ 20 ລູປີ ຕໍ່ວັນ ໃຫ້ກັບ 136.2 ຄອບຄົວ, ນອກຈາກນີ້ ຍັງມີມາດຕະການຊ່ວຍເຫຼືອອື່ນໆອີກ[42]
- **ປະເທດໄທ** ປະກາດໃຫ້ອຸດໜູນແຮງງານນອກລະບົບທີ່ມີສິດຮັບອຸດໜູນ (ເຊັ່ນ: ແຮງງານຮັບຈ້າງຊົ່ວຄາວ, ແຮງງານສັນຍາຈ້າງ, ແລະ ແຮງງານເຮັດວຽກອິດສະລະ) ໃນໄລຍະເດືອນເມສາ ເຖິງເດືອນມິຖຸນາ ເປັນຈຳນວນເງິນ 500 ບາດຕໍ່ເດືອນ. ມີແຮງງານຜູ້ໄດ້ຮັບອຸດໜູນນີ້ ຈຳນວນ 3 ລ້ານຄົນ ລວມມູນຄ່າທັງໝົດ 45 ລ້ານບາດ[43].
- **ປະເທດມາເລເຊຍ** ປະກາດຂະຫຍາຍອຸດໜູນລາຍໄດ້ໃຫ້ຄົວເຮືອນທີ່ບອບບາງ ໂດຍຈ່າຍຜ່ານລະບົບອີເລັກໂທຣນິກ[44].
- **ເຂດພິເສດປົກຄອງຕົນເອງຮົງກົງ** ສປ ຈີນ ໃຫ້ຊຸດອຸດໜູນສະຫວັດດີການ ປະກອບດ້ວຍອຸດໜູນລາຍໄດ້ 1 ເດືອນເພີ່ມເຕີມຂອງອຸດໜູນເບ້ຍຜູ້ສູງອາຍຸ, ອຸດໜູນທີ່ຢູ່ອາໃສ, ອຸດໜູນເສຍອົງຄະ ຊຶ່ງເປັນລະບົບທີ່ບໍ່ຕ້ອງຜ່ານການທົດສອບ. ຈຳນວນເງິນອຸດໜູນຜູ້ສູງອາຍຸ ຈ່າຍຕໍ່ເດືອນແມ່ນປະມານ HK$1,385 (US$ 178.57).[45]
- **ປະເທດສິງກະໂປ** ໃຫ້ອຸດໜູນລາຍໄດ້ພື້ນຖານເທື່ອດຽວ ໃນລະບົບການອຸດໜູນເພື່ອສະໜັບສະໜູນ ແລະ ປົ່ນປົວຈຳນວນ SG$1.6 ຕື້, ປະຊາຊົນສິງກະໂປທຸກຄົນ ທີ່ມີອາຍຸ 21 ປີຂຶ້ນໄປຈະໄດ້ຮັບອຸດໜູນລາຍໄດ້ຈ່າຍຄັ້ງດຽວຈຳນວນ SG$300 (US$205.38), SG$200 (US$136.9) ຫຼື SG$100 (US$61.5), ຂຶ້ນກັບລາຍຮັບຂອງແຕ່ລະຄົນ. ນອກຈາກນີ້ ລັດຖະບານຍັງຈ່າຍອຸດໜູນໃຫ້ກັບຄອບຄົວທີ່ມີເດັກນ້ອຍ ແລະ ພໍ່ແມ່ຜູ້ສູງອາຍຸ ແລະ ໃຫ້ບັດເງິນສົດກັບຄົວເຮືອນມີ່ມີລາຍໄດ້ຕໍ່າເພື່ອໃຊ້ຈ່າຍໃນຕະຫຼາດ ຈຳນວນ SG$100 (US$61.5)[46].

### ລະບົບອຸດໜູນປະກັນສັງຄົມ

- **ປະເທດຍີ່ປຸ່ນ** ຂະຫຍາຍການຈ່າຍອຸດໜູນປ່ວຍການໃຫ້ກັບຜູ້ທີ່ຕ້ອງໄດ້ກັກຕົວປ່ຽວ ຫຼື ຜູ້ທີ່ໄດ້ຮັບການຢັ້ງຢືນວ່າເປັນຜູ້ຕິດເຊື້ອ ແລະ ໄດ້ຍົກເວັ້ນການສະແດງໃບຢັ້ງຢືນການກວດພົບເຊື້ອ[47].

---

[41] Most of the measures listed here apply to citizens and in some cases, foreigners with a work permit. This leaves the majority of migrant workers outside the scope of social protection coverage.

[42] www-narendramodi-in.cdn.ampproject.org/c/s/www.narendramodi.in/amp/finance-minister-announces-rs-1-70-lakh-crore-relief-package-under-pradhan-mantri-garib-kalyan-yojana-for-the-poor-to-help-them-fight-the-battle-against-corona-virus.

[43] ILO. 2020. 'Social Protection Responses to the COVID-19 Crisis: Country Responses in Asia and the Pacific'. Bangkok and Geneva: www.ilo.org/asia/publications/issue-briefs/WCMS_739587/lang--en/index.htm.

[44] ILO. 2020. 'Social Protection Responses to the COVID-19 Crisis: Country Responses in Asia and the Pacific'. Bangkok and Geneva: www.ilo.org/asia/publications/issue-briefs/WCMS_739587/lang--en/index.htm.

[45] Gentilini, Ugo, Mohamed Almenfi, and Ian Orton. 2020. 'Social Protection and Jobs Responses to COVID-19: A Real-Time Review of Country Measures (Updated 27 March)'. www.ugogentilini.net/wp-content/uploads/2020/03/Social-protection-responses-to-COVID19_March27.pdf.

[46] Channels News Asia. 'Budget 2020: S$4 Billion Support Package for Workers, Firms amid COVID-19 Outbreak'. www.channelnewsasia.com/news/singapore/budget-2020-s-4-billion-support-package-for-workers-firms-amid-12446082?cid=h3_referral_inarticlelinks_24082018_cna.

[47] ISSA. 2020. 'COVID-19 Crisis: A Renewed Attention to Sickness Benefits', 2020. https://ww1.issa.int/news/covid-19-crisis-renewed-attention-sickness-benefits.

- **ກະຊວງແຮງງານຂອງປະເທດສິງກະໂປ** ຈ່າຍອຸດໜູນເປັນເງິນ SGD 100 ໃຫ້ກັບທຸລະກິດ ແລະ ແຮງງານອິດສະລະທີ່ຖືກກະທົບຈາກການພັກວຽກ ແລະ ຕ້ອງໄດ້ຢູ່ບ້ານເນື່ອງການການແຜ່ລະບາດພະຍາດ COVID-19[48].

- **ປະເທດ ສ ເກົາຫລີ** ໄດ້ອຳນວຍຄວາມສະດວກໃຫ້ປະຊາຊົນ ເຂົ້າເຖິງລະບົບການຈ່າຍອຸດໜູນລາຍໄດ້ ແລະ ເພີ່ມການຈ່າຍທົດແທນລາຍໄດ້ສຳລັບບໍລິສັດ ຖ້າຫາກບໍລິສັດຍັງຮັກສາພະນັກງານໄວ້ ໃນໄລຍະພັກວຽກແຕ່ໄດ້ຮັບເງິນເດືນເປັນຈຳນວນເງິນ 50 ຫາ 66 ເປີເຊັນຂອງລາຍໄດ້ສຳລັບບໍລິສັດໃຫຍ່ ແລະ ຈຳນວນ 66 ຫາ 75 ເປີເຊັນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ[49].

- **ຫ້ອງການປະກັນສັງຄົມຂອງປະເທດໄທ** ຈະໃຫ້ອຸດໜູນລາຍໄດ້ສຳລັບປະຊາຊົນຜູ້ທີ່ຕ້ອງໄດ້ພັກວຽກບໍ່ໄດ້ຮັບເງິນເດືອນໃນໄລຍະບໍລິສັດປິດກິດຈະການຊົ່ວຄາວເພື່ອປະຕິບັດຕາມຄຳສັ່ງແນະນຳຂອງລັດຖະບານໃນການປ້ອງກັນການແຜ່ລະບາດຂອງໄວຣັດ.

- ສຳລັບປີ 2020 ແລະ 2021, ຫ້ອງການປະກັນສັງຄົມຂອງປະເທດໄທ ອອກນິຕິກຳເພີ່ມອຸດໜູນຫວ່າງງານ ແລະ ໄລຍະຫວ່າງງານຮອດ 50 ເປີເຊັນ ສຳລັບ 180 ວັນ ແລະ 70 ເປີເຊັນ ສຳລັບ 200 ວັນ ໃນກໍລະນີຖືກອອກຈາກວຽກ. ການຢຸດວຽກເນື່ອງຈາກການໂຈະວຽກໂດຍສະໝັກໃຈ ຫຼື ສິ້ນສຸດສັນຍາ, ອຸດໜູນຈະເພີ່ມຂຶ້ນຈາກ 30 ເປີເຊັນ ຫາ 45 ເປີເຊັນພາຍໃນກຳນົດ 90 ວັນ.

**ລະບົບປະກັນສຸຂະພາບ**

- **ປະເທດໄທ** ຂະຫຍາຍການປົກປ້ອງການໃຊ້ຈ່າຍເພື່ອການປິ່ນປົວສຸຂະພາບໃຫ້ກັບປະຊາຊົນ ແລະ ແຮງງານຕ່າງປະເທດທີ່ມີໃບອະນຸຍາດເຮັດວຽກ ໂດຍໃຫ້ຜູ້ຕິດເຊື້ອໄວຣັດສາມາດເຂົ້າເຖິງການປິ່ນປົວສຸກເສີນສຳລັບທຸກຄົນ. ໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ຜູ້ຕິດເຊື້ອ COVID-19 ສາມາດໄດ້ຮັບການປິ່ນປົວບໍ່ເສຍຄ່າ ໃນໂຮງໝໍລັດ ແລະ ເອກກະຊົນທີ່ຢູ່ໃກ້ຄຽງ[50].

- **ໃນປະເທດສິງກະໂປ,** ຖ້າຜູ້ຕິດເຊື້ອໄວຣັດເຂົ້າປິ່ນປົວໃນໂຮງໝໍລັດ ແລະ ໂຮງໝໍເອກກະຊົນ, ລັດຖະບານຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ເພື່ອໃຫ້ຜູ້ທີ່ສົງໃສຕິດເຊື້ອ ສາມາດໄດ້ຮັບການປິ່ນປົວ[51].

- **ໃນປະເທດອິດສຕາລີ, ສປ ຈີນ, ຍີ່ປຸ່ນ, ສ ເກົາຫລີ, ມາເລເຊຍ, ນິວຊີແລນ, ຟີລິບປິນ, ສິງກະໂປ ແລະ ປະເທດໄທ** ໄດ້ຈັດສັນງົບປະມານພາຍໃນເພີ່ມເຕີມເຂົ້າໃນລະບົບສາທາລະນະສຸກໂດຍຜ່ານມາດຕະການປ້ອງການພະຍາດ COVID-19[52].

- **ປະກັນສຸຂະພາບຂອງປະເທດຟີລິບປິນ** ອະນຸມັດງົບປະມານລ່ວງໜ້າຈຳນວນ 30 ຕື້ເປໂຊ ໃຫ້ກັບໂຮງໝໍທີ່ໄດ້ຮັບອະນຸຍາດປິ່ນປົວຜູ້ຕິດເຊື້ອໄວຣັດ ເປັນລະບົບທີ່ນຳໃຊ້ກົນໄກ ການຈ່າຍແທນຄືນ ໃນລະຫວ່າງການຈັດຕັ້ງປະຕິບັດເພື່ອ

---

[48] www.mom.gov.sg/covid-19/loasp.

[49] OECD. 2020. 'Supporting People and Companies to Deal with the Covid-19 Virus: Options for an Immediate Employment and Social-Policy Response'. https://oecd.dam-broadcast.com/pm_7379_119_119686-962r78x4do.pdf.

[50] The Thaiger. 2020. 'New Covid-19 Specialist Hospital to Open as Thai Government Steps up Response'. https://thethaiger.com/coronavirus/new-covid-19-specialist-hospital-to-open-as-thai-government-steps-up-response.

[51] Min, Ang Hwee. 2020. 'COVID-19 Outbreak: What You Need to Know about the Public Health Preparedness Clinics', 2020. www.channelnewsasia.com/news/singapore/covid-19-phpc-public-health-clinic-need-to-know-subsidies-where-12441664.

[52] ILO. 2020. 'Social Protection Responses to the COVID-19 Crisis: Country Responses in Asia and the Pacific'. Bangkok and Geneva: www.ilo.org/asia/publications/issue-briefs/WCMS_739587/lang--en/index.htm.

ໃຫ້ໂຮງໝໍມີງົບປະມານ ໃນການຮັບມືທີ່ດີຕໍ່ກັບຄວາມຕ້ອງການເພີ່ມຂຶ້ນ. ໃນວັນທີ 19 ກຸມພາ 2020, ຊຸດປົ້ນປົວສຸຂະພາບທີ່ປະກອບດ້ວຍການກວດຫາເຊື້ອໄວຣັດ, ການສົ່ງຕໍ່ ແລະ ການແຍກປ່ຽວ[53].

[53] PhilHealth. 2020. 'OFFICIAL STATEMENT COVERAGE ON TEST FOR COVID-19'. Manila: PhilHealth. https://www.philhealth.gov.ph/news/2020/covid19_stmnt.php.